




ท่ามปะเทด ๆ ๑ๆ๒ๆ๓

โดย: ลุๆ๒ๆ๒่า









ปะหวัดสาด • วัดทะนะทำ • พูมมีปะเทด • สาสะหนา • นิทาน





ປຶ້ມຫົວນີ້ສາມາດພິມອອກໄດ້ ກໍ່ຍ້ອນການສະໜັບສະໜູນຂອງ ມະນໍ ເປົາ (ອາເມຣິກາ) ແລະ ກອງທຶນວິເລີ ດາວເຄາະ (ອົດສະຕຣາລີ). ຂໍຂອບໃຈຫຼາຍໆ!

This book was made possible through the support of Manoj Paul (USA) and Planet Wheeler (Australia). Thank you!



ພວກເຮົາມີປຶ້ມຫຼາຍຫົວພ້ອມທີ່ຈະພິມອອກສູ່ສັງຄົມລາວ ແຕ່ພວກເຮົາພັດບໍ່ມີຜູ້ອຸປະຖຳພຽງພໍ. ຂໍໃຫ້ທ່ານຊ່ວຍອຸປະຖຳຈະໄດ້ບໍ?

We have other books ready to print, as soon as they have a sponsor. Can you help?

www.BigBrotherMouse.com




ກ່ຽວກັບ ອາຊຽນ



ໂດຍ: ລຸງຊາຊ່າ

ປີ້ນດີ... ມີສາລະ... ຄວນມີໄວ້ສຶກສາ... ຄົ້ນຄວ້າ



ມາຮຽນຮູ້ກ່ຽວກັບສະຖິຕິ

ແຕ່ລະປະເທດ ພວກເຮົາມີແຜນທີ່ ແລະ ຂໍ້ມູນກ່ຽວກັບປະເທດນັ້ນໆ. ຂໍ້ມູນສ່ວນຫຼາຍແມ່ນເຂົ້າໃຈຢ່າງງ່າຍດາຍ ແຕ່ບາງຂໍ້ມູນອາດຕ້ອງການຄຳອະທິບາຍຕື່ມອີກ:

ຄວາມໜາແໜ້ນ: ນີ້ແມ່ນຕົວເລກຄ່າສະເລ່ຍຂອງທົ່ວປະເທດ, ຕົວເມືອງມີຄົນຫຼາຍກວ່າຕໍ່ໜຶ່ງກິໂລແມັດມົນທົນ ຂອບເຂດທີ່ງາມີໜ້ອຍກວ່າ ແລະ ພູເຂົາມີໜ້ອຍຫຼາຍ. ພວກເຮົາໄດ້ຕົວເລກນີ້ມາໂດຍການຫານແບບງ່າຍໆຄື ເນື້ອທີ່ ຫານໃຫ້ ປະຊາກອນ.

ອາຍຸປານກາງ: ເຄິ່ງໜຶ່ງຂອງປະຊາກອນໃນປະເທດແມ່ນໜຸ່ມກວ່າອາຍຸນີ້ ແລະ ອີກເຄິ່ງໜຶ່ງແມ່ນແກ່ກວ່າອາຍຸນີ້.

ເສດຖະກິດ: ເມື່ອຮັບຮູ້ສິນຄ້າທີ່ສຳຄັນທີ່ສຸດຂອງປະເທດ ແລະ ອາຊີບໃດທີ່ຄົນສ່ວນຫຼາຍເຮັດ ຈະເຮັດໃຫ້ພວກເຮົາຮູ້ກ່ຽວກັບປະເທດນັ້ນຍິ່ງຂຶ້ນ.

ລາຍໄດ້ຕໍ່ຄົນ: ເອົາລາຍໄດ້ທັ້ງໝົດຂອງທຸກຄົນແລ້ວຫານໃຫ້ປະຊາກອນ. ຈຳນວນອອກມາ ຄິດເປັນເງິນໂດລາ ເພື່ອງ່າຍໃນການສົມທຽບກັບສະກຸນເງິນອື່ນຂອງປະເທດອື່ນ.

ລາຍໄດ້ປຽບທຽບຕໍ່ຄົນ: ແຕ່ວ່າການສະແດງຄ່າສະເລ່ຍຂອງລາຍໄດ້ແບບຂໍ້ເທິງກໍ່ສາມາດຜິດພາດໄດ້ ເພາະວ່າລາຄາສິນຄ້າແມ່ນແຕກຕ່າງກັນ. ຍົກຕົວຢ່າງ: ໃນປະເທດລາວລາຄາເສື້ອໃໝ່ຜືນໜຶ່ງແມ່ນຖືກກວ່າຢູ່ໃນປະເທດສິງກະໂປຫຼາຍ. ດັ່ງນັ້ນ ເພື່ອເປັນການປຽບທຽບລາຍໄດ້, ນັກເສດຖະສາດ ນຳໃຊ້ຕົວເລກອື່ນ ເຊິ່ງພວກເຂົາປຽບທຽບກັບກຳລັງການຊື້ຂອງລາຍໄດ້ນັ້ນ. ຕົວຢ່າງ: ຄົນໃນກຳປູເຈຍຜູ້ໜຶ່ງສາມາດຫາເງິນໄດ້ພຽງແຕ່ 650 ໂດລາ ແຕ່ພວກເຂົາສາມາດຊື້ເຄື່ອງໄດ້ຫຼາຍຢ່າງໃນກຳປູເຈຍ ເທົ່າກັບຄົນອາເມຣິກາຊື້ເປັນເງິນ 2,000 ໂດລາ.

ລະດັບລາຍໄດ້ປຽບທຽບ: ໃນທີ່ນີ້ ພວກເຮົາຈະເຫັນລຳດັບລາຍໄດ້ປຽບທຽບຂອງປະເທດ ເຊິ່ງເພີ່ນເອົາລາຍໄດ້ປຽບທຽບ ສົມທຽບກັນ ກັບປະເທດອື່ນທົ່ວໂລກ. ຕົວເລກນ້ອຍກວ່າ (ລຳດັບນ້ອຍກວ່າ) ແມ່ນປະເທດທີ່ຮັ່ງມີກວ່າ.

ກຳປູເຈຍ

ເຂົ້າຮ່ວມອາຊຽນ: 30 ເມສາ 1999
ນະຄອນຫຼວງ: ພະນົມເປັນ
ປະຊາກອນ: 15 ລ້ານ ຄົນ
ເນື້ອທີ່: 181,035 ກມ^2
ຄວາມໜາແໜ້ນ: 83 ຄົນ/ກມ^2
ອາຍຸປານກາງ: 22.9 ປີ
ສາສະໜາ: ສາສະໜາພຸດ
ພາສາ: ຂະເໝນ
ເສດຖະກິດ: ຄົນສ່ວນຫຼາຍເປັນຊາວນາ ແຕ່ຍັງມີຫຼາຍຄົນເຮັດວຽກຢູ່ໃນບໍລິສັດຕັດຫຍິບ.
ລາຍໄດ້ຕໍ່ຄົນ: $650 (US)
ລາຍໄດ້ປຽບທຽບຕໍ່ຄົນ: $2,000 (US)
ລະດັບລາຍໄດ້ປຽບທຽບ: 188
ສຳປະສິດຈີນີ: 43

ສຳປະສິດຈີນີ (Gini coefficient): ລາຍໄດ້ຂອງປະເທດບໍ່ໄດ້ບົ່ງບອກເຖິງຄົນສ່ວນຫຼາຍດຳລົງຊີວິດແນວໃດ. ບາງປະເທດມີຄວາມບໍ່ເທົ່າທຽມກັນຫຼາຍ: ໝາຍຄວາມວ່າຄົນສ່ວນຫຼາຍແມ່ນທຸກຍາກ ມີພຽງຄົນສ່ວນໜ້ອຍເທົ່ານັ້ນທີ່ຮັ່ງມີ. ແຕ່ກໍ່ມີຫຼາຍປະເທດທີ່ມີຄວາມສະເໝີພາບກັນ. ຕົວເລກນີ້ສະແດງໃຫ້ເຫັນເຖິງລະດັບຄວາມສະເໝີພາບກັນ. ຕົວເລກນ້ອຍໝາຍຄວາມວ່າ ມີຄວາມສະເໝີພາບຫຼາຍກວ່າ. ປະເທດແດນມາກ ແລະ ຊູແອດ ແມ່ນສອງປະເທດທີ່ມີຄວາມສະເໝີພາບກັນທີ່ສຸດ, ພວກເຂົາໄດ້ປະມານ 24 ຄະແນນ. ສ່ວນປະເທດທີ່ບໍ່ສະເໝີພາບກັນທີ່ສຸດແມ່ນ ນາມີບີ ໃນອາຟຣິກາ ເຊິ່ງໄດ້ປະມານ 70 ຄະແນນ. ປະເທດລາວມີຄວາມສະເໝີພາບກັນຫຼາຍກວ່າປະເທດອື່ນໆ. ມັນຍາກທີ່ຈະຄິດໄລ່ຕົວເລກນີ້ໄດ້ ແລະ ບາງປະເທດກໍ່ຍັງບໍ່ຮູ້ເລີຍ.

ສາລະບານ



ຄຳນຳ 4



ຟີລິບປິນ 10

ປະເທດອາຊຽນ ຄືກັນກັບພາກຕາເວັນຕົກທີ່ສຸດ



ມາເລເຊຍ 18

ປະເທດຜັດທະນາແລ້ວ ເຊິ່ງມີຄວາມສວຍງາມຍິ່ງໃຫຍ່ທາງທຳມະຊາດ



ໄທ 28

ປະເທດໜຶ່ງເທົ່ານັ້ນໃນກຸ່ມອາຊຽນ ທີ່ບໍ່ໄດ້ຕົກເປັນຫົວເມືອງຂຶ້ນຂອງກຳລັງຕາເວັນຕົກ



ອິນໂດເນເຊຍ 36

ປະເທດໃຫຍ່ທີ່ສຸດໃນກຸ່ມອາຊຽນ ແລະ ໃຫຍ່ເປັນອັນດັບທີ 4 ຂອງໂລກ



ສິງກະໂປ 46

ປະເທດນ້ອຍ ເຊິ່ງໃຊ້ເວລາພຽງ 50 ປີເທົ່ານັ້ນໃນການກາຍມາເປັນ ນັ້ງກອນແຫ່ງເອເຊຍ



ບຣູໄນ 54

ອານາຈັກນ້ອຍ ແຕ່ອຸດົມສົມບູນໄປດ້ວຍແຫ່ງຊັບພະຍາກອນທຳມະຊາດ



ຫວຽດນາມ 60

ປະເທດເພື່ອນມິດຂອງລາວມາແຕ່ດຶກດຳບຳ



ລາວ 70

ປະເທດທີ່ເຕີບໂຕໄວ ພາຍຫຼັງຕົກເປັນຫົວເມືອງຂຶ້ນເປັນສະຕະວັດ



ມຽນມ້າ 80


ປະເທດໃຫຍ່ອັນດັບທີ 2 ຂອງກຸ່ມອາຊຽນ ໂດຍເນື້ອທີ່ດິນ ແລະ ບ້ານແຫ່ງວັດວາທີ່ເກົ່າແກ່



ກຳປູເຈຍ 88

ສະມາຊິກໃໝ່ທີ່ສຸດຂອງກຸ່ມອາຊຽນ ເຊິ່ງຍັງຟື້ນຟູຈາກສົງຄາມທີ່ຮຸນແຮງ

ຄຳນຳ



ຝຣັ່ງຕ້ອງການຄວບຄຸມແມ່ນ້ຳ
ຂອງ ແລະ ໃຊ້ເປັນເສັ້ນທາງການ
ຄ້າກັບປະເທດຈີນ. ລັດຖະບານ
ຝຣັ່ງໄດ້ບັງຄັບໃຫ້ຄົນລາວ, ກຳປູ
ເຈຍ ແລະ ຫວຽດນາມ ຊ່ວຍ
ພວກເຂົາຂົນສົນຄ້າຕ່າງໆໄປຍັງ
ແມ່ນ້ຳ. ແຕ່ແມ່ນ້ຳຂອງມີແກ້ງ
ຫຼາຍເກີນໄປສຳລັບການຂົນສົ່ງ
ສິນຄ້າ.

ຫົວເມືອງຂຶ້ນຂອງເອີຣົບ

ຜ່ານເກືອບຕະຫຼອດໄລຍະປະຫວັດສາດຂອງໂລກ ເອີຣົບ ໄດ້ມີການພັດທະນາໜ້ອຍກ່ວາເອເຊຍ. ໃນສະຕະວັດທີ 15* ເອີຣົບ ໄດ້ມີການພັດທະນາຫຼາຍກ່ວາເອເຊຍ. ການພິມແບບໃໝ່ໄດ້ເພີ່ມທະວີການເຜີຍແຜ່ຄວາມຮູ້ໃນເອີຣົບ. ເທັກໂນໂລຢີໃໝ່ໄດ້ເຮັດໃຫ້ຄົນເອີຣົບມີອາວຸດທີ່ຮ້າຍແຮງຂຶ້ນ ເຮັດໃຫ້ກອງທັບບົກ ແລະ ກອງທັບເຮືອເອີຣົບ ເຂັ້ມແຂງທີ່ສຸດໃນໂລກ.

ຊາວຄ້າຂາຍຄົນເອີຣົບຕ້ອງການຄວາມຮັ່ງມີຫຼາຍຂຶ້ນ ແລະ ວິທີທາງທີ່ຈະໄດ້ມາໄວທີ່ສຸດ ແມ່ນການເອົາສິ່ງຕ່າງໆຈາກປະເທດອື່ນໆມາເປັນຂອງຕົນ. ພວກເຂົາຈັບເອົາຄົນຜິວດຳມາຈາກອາຟຣິກາ ແລະເອົາໄປຂາຍເປັນຄົນເຮັດວຽກແບບຂ້າທາດໃນອາເມຣິກາ ຫຼື ເອີຣົບ. ປະເທດທີ່ເປັນມະຫາອຳນາດໃນເອີຣົບແຂ່ງຂັນກັນຍຶດເອົາປະເທດອື່ນທີ່ພວກເຂົາເອີ້ນວ່າ "ຫົວເມືອງຂຶ້ນ", ໃນເອເຊຍ, ອາຟຣິກາ ແລະ ອາເມຣິກາໃຕ້.

ຝຣັ່ງຍຶດລາວ, ກຳປູເຈຍ ແລະ ຫວຽດນາມ. ອັງກິດໄດ້ຍຶດເອົາສ່ວນຫຼາຍຂອງອາເມຣິກາເໜືອ, ອິດສະຕຣາລີ, ອິນເດຍ ລວມທັງ ມຽນມ້າ ແລະພາກສ່ວນອື່ນໆໃນເອເຊຍຕາເວັນອອກສ່ຽງໃຕ້. ໂຮນລັງ ຍຶດອິນໂດເນເຊຍ. ແອັດສະປາຍ ຍຶດເອົາເກືອບທັງໝົດຂອງອາເມຣິກາໃຕ້. ປອກຕຸຍການ ຍຶດ ອາເມຣິກາໃຕ້ຈຳນວນໜຶ່ງ ແລະ ເອເຊຍຕາເວັນອອກສ່ຽງໃຕ້ຈຳນວນໜຶ່ງ.

ບັນດາປະເທດໃນເອີຣົບເກືອບທັງໝົດຮັກສາຫົວເມືອງຂຶ້ນຂອງພວກເຂົາໄວ້ເປັນເວລາ 1 ຫຼື 2 ສະຕະວັດ. ບັນດາເມືອງຂຶ້ນສະໜອງວັດຖຸດິບ

ການປ່ຽນແປງຂອງຜູ້ປົກຄອງ

ໃນສະຕະວັດທີ 19* ບັນດາປະເທດມະຫາອຳນາດແຫ່ງເອີຣົບ ແລະ ອາເມຣິກາ ໄດ້ເຂົ້າຢຶດຄອງປະເທດຫົວເມືອງຂຶ້ນທັ່ງໝາຍໃນເອເຊຍ. ພວກເຂົາເກັບພາສີຈາກຫົວເມືອງຂຶ້ນເຫຼົ່ານີ້ ພ້ອມທັງຂົນເອົາແຫ່ງຊັບພະຍາກອນທາງທຳມະຊາດໄປພ້ອມເຊັ່ນ: ເຫຼັກ ແລະ ນ້ຳມັນ.

ໃນຕົ້ນສະຕະວັດທີ 20 ປະເທດຍີ່ປຸ່ນໄດ້ພະຍາຍາມເຮັດແບບດຽວກັນກັບທີ່ບັນດາມະຫາອຳນາດແຫ່ງຕາເວັນຕົກໄດ້ເຮັດ. ຍີ່ປຸ່ນຍັງໄດ້ບຸກລຸກບາງສ່ວນຂອງປະເທດຈີນ ເພື່ອຢຶດເອົາເຫຼັກກັບຖ່ານຫີນ. ຫຼັງຈາກນັ້ນ ຍີ່ປຸ່ນ ກໍ່ໄດ້ເຂົ້າຢຶດເອົາຂົງເຂດອື່ນໆຂອງເອເຊຍ. ໃນຮູບນີ້ ທະຫານຍີ່ປຸ່ນກຳລັງເດີນທັບຜ່ານສິງກະໂປ ຫຼັງຈາກພວກເຂົາຢຶດເອົາຈາກອັງກິດໃນປີ 1942.



* ສະຕະວັດທີ 1 ຄື ຄ.ສ. 1 ເຖິງ ຄ.ສ. 100; ສະຕະວັດທີ 2 ຄື ຄ.ສ. 101 ເຖິງ ຄ.ສ. 200; ສະນັ້ນ ສະຕະວັດທີ 19 ຄື ຄ.ສ. 1801 ເຖິງ ຄ.ສ. 1900.

ເຊັ່ນ: ຄຳ, ເຫຼັກ, ນ້ຳມັນ. ພວກເຂົາສະໜອງພືດຜົນ ເຊັ່ນ: ເຄື່ອງເທດ, ຊາ, ກາເຟ, ຢາງ ແລະ ຝ້າຍ. ບັນດາເມືອງຂຶ້ນຈ່າຍພາສີໃຫ້ປະເທດເອີຣົບ ແລະ ສະໜອງແຮງງານທີ່ລາຄາຕ່ຳ ແລະ ບາງຄັ້ງກໍ່ສະໜອງແຮງງານແບບທາດຮັບໃຊ້.

ຫຼັງຈາກສົງຄາມໂລກຄັ້ງທີ 1 ໃນປີ 1918 ຍີ່ປຸ່ນຕ້ອງການຂະຫຍາຍອານາເຂດ. ພວກເຂົາຕ້ອງການທີ່ດິນ, ຊັບພະຍາກອນທຳມະຊາດ, ໂດຍສະເພາະແມ່ນຖ່ານຫີນ ແລະ ເຫຼັກເຜີ່ມ. ຍີ່ປຸ່ນເລີ່ມຕົ້ນການຮຸກຮານ ແລະ ຢຶດ ຫຼາຍຫົວເມືອງຂຶ້ນຂອງເອີຣົບ; ໃນເອເຊຍຕາເວັນອອກສ່ຽງໃຕ້. ຮອດໄລຍະກາງສົງຄາມໂລກຄັ້ງທີ II ໃນ ປີ 1942 ຍີ່ປຸ່ນໄດ້ຄອບຄຸມເກືອບທັງໝົດຂອງເອເຊຍຕາເວັນອອກສ່ຽງໃຕ້.

ສົງຄາມໂລກຄັ້ງທີ II ເປັນເວລາທີ່ໂຫດຮ້າຍໃນເອີຣົບ ກໍ່ຄື ເອເຊຍ. ເຢຍລະມັນ ຮຸກຮານໂຮມລັງ, ແບນຊິກ, ຝຣັ່ງ ແລະ ໄດ້ເຮັດໃຫ້ປະເທດເຫຼົ່ານັ້ນກາຍເປັນຫົວເມືອງຂຶ້ນຂອງເຢຍລະມັນ. ອັງກິດຕໍ່ສູ້ເພື່ອຄວາມຢູ່



by oscark CC-BY-SA 3.0

ພາກຕາເວັນອອກສ່ຽງເໜືອຂອງປະເທດມາເລເຊຍ ອັນເປັນທີ່ຮູ້ຈັກກັນແມ່ນພູເຂົາ ຊາບາ. ປະເທດຟີລິບປິນກໍ່ໄດ້ອ້າງສິດເປັນເຈົ້າຂອງໃນເຂດພູເຂົານີ້ເຊັ່ນກັນ. ຂໍ້ຂັດແຍ່ງລະຫວ່າງສອງປະເທດນີ້ໄດ້ນຳໄປສູ່ຄວາມຂຸດໂຊມຂອງສະມາຄົມເອເຊຍຕາເວັນອອກສ່ຽງໃຕ້ (ASA). ຕໍ່ມາໄດ້ມີອົງການໃໝ່ຂຶ້ນມາແທນເອີ້ນວ່າ: ອາຊຽນ (ASEAN) ຫຼື ມີຊື່ເຕັມວ່າ ສະມາຄົມປະຊາຊາດເອເຊຍຕາເວັນອອກສ່ຽງໃຕ້.

ສະຫະພັນເອີຣົບ



ອິດສະຕຣາລີແມ່ນທະວີບໜຶ່ງ ແລະ ເປັນປະເທດດຽວ. ອາເມຣິກາ ເໜືອກໍ່ແມ່ນທະວີບໜຶ່ງ ແລະ ມີສາມປະເທດໃຫຍ່ໄດ້ແກ່ ການາດາ, ສະ ຫະລັດ ແລະ ເມັກຊິກ. ທະວີບເອີຣົບກັບເອເຊຍຕາເວັນອອກສ່ຽງໃຕ້ ແມ່ນຕ່າງກັນ. ແຕ່ລະຂົງເຂດແມ່ນປະກອບໄປດ້ວຍຫຼາຍປະເທດ.

ສົງຄາມໂລກຄັ້ງທີ II ແມ່ນເລີ່ມກໍ່ໂຕຂຶ້ນໃນທະວີບເອີຣົບ ເມື່ອ ປະເທດຕ່າງໆບໍ່ສາມາດແກ້ບັນຫາຂອງຕົນໄດ້ດ້ວຍສັນຕິວິທີ. ຫຼັງຈາກສົງຄາມສິ້ນສຸດລົງ, ບັນດາຜູ້ນຳໃນເອີຣົບໄດ້ຕົກລົງທີ່ຈະ ເຮັດວຽກຮ່ວມກັນ. ຫົກປະເທດໃນເອີຣົບນີ້ລວມມີຝຣັ່ງ, ເຢຍລະ ມັນ ແລະ ອັງກິດ, ໄດ້ຈັດຕັ້ງກຸ່ມເສດຖະກິດເອີຣົບຂຶ້ນ (EEC) ໃນປີ 1957. ຕໍ່ມາອີກບໍ່ດົນ, ປະເທດອື່ນໆກໍ່ເຂົ້າມາຮ່ວມນຳ.

ກຸ່ມເສດຖະກິດເອີຣົບ ໄດ້ເຮັດໃຫ້ການຄ້າລະຫວ່າງປະເທດໃນເອີຣົບມີ ຄວາມສະດວກສະບາຍຫຼາຍຂຶ້ນ. ນອກຈາກນີ້ ກຸ່ມເສດຖະກິດເອີຣົບ ຍັງ ລອດຂອງຕົນເອງ. ປະຊາຊົນໃນປະເທດເຫຼົ່ານີ້ຄຽດແຄ້ນວ່າ ເຢຍລະມັນ ຕ້ອງການຈະປົກຄອງພວກເຂົາ.

ປີ 1945 ຍີ່ປຸ່ນເສຍໄຊໃນສົງຄາມ. ບັນດາປະເທດເອີຣົບ ພະຍາຍາມ ເອົາຫົວເມືອງຂຶ້ນຂອງຕົນໃນເອເຊຍຄືນມາ. ພວກເຂົາບໍ່ຕ້ອງການໃຫ້ ເຢຍລະມັນ ປົກຄອງພວກເຂົາ; ແຕ່ພວກເຂົາຮູ້ສຶກວ່າມັນຈະເປັນການດີ ຖ້າໄດ້ປົກຄອງບັນດາປະເທດໃນເອເຊຍ ເຊິ່ງເປັນດິນແດນອີກເຄິ່ງໂລກທີ່ ຫ່າງອອກໄປ.

ແຕ່ພວກເຂົາເຮັດບໍ່ສຳເລັດ. ປະຊາຊົນໃນອະດີດຫົວເມືອງຂຶ້ນເຫຼົ່ານີ້ ຕ້ອງການເປັນອິດສະລະ. ຜູ້ຄົນໃນທົ່ວໂລກເລີ່ມຕົ້ນຕັ້ງຄຳຖາມວ່າ ເປັນ ຫຍັງປະເທດໜຶ່ງຈຶ່ງສາມາດປົກຄອງອີກປະເທດໜຶ່ງ. ອົງການສະຫະ ປະຊາຊາດ ເຊິ່ງເປັນອົງການໃໝ່ຂອງໂລກທີ່ຖືກກໍ່ຕັ້ງຂຶ້ນເມື່ອສົງຄາມ ໂລກຄັ້ງທີ II ສິ້ນສຸດລົງ ເພື່ອມາເຮັດວຽກຮັກສາສັນຕິພາບສະໜັບສະ

ໄດ້ອ້າງແນວທາງໃນການແກ້ໄຂບັນຫາໂດຍປາສະຈາກສົງຄາມ.

ໃນປີ 1993 ກຸ່ມເສດຖະກິດເອີຣົບ ໄດ້ກາຍເປັນສະຫະພັນເອີຣົບ (EU). ແຕ່ລະປະເທດຈະມີລັດຖະບານປົກຄອງເປັນຂອງຕົນເອງ, ແຕ່ຕ້ອງຈັດໃຫ້ມີສະພາຜູ້ແທນເອີຣົບໃນນັ້ນດ້ວຍ ໂດຍໃຫ້ຜ່ານກົດໝາຍຕ່າງໆທີ່ສະມາຊິກທັງໝົດຕ້ອງປະຕິບັດຕາມ. ປັດຈຸບັນ ສະຫະພັນເອີຣົບມີສະມາຊິກທັງໝົດ 27 ປະເທດ.

ອົງການຈັດຕັ້ງໃດກໍ່ຕາມ ຫາກກໍ່ຕັ້ງຂຶ້ນໂດຍມີຫຼາຍປະເທດ ທີ່ມີວັດທະນະທຳ, ເປົ້າໝາຍ ແລະ ຄວາມຕ້ອງການຕ່າງກັນ, ຍ່ອມຕ້ອງມີບັນຫາຫຍຸ້ງຍາກ. ແຕ່ໂດຍທົ່ວໄປແລ້ວ ກຸ່ມເສດຖະກິດເອີຣົບ ແລະ ອີຢູ (EU) ແມ່ນຖືວ່າປະສົບຄວາມສຳເລັດດີ. ສົງຄາມໂລກຄັ້ງທີ II ໄດ້ເລີ່ມຂຶ້ນໃນທະວີບເອີຣົບ ຫຼັງຈາກທີ່ສົງຄາມໂລກຄັ້ງທີ I ໄດ້ສິ້ນສຸດລົງພຽງແຕ່ 21 ປີເທົ່ານັ້ນ. ປະຈຸບັນ ນັບຕັ້ງແຕ່ມື້ສົງຄາມໂລກຄັ້ງທີ II ສິ້ນສຸດລົງ ກໍ່ນັບວ່າໄດ້ 65 ກວ່າປີແລ້ວ, ແຕ່ປະເທດຕ່າງໆໃນເອີຣົບກໍ່ຍັງມີການຈະເລີນເຕີບໂຕຂຶ້ນຢ່າງເຂັ້ມແຂງຮ່ວມກັນ.



ສິບເຈັດປະເທດໃນສະຫະພັນເອີຣົບ ນຳໃຊ້ສະກຸນເງິນແບບດຽວກັນ ເຊິ່ງເອີ້ນວ່າ: “ຢູໂຣ”. ພວກເຂົາເລີ່ມນຳໃຊ້ແຕ່ປີ 2002.

ໝູນຄວາມເປັນອິດສະລະພາບຂອງອະດີດເມືອງຂຶ້ນ. ຈາກປີ 1945-1970 ຫຼາຍກວ່າ 50 ປະເທດໃນອາຟຣິກາ ແລະ ເອເຊຍ ໄດ້ຮັບອິດສະລະພາບ. ປະເທດເຫຼົ່ານັ້ນ ລວມມີປະເທດໃນອາຊຽນສ່ວນຫຼາຍ.


ການກຳເນີດອາຊຽນ (ASEAN)



by Addicted04 CC-BY-SA 3.0

ບັນດາຜູ້ນຳໃນເອເຊຍຕາເວັນອອກສ່ຽງໃຕ້ໄດ້ຮູ້ບຶດຮຽນທີ່ສຳຄັນຈາກສົງຄາມໂລກຄັ້ງທີ II. ກ່ອນທີ່ຈະມີສົງຄາມນັ້ນ ບັນດາປະເທດນ້ອຍໆເຊັ່ນ ປະເທດໂປໂລຍ ໄດ້ເຊັນຂໍ້ຕົກລົງຮ່ວມກັບປະເທດທີ່ມີອຳນາດກວ່າຕົນເຊັ່ນ ປະເທດຝຣັ່ງ ແລະ ປະເທດອັງກິດ ເພື່ອໃຫ້ຊ່ວຍປົກປ້ອງເຊິ່ງກັນ ແລະ ກັນ. ແຕ່ເມື່ອຝ່າຊິດເຢຍລະມັນບຸກລຸກປະເທດ ໂປໂລຍ, ຝຣັ່ງ ແລະ ອັງກິດກັບບໍ່ໄດ້ເຮັດຫຍັງເພື່ອຊ່ວຍພັນທະມິດຂອງຕົນເລີຍ. ບັນດາປະເທດໃນແຖບເອ


ການກະທຳຕ່າງໆຂອງປະເທດໜຶ່ງ ສາມາດຊ່ວຍ ຫຼື ເຮັດໃຫ້ປະເທດອື່ນເດືອດຮ້ອນໄດ້ຄືກັນ. ປີ 2006 ປະເທດອິນໂດເນເຊຍ ໄດ້ມີເຫດອັກຄີໄພທາງການກະເສດ ຈີນບໍ່ສາມາດຄວບຄຸມໄດ້ ອັນເຮັດໃຫ້ເກີດມີກຸ່ມຄວັນໃຫຍ່ມະຫຶມາ. ບັນຫາສະພາບແວດລ້ອມແບບນີ້ ແມ່ນບໍ່ສາມາດແກ້ໄຂໄດ້ ພຽງແຕ່ປະເທດດຽວ; ມັນໄດ້ຮຽກຮ້ອງໃຫ້ມີການຮ່ວມມືກັນ ລະຫວ່າງປະເທດຕ່າງໆ.



ເຊຍຕາເວັນອອກສ່ຽງໃຕ້ຈຶ່ງຮັບຮູ້ທັນທີວ່າ ພວກຕົນບໍ່ສາມາດເພິ່ງອາໄສການປົກປ້ອງຈາກຄູ່ຮ່ວມພັນທະມິດໃຫຍ່ໆເຫຼົ່ານີ້ໄດ້. ພວກເຂົາຈະຕ້ອງເຮັດວຽກຮ່ວມກັນ ເພື່ອປົກປ້ອງສິດຜົນປະໂຫຍດຂອງຕົນ.

ກຸ່ມເສດຖະກິດເອີຣົບ (European Economic Community) ເຊິ່ງໄດ້ຮັບການແຕ່ງຕັ້ງຂຶ້ນໃນປີ 1957 ອັນເປັນແບບຢ່າງທີ່ດີໃຫ້ແກ່ບັນດາຜູ້ນຳອາຊຽນ. ໃນປີ 1961 ຟີລິບປິນ, ມາເລເຊຍ ແລະ ໄທ ໄດ້ຮ່ວມກັນຈັດຕັ້ງສະມາຄົມເອເຊຍຕາເວັນອອກສ່ຽງໃຕ້ (ASA). ແຕ່ຕໍ່ມາອີກບໍ່ດົນ ປະເທດມາເລເຊຍ ແລະ ຟີລິບປິນກັບມີຂໍ້ຂັດແຍ່ງກັນເລື່ອງສິດຄອບຄອງທາງເໜືອຊາບາ ເຊິ່ງຕັ້ງຢູ່ທາງພາກເໜືອຂອງເກາະບໍນີໂອ. ອັງກິດ ໄດ້ສົ່ງເຮືອຮົບໄປສະໜັບສະໜຸນມາເລເຊຍ. ຝ່າຍຟີລິບປິນກໍ່ໄດ້ຮັບການສະໜັບສະໜຸນຈາກອິນໂດເນເຊຍ. ສະມາຄົມເອເຊຍຕາເວັນອອກສ່ຽງໃຕ້ກໍ່ຍັງບໍ່ສາມາດແກ້ໄຂຂໍ້ຂັດແຍ່ງນີ້ໄດ້ ແລະ ຕໍ່ມາອີກບໍ່ດົນ ສະມາຄົມເອເຊຍຕາເວັນອອກສ່ຽງໃຕ້ ກໍ່ຖືກລົ້ມ.

ອິນໂດເນເຊຍ ເປັນປະເທດໃຫຍ່ທີ່ສຸດໃນຂົງເຂດນັ້ນ. ປະເທດອື່ນໆຮູ້ດີວ່າ ບໍ່ມີອົງການຈັດຕັ້ງໃດໆຈະໄດ້ຮັບຜົນດີ ຖ້າອິນໂດເນເຊຍ ບໍ່ໄດ້ເປັນສະມາຊິກໃນອົງການຈັດຕັ້ງນັ້ນ. ສະມາຊິກທັງສາມຂອງສະມາຄົມເອເຊຍ





ຮູບຖ່າຍນີ້ ແມ່ນທະຫານຟີລິບປິນ ກຳລັງຝຶກເພື່ອການສູ້ຮົບ. ສີ່ປະເທດອາຊຽນ (ຟີລິບປິນ, ມາເລເຊຍ, ບຣູໄນ ແລະ ຫວຽດນາມ) ອ້ອມລ້ອມທະເລຈີນໃຕ້ ເຊິ່ງຕິດກັບຈີນ ແລະ ໄຕ້ຫວັນ. ພວກເຂົາທັງໝົດຕ່າງກໍ່ອ້າງສິດເປັນເຈົ້າຂອງໃນດິນແດນແຫ່ງນັ້ນ, ບາງຄັ້ງ ກໍ່ສູ້ຮົບກັນ. ອາຊຽນ ເປັນອົງການທີ່ສຳຄັນ ທີ່ຈະຊ່ວຍໃຫ້ລັດຖະບານເຫຼົ່ານັ້ນ ແກ້ໄຂບັນຫາໂດຍສັນຕິວິທີ ເພື່ອບໍ່ໃຫ້ມີການສົ່ງທະຫານໄປສູ້ຮົບກັນ ດັ່ງທະຫານໜຸ່ມຟີລິບປິນໃນຮູບນີ້.

ຕາເວັນອອກສ່ຽງໃຕ້ ຈົ່ງໄດ້ພົບກັບບັນດາຜູ້ນຳຈາກປະເທດອິນໂດເນເຊຍ ແລະ ສິງກະໂປ ເພື່ອໂອ້ລົມກັນ ແລະ ສ້າງອົງການຈັດຕັ້ງໃໝ່ຂຶ້ນ ໃນວັນທີ 8 ເດືອນ ສິງຫາ ປີ 1967 ໃນກອງປະຊຸມທີ່ບາງກອກປະເທດໄທ ເຊິ່ງເປັນຕົ້ນກຳເນີດຂອງ ອາຊຽນ.

ບັນດາຜູ້ນຳຈາກທັງຫ້າປະເທດໄດ້ຕົກລົງກັນວ່າ ອົງການຈັດຕັ້ງໃໝ່ນີ້ຈະບໍ່ມີຂໍ້ຜູກພັນກັນທາງການທະຫານ. ເປົ້າໝາຍຂອງພວກເຂົາມີຄື:

1. ເພື່ອປົກປ້ອງສັນຕິພາບ ແລະ ຄວາມໝັ້ນຄົງໃນຂົງເຂດ.

2. ເພື່ອສົ່ງເສີມການຈະເລີນເຕີບໂຕດ້ານເສດຖະກິດ ແລະ ສັງຄົມ.

3. ເພື່ອສະໜອງໂອກາດໃຫ້ແກ່ກຸ່ມປະເທດສະມາຊິກໃນການແກ້ໄຂບັນຫາຕ່າງໆຢ່າງສັນຕິ.

ໃນ 16 ປີທຳອິດ ອາຊຽນ ມີສະມາຊິກພຽງແຕ່ 5 ປະເທດ. ປະເທດບຣູໄນ ໄດ້ຮັບເອກະລາດໃນປີ 1984 ແລ້ວກໍ່ໄດ້ເຂົ້າເປັນສະມາຊິກທັນທີ. ອີກສິບເອັດປີຕໍ່ມາ, ຫວຽດນາມ ກໍ່ໄດ້ເຂົ້າເປັນສະມາຊິກ. ປະເທດລາວ ແລະ ມຽນມ້າ ໄດ້ເຂົ້າເປັນສະມາຊິກໃນປີ 1997 ແລະ ປະເທດກຳປູເຈຍ ແມ່ນປີ 1999. ປະເທດ ຕີມໍ ກໍ່ຢາກເຂົ້າເປັນສະມາຊິກນຳ ເຊິ່ງອາດຈະເປັນຕອນໃດໜຶ່ງໃນອະນາຄົດ.

ฟิลิบปิน

ເຂົ້າຮ່ວມອາຊຽນ: 8 ສິງຫາ 1967
ນະຄອນຫຼວງ: ມະນີລາ
ປະຊາກອນ: 97 ລ້ານ ຄົນ
ເນື້ອທີ່: 300,000 ກມ^2
ຄວາມໜາແໜ້ນ: 320 ຄົນ/ກມ^2
ອາຍຸປານກາງ: 22.9 ປີ
ສາສະໜາ: ເກືອບ 85% ເປັນຊາວຄິສຕຽນ. ມີຊາວມຸດສະລິມຈຳນວນໜຶ່ງ ຫຼື ຜູ້ມາຝຶກສາສະໜາ. ສ່ວນຊາວພຸດແມ່ນມີໜ້ອຍດຽວເທົ່ານັ້ນ.
ພາສາ: ພາສາທະການ້ອກ (ພາສາຟິລິບປິນ) ແລະ ອັງກິດ ເປັນທາງການ ເຊິ່ງມີ 8 ພາສາທ້ອງຖິ່ນສ່ວນໃຫຍ່ຂອງພາສາທາກະລ້ອກ.
ເສດຖະກິດ: ເສດຖະກິດຊຸດໂຊມລົງຊ່ວງລະບອບກິນສິນບິນຂອງອະດີດປະທານປະເທດ ມາໂຄສ, ແລ້ວມັນກໍ່ຟື້ນຟູຄືນມາຊ້າໆ. ປະຈຸບັນຫຼາຍຄົນໃນຟິລິບປິນຂຶ້ນກັບການສົ່ງເງິນຈາກພີ່ນ້ອງທີ່ຍ້າຍໄປຕ່າງປະເທດ ເພື່ອຊອກຫາວຽກເຮັດງານທຳ. ຖ້າມັນສາມາດກາຍມາເປັນຄວາມໝັ້ນຄົງທາງການເມືອງ ຟິລິບປິນກໍ່ອາດຈະກາຍມາເປັນໜຶ່ງໃນເອເຊຍທີ່ມີເສດຖະກິດເຂັ້ມແຂງທີ່ສຸດອີກຄັ້ງໄດ້.
ລາຍໄດ້ຕໍ່ຄົນ: $1,790 (US)
ລາຍໄດ້ປຽບທຽບຕໍ່ຄົນ: $3,500 (US)
ລະດັບລາຍໄດ້ປຽບທຽບ: 162
ສຳປະສິດຈີນີ: 45.8



ฟิลิบปิน




ດິນແດນທີ່ມີເກາະຫຼາຍ

ປະເທດຟີລິບປິນເປັນໝູ່ເກາະຫຼາຍກວ່າ 7,000 ເກາະ. ເກາະທີ່ໃຫຍ່ທີ່ສຸດຍາວປະມານ 800 ກມ. ເນ່ືງຈາກຝັ່ງທະເລເອເຊຍຕາເວັນອອກສ່ຽງໃຕ້ ແຕ່ເກາະນ້ອຍບາງຈຳນວນຢູ່ໃກ້ກັບມາເລເຊຍ ແລະ ອິນໂດເນເຊຍ. ປະມານ 2/3 ຂອງພື້ນທີ່ຟີລິບປິນ ແມ່ນຢູ່ນຳສອງເກາະນີ້ຄື: ເກາະລູຊອນ ທາງພາກເໜືອ ແລະ ມິນດາເນົາ ທາງພາກໃຕ້.

ຟີລິບປິນຕັ້ງຢູ່ໃນວົງແຫວນໄຟ ເຊ່ືງເປັນວົງລັດສະໝີທີ່ແຜ່ນດິນໄຫວ ແລະ ພູເຂົາໄຟລະເບີດເປັນເລ່ືອງປົກກະຕິ. ເກາະສ່ວນຫຼາຍກໍ່ຕົວຂ້ຶນຈາກເທ່ົາຖ່ານ ແລະ ຕົມຂອງພູເຂົາໄຟດິນນານມາແລ້ວ. ໃນອະດີດ ພວກມັນຖືກປົກຄຸມດ້ວຍປ່າຝົນ (ປ່າຕຶບ) ແຕ່ວ່າປ່າຫຼາຍແຫ່ງຖືກຕັດຍ້ອນຂາດການຄວບຄຸມການຕັດໄມ້ທ່ອນ. ແຜ່ນດິນໄຫວເປັນເລ່ືອງທົ່ວໄປ ແລະ ພູເຂົາໄຟຍັງຄົງລະເບີດຢູ່ຈຳນວນໜ່ຶງ.

ຮູບເທິງ: ໃນວັນທີ 27 ເດືອນ ເມສາ ປີ 1521, ກຸ່ມທະຫານຂອງປະເທດປອກຕຸຍການໄດ້ເຂ້ົາໂຈມຕີເກາະໜ່ຶງຂອງຟີລິບປິນ. ຜູ້ນຳເກາະຄື ລາປູລາປູ, ໄດ້ນຳພານັກຮົບຂອງຕົນອອກໄປຕ່ໍສູ້ຕ້ານກັບທະຫານປອກຕຸຍການ. ພວກເຂົາໄດ້ຂ້າຜູ້ນຳ ແລະ ທະຫານປອກຕຸຍການຈຳນວນຫຼາຍຕາຍ. ຮູບປັ້ນນ້ີຈ່ຶງຖືກຕັ້ງໄວ້ເພ່ືອເປັນກຽດແກ່ ລາປູລາປູ, ວິລະບຸລຸດຜູ້ທຳອິດແຫ່ງປະເທດຟີລິບປິນ, ເພ່ືອຕ່ໍຕ້ານລະບອບຈັກກະພັດນິຍົມແຫ່ງເອີຣົບ.

ປະຫວັດສາດ



ມີບາງຊົນເຜົ່າພື້ນເມືອງໃນຟີລິບປິນແມ່ນພວກລ່າຫົວມະນຸດ. ຮູບພາບນີ້ແຕ້ມຂຶ້ນໄດ້ປະມານ 200 ປີມາແລ້ວ.



Mark Navales CC-BY-2.0

ປະເພນີຂອງຊາວຕາເວັນຕົກໄດ້ເຂົ້າມາທັບຖົມປະເພນີພື້ນເມືອງຂອງຟີລິບປິນຫຼາຍ, ແຕ່ການນຸ່ງຖື ແລະ ການຟ້ອນພື້ນເມືອງຍັງຄົງມີໃຫ້ເຫັນໃນງານບຸນຕ່າງໆ.

ບາງເກາະໃນຟີລິບປິນໄດ້ມີຄົນມາອາໄສຢູ່ນັບເປັນເວລາຫຼາຍກວ່າ 50,000 ປີມາແລ້ວ. ໃນ ສະຕະວັດທີ 8 ຊາວຄ້າຂາຍຈີນມາຮອດ ແລະ ມີຫຼາຍຄົນໄດ້ອາໄສຢູ່ທີ່ນັ້ນ. ຜູ້ມາອາໄສກຸ່ມທຳອິດອີກແມ່ນມຸສລິມຈາກເອເຊຍຕາເວັນອອກສ່ຽງໃຕ້ ແລະຈາກບັນດາປະເທດໃນແຖບອາຣັບ. ໄລຍະນີ້ ຟີລິບປິນໄດ້ເຊື່ອຖືຫຼາຍສາສະໜາປະສົມປະສານກັນ ເຊັ່ນ: ເຊື່ອຖືວິນຍານ, ອິສລາມ ແລະ ພຸດທະສາສະໜາ.

ໃນສະຕະວັດທີ 16 ເຮືອຂອງ ແອັດສະປາຍມາຮອດ. ທະຫານແອັດສະປາຍໄດ້ຍຶດອຳນາດຄອບຄອງເກາະ ແລະເຮັດໃຫ້ຟີລິບປິນເປັນຫົວເມືອງຂຶ້ນຂອງພວກເຂົາ. ແອັດສະປາຍພະຍາຍາມເຮັດໃຫ້ຄົນທ້ອງຖິ່ນໃຊ້ພາສາ ແລະ ສາສະໜາຂອງພວກເຂົາ ຄື ສາສະໜາຄິສຕຽນ. ພະນັກງານລັດຂອງແອັດສະປາຍ ຍັງໃຫ້ຄົນທ້ອງຖິ່ນນຳໃຊ້ນາມສະກຸນແບບແອັດສະປາຍ. ປະຈຸບັນ ຄົນຟີລິບປິນເກືອບທັງໝົດຍັງໃຊ້ນາມສະກຸນແບບແອັດສະປາຍ ເຖິງແມ່ນວ່າ ບັນພະບຸລຸດຂອງພວກເຂົາທັງໝົດແມ່ນຄົນເອເຊຍ. ມີຫຼາຍຖະໜົນ, ຕຶ໋ອເມືອງ ແລະ ແຂວງ ທີ່ຍັງຄົງໃຊ້ຊື່ແບບແອັດສະປາຍ. ແມ່ນແຕ່ຊື່ປະເທດ ກໍ່ຍັງແມ່ນຊື່ແອັດສະປາຍ ຄື ຊື່ຂອງກະສັດ ຟີລິບ 2 ຂອງແອັດສະປາຍ.

ຫຼາຍຄັ້ງ ຄົນຟີລິບປິນກໍ່ການຈະລາຈົນ ແຕ່ກອງທັບແອັດສະປາຍກໍ່ຍັງເຂັ້ມແຂງເກີນໄປ. ໃນປີ 1898 ກອງທັບເຮືອ ສະຫະລັດອະເມຣິກາໄດ້ໃຫ້ການຊ່ວຍເຫຼືອຄົນຟີລິບປິນກໍ່ການກະບົດ ເພື່ອເອົາຊະນະແອັດສະປາຍ. ຟີລິບປິນປະກາດເອກະລາດໃນປີ 1898 ແຕ່ສະຫະລັດອາເມຣິກາມີແນວຄິດອື່ນອີກ: ສະຫະລັດອາເມຣິກາເອົາເງິນຈຳນວນ 20 ລ້ານ ໂດລາ ໃຫ້ແອັດສະປາຍ ແລະປະກາດວ່າ ພວກເຂົາໄດ້ຊື້ເອົາປະເທດຟີລິບປິນແລ້ວ. ລະຫວ່າງ 15 ປີຕໍ່ມາ ຄົນຟີລິບປິນເກືອບໜຶ່ງລ້ານຄົນລົ້ມຕາຍຂະນະທີ່ຕໍ່ສູ້ເພື່ອອິດສະລະພາບຂອງພວກເຂົາຕ້ານກັບສະຫະລັດອະເມຣິກາ. ພວກເຂົາພ່າຍແພ້ ແລະຈົນເຖິງ ປີ 1946 ຟີລິບປິນໄດ້ກາຍເປັນຫົວເມືອງຂຶ້ນຂອງສະຫະລັດອາເມຣິກາ.

ໂຈເສ ຣິຊານ: ວິລະບຸລຸດ ຟິລິບປິນ


ໂຈເສ ຣິຊານ ເກີດໃນຟິລິບປິນ. ເມື່ອເປັນໜຸ່ມ ລາວໄດ້ໄປປະເທດ ແອັດສະປາຍ ເພື່ອຮ່ຳຮຽນ. ເວລານັ້ນ ຟິລິບປິນເປັນຫົວເມືອງຂຶ້ນ ຂອງແອັດສະປາຍ ແລະບໍ່ດົນ ຣິຊານກໍ່ເຂົ້າໃຈວ່າປະຊາຊົນໃນປະເທດຂອງລາວກຳລັງຖືກປະຕິບັດ ຢ່າງບໍ່ເປັນທຳ ໂດຍຄົນແອັດສະປາຍ. ລາວທ້ວງຖາມລັດຖະບານ ແອັດສະປາຍ ເພື່ອໃຫ້ຄົນຟິລິບປິນ ມີສິດອອກສຽງຫຼາຍຂຶ້ນໃນລັດຖະບານຂອງພວກເຂົາ ແຕ່ ແອັດສະປາຍປະຕິເສດ. ໂຈເສ ກັບມາປະເທດຂອງລາວ ແລະສືບຕໍ່ພະຍາຍາມປະຕິຮູບລັດຖະບານຄືນໃໝ່.



ຜູ້ນຳແອັດສະປາຍເວົ້າຕິວະກ່ຽວກັບສິ່ງທີ່ລາວກຳລັງເຮັດ ແລ້ວພວກເຂົາກໍ່ຈັບລາວໃນຂໍ້ຫາກະບົດຂາຍຊາດ ແລະປະຫານລາວ ໃນປີ 1896 ເມື່ອລາວອາຍຸໄດ້ 35 ປີ.

ຣິຊານ ບໍ່ເຄີຍໂຄສະນາສົ່ງເສີມ ອິດສະລະພາບໃຫ້ແກ່ຟິລິບປິນ, ລາວພຽງເວົ້າວ່າ ຄົນຟິລິບປິນ ຄວນຈະໄດ້ຮັບສິດອອກສຽງຫຼາຍຂຶ້ນໃນລັດຖະບານຂອງພວກເຂົາ. ແຕ່ຫຼັງຈາກການຖືກປະຫານຊີວິດຂອງລາວ ຊາວຟິລິບປິນຫຼາຍຄົນ ໄດ້ຕໍ່ສູ້ໜັກຂຶ້ນເພື່ອອິດສະລະພາບຈາກແອັດສະປາຍ.

ສະຫະລັດອາເມຣິກາໄດ້ຈັດຕັ້ງໂຮງຮຽນບໍ່ເສຍຄ່າ ທີ່ຖືກໃຊ້ເພື່ອເຜີຍແຜ່ພາສາອັງກິດ ແລະ ແນວຄິດຂອງອາເມຣິກາ. ການສຶກສາທີ່ເພີ່ມຂຶ້ນໄດ້ຊ່ວຍເຫຼືອຄົນຟິລິບປິນ ແຕ່ພວກເຂົາກໍ່ໄດ້ສູນເສຍວັດທະນະທຳຟິລິບປິນໄປ. ຜົນກໍ່ຄື ປະຈຸບັນນີ້ ປະເທດຟິລິບປິນຖືວ່າ ເປັນປະເທດທີ່ມີວັດທະນະທຳຕາເວັນຕົກຫຼາຍທີ່ສຸດໃນບັນດາປະເທດເອເຊຍຕາເວັນອອກສ່ຽງໃຕ້. ຮູບເງົາ, ກິລາ ແລະດົນຕີແບບອາເມຣິກາເປັນທີ່ນິຍົມກັນຫຼາຍກວ່າຂອງທ້ອງຖິ່ນ. ເພາະອິດທິພົນຂອງແອັດສະປາຍ ແລະ ອາເມຣິກາ ຟິລິບປິນຈຶ່ງເປັນປະເທດດຽວໃນປະເທດອາຊຽນທີ່ຄົນສ່ວນຫຼາຍຖືສາສະໜາຄຣິສຕຽນ.



Marco Severo M. Palinar CC-BY-SA 3.0

ມະຫາວິທະຍາໄລ ຊັນໂຕ ໂທ ມາສ ໄດ້ຖືກສ້າງຕັ້ງຂຶ້ນຢູ່ປະເທດຟິລິບປິນ ໃນປີ 1611. ເຊິ່ງເປັນມະຫາວິທະຍາໄລທີ່ເກົ່າແກ່ທີ່ສຸດໃນເອເຊຍ.

ຄືກັນກັບຫຼາຍປະເທດຫົວເມືອງຂຶ້ນໃນເອເຊຍ ຄົນຟິລິບປິນໄດ້ຮັບອິດສະລະພາບໃນປີ 1946 ຫຼັງຈາກສົງຄາມໂລກຄັ້ງທີ II. ນະຄອນຫຼວງ ແລະ ປະເທດອື່ນຫຼາຍປະເທດ ເກືອບວ່າຖືກທຳລາຍໄປຍ້ອນສົງຄາມ. ໃນການຕອບແທນ ທີ່ໃຫ້ເປັນອິດສະລະພາບ. ສະຫະລັດ ຮຽກຮ້ອງ



ການລະເບີດທີ່ຮຸນແຮງ - ທະເລສາບທີ່ສວຍງາມ

ໃນປີ 1991 ມີພູເຂົາໄຟໜ່ວຍໜຶ່ງຊື່ວ່າ ປີນາຕຸໂບ (Mount Pinatubo) ໄດ້ລະເບີດຂຶ້ນໃນປະເທດຟີລິບປິນ. ມັນເປັນການລະເບີດຂອງພູເຂົາໄຟທີ່ໃຫຍ່ທີ່ສຸດໃນໂລກ ຫຼັງຈາກການລະເບີດຂອງພູເຂົາໄຟຢູ່ອາເມຣິກາ ໃນປີ 1912. ຫີນ ແລະ ຂີ້ດິນຈຳນວນຫຼາຍໄດ້ພຸ່ງຂຶ້ນເທິງອາກາດ ແລະ ຖ້າມັນຕົກລົງມາໃສ່ເນື້ອທີ່ຂອງແຂວງຫຼວງພະບາງ ມັນຈະເຮັດໃຫ້ແຂວງຫຼວງພະບາງສູງຂຶ້ນອີກໜຶ່ງແມັດ.

ເມື່ອກ້ອນຫີນ ແລະ ລາວາເຫຼົ່ານັ້ນໄຫຼຕົກລົງມາ, ນ້ຳໜັກຂອງພວກມັນໄດ້ເຮັດໃຫ້ເຮືອນຫຼາຍຫຼັງເສຍຫາຍ, ທັງໄດ້ຂ້າຜູ້ຄົນທີ່ຢູ່ໃນເຮືອນນັ້ນດ້ວຍ. ມີຜູ້ເສຍຊີວິດຫຼາຍກວ່າ 800 ຄົນ. ຂີ້ເທົ່າຈາກພູເຂົາໄຟໄດ້ກະຈາຍໄປໄກທີ່ສຸດຈົນຮອດປະເທດຫວຽດນາມ.

ການລະເບີດໄດ້ເຮັດໃຫ້ປາກພູເຂົາໄຟຂະຫຍາຍກວ້າງອອກຫຼາຍ. ປະຈຸບັນນີ້ ປາກພູເຂົາໄຟແມ່ນເຕັມໄປດ້ວຍນ້ຳ, ເຮັດໃຫ້ເປັນທະເລສາບທີ່ສວຍງາມອີກແຫ່ງໜຶ່ງ. ແຕ່ໃນວັນໜຶ່ງຂ້າງໜ້າ, ພູເຂົາໄຟໜ່ວຍນີ້ຈະຕ້ອງລະເບີດຂຶ້ນອີກ.

by ChrisTomnong CC-BY-SA 3.0



by bingbing CC-BY 2.0

ຂອງຫວານທີ່ນິຍົມໃນປະເທດຟີລິບປິນ ກໍ່ຄື ຂອງຫວານ ຮາໂລ ຮາໂລ, ເຂົາເຈົ້າຈະເອົານ້ຳກ້ອນທີ່ບົດແລ້ວປະສົມໃສ່ກັບນ້ຳຕານ, ໝາກຖົ່ວ ແລະ ນົມຂຸ້ນ. ຫຼັງຈາກນັ້ນ ກໍ່ເອົາໝາກໄມ້ທີ່ມີສີສັນສົດໃສວາງໃສ່ທາງເທິງ.

ຄວາມສະເໝີພາບຄົນຍ່າງຫຼວງຫຼາຍ ເຊິ່ງເຮັດໃຫ້ປະເທດຟີລິບປິນອ່ອນແອລົງ. ຕົວຢ່າງ: ອາເມຣິກາມີສິດເທົ່າທຽມກັບຄົນຟີລິບປິນໃນການນຳໃຊ້ຊັບພະຍາກອນທຳມະຊາດຈາກເກາະຕ່າງໆ. ຍິ່ງກວ່ານັ້ນ ກຸ່ມການເມືອງທີ່ແຕກຕ່າງກັນຍັງຄົງດຳເນີນການຕໍ່ສູ້ກັນ. ຍ້ອນເຫດນີ້ ປະເທດຈຶ່ງຈະເລີນຊ້າ.

ເຟີດິນານ ມາໂຄສ ໄດ້ກາຍມາເປັນປະທານາທິບໍດີເມື່ອທ້າຍປີ 1965. ໃນເບື້ອງຕົ້ນ ລາວເລີ່ມຕົ້ນປະຕິຮູບການສຶກສາ ແລະ ການກະສິກຳເປັນຢ່າງດີ. ແຕ່ໃນປີ 1972 ເມື່ອສະພາລັດຖະທຳມະນູນຕ້ອງການໃຫ້ ມາໂຄສ ອອກຈາກຕຳແໜ່ງ ລາວຜັດປະຕິເສດ. ລາວທຳຕົນເປັນຜະເດັດການຂອງປະເທດ. ລາວຖືກສະໜັບສະໜູນຈາກໝູ່ເພື່ອນທີ່ຮັ່ງມີ ແລະ ການຊ່ວຍເຫຼືອຈາກສະຫະລັດອາເມຣິກາ ແລະກອງທັບຂີ້ໂກງ. ເປັນເວລາ 14 ປີ ທີ່ປະເທດອ່ອນແອ ຈົນກະທັ້ງ ມາໂຄສ ຖືກກົດດັນໃຫ້ອອກຈາກຫ້ອງການ. ຄົນທີ່ລວຍ ຍິ່ງຮັ່ງມີຂຶ້ນກວ່າເກົ່າ, ສ່ວນຄົນທີ່ທຸກຈົນ ຍິ່ງທຸກລົງກວ່າເກົ່າ ແລະຄົນໃດກໍ່ຕາມທີ່ຕໍ່ຕ້ານລາວຖືກຈັບຂັງຄຸກ ຫຼື ຖືກປະຫານຊີວິດ.

ເມື່ອປະຊາທິປະໄຕກັບຄືນມາໃນປີ 1986 ປະເທດກໍ່ເປັນໜີ້ມະຫາສານ. ການສຶກສາຫຼຸດລົງ ແລະ ລັດຖະບານກໍ່ເຕັມໄປດ້ວຍພະນັກງານຄົດໂກງ ຈົ່ງເຮັດໃຫ້ປະເທດຊາດພັດທະນາຢ່າງຊ້າໆ.

ເສດຖະກິດ

ໃນຊຸມປີ 1960 ເສດຖະກິດຂອງຟີລິບປິນ ເຂັ້ມແຂງສຸດໃນເອເຊຍ ເຊິ່ງມີພຽງຍີ່ປຸ່ນທີ່ເຂັ້ມແຂງກວ່າ. ແຕ່ພາຍໃຕ້ການປົກຄອງອັນຄົດໂກງ ຂອງ ເຟີດີນານ ມາໂຄສ ແຕ່ປີ 1965 ຫາ ປີ 1986 ຄວາມຮັ່ງມີຂອງປະເທດຖືກມາໂຄສ, ຄອບຄົວ ແລະ ເພື່ອນຝູງສູບເອົາເປັນຈຳນວນຫຼາຍ. ເມື່ອເຟີດີນານ ມາໂຄສ ໜີຈາກປະເທດ, ລາວກໍ່ເອົາເງິນຫຼາຍຕັ້ໂດລາທີ່ໄດ້ຈາກການຄົດໂກງໄປນຳ. ເມຍຂອງລາວໃຊ້ເງິນຢ່າງຟຸມເຟືອຍ ເພື່ອຊື້ເຄື່ອງ, ນາງ ຊື້ ເກີບ 2,700 ຄູ່, ຖົງພາຍ 888 ໜ່ວຍ. ໃນຂະນະນັ້ນ ຄົນທຸກຈົນຖືກປະຖິ້ມ, ບໍ່ມີວຽກເຮັດ ແລະ ບໍ່ມີອາຫານພຽງພໍ ແລະປະເທດຊາດ ກໍ່ກຳລັງຢຽວຢາບັນຫາຂອງຍຸກທີ່ມີການຄົດໂກງຢ່າງຊ້າໆ.

ຊາວຟີລິບປິນຫຼາຍລ້ານຄົນ ມີເຖິງ 8% ຂອງພົນລະເມືອງທັງໝົດ ໄດ້ຍ້າຍໄປສູ່ປະເທດຕາເວັນຕົກ ເພື່ອຊອກວຽກທີ່ມີລາຍຮັບສູງກວ່າ ແລ້ວສົ່ງເງິນກັບເມືອເຮືອນໃຫ້ຄອບຄົວຂອງພວກເຂົາ. ນີ້ເປັນການສະໜອງລາຍໄດ້ແກ່ຟີລິບປິນ. ແຕ່ຈາກການໄດ້ຮັບລາຍໄດ້ອັນຫຼວງຫຼາຍ ແລະຍາວນານນີ້ ແທນທີ່ຈະເປັນການຊ່ວຍເຫຼືອປະເທດຂອງພວກເຂົາ ພັດທະນາເສດຖະກິດ ແລະ ລັດຖະບານໃຫ້ເຂັ້ມແຂງ, ຄົນງານທີ່ມີທັກສະເຫຼົ່ານັ້ນ ພັດຊ່ວຍປະເທດອື່ນທີ່ຮັ່ງມີກວ່າ. ຄອບຄົວຂອງພວກເຂົາມີລາຍໄດ້ຫຼາຍຂຶ້ນ ແຕ່ກໍ່ຕ້ອງປະສົບຄວາມທຸກໃຈເມື່ອແມ່ ຫຼື ພໍ່ໄປເຮັດວຽກຢູ່ໄກເປັນເວລາຫຼາຍປີ. ໃນຂະນະທີ່ມີວິກິດການເສດຖະກິດຂະຫຍາຍໄປທົ່ວໂລກ, ຄົນງານທີ່ໄປເຮັດວຽກຢູ່ຕ່າງປະເທດກໍ່ໄດ້ປະເຊີນກັບບັນຫາໃໝ່ຄື: ພວກເຂົາເສຍວຽກທີ່ຕ່າງປະເທດ ແລະໄດ້ກັບມາຟີລິບປິນ, ແຕ່ເມື່ອກັບມາບ້ານເກີດ ບາງຄົນກໍ່ບໍ່ມີວຽກງານຈະເຮັດ ຄືຕອນທີ່ພວກເຂົາຈາກໄປ.



Themanilaxperience CC-BY-SA 3.0

ມະນີລາ, ເມືອງຫຼວງຂອງປະເທດຟີລິບປິນ ແມ່ນເມືອງໜຶ່ງທີ່ໃຫຍ່ທີ່ສຸດໃນໂລກ. ນອກຈາກນີ້ແລ້ວຍັງເປັນເມືອງທີ່ມີຜູ້ຄົນແອອັດຫຼາຍທີ່ສຸດໃນໂລກດ້ວຍ, ສະເລ່ຍແມ່ນ 43,000 ຄົນຕໍ່ກິໂລແມັດມົນທົນ.



ໃນປະເທດຟີລິບປິນ ພູເຂົາໄຟບໍ່ແມ່ນໄພອັນຕະລາຍທາງທຳມະຊາດແຕ່ຢ່າງດຽວເທົ່ານັ້ນ. ຍັງມີພາຍຸເຂດຮ້ອນທີ່ໃຫຍ່ຫຼາຍ ເພີ່ນເອີ້ນວ່າ ພາຍຸໃຕ້ຝຸ່ນ, ເຊິ່ງມັກຈະພັດມາຈາກມະຫາສະໝຸດປາຊີຟິກ. ທຸກໆປີ ພາຍຸໃຕ້ຝຸ່ນເຫຼົ່ານີ້ຈະພັດຜ່ານປະເທດຟີລິບປິນ. ພາຍຸໃຕ້ຝຸ່ນທີ່ເຫັນຢູ່ໃນພາບນີ້ມີຄວາມກວ້າງເຖິງ 300 ກິໂລແມັດ ແລະ ພັດດ້ວຍຄວາມໄວ 280 ກມ ຕໍ່ຊົ່ວໂມງ.

ດົງຫ່າອິດ

ແຕ່ກີ້ແຕ່ກ່ອນ ເມື່ອຄັ້ງຍັງບໍ່ທັນມີຫນ່ວຍໂລກ ແລະ ມະນຸດ. ໃນທ້ອງຟ້າມີເທບພະເຈົ້າ ໃຫຍ່ຕົນຫນຶ່ງຊື່ວ່າ ເມລຸ ພະອົງເປັນເທບພະເຈົ້າທີ່ມີຜິວພັນຂາວຜ່ອງ ແລະ ມີແຂ້ວເປັນ ຄຳ. ພະອົງມີຄວາມຊົ່ນຊື່ນຍິນດີຕໍ່ຜິວພັນອັນຂາວຜຸດຜ່ອງຂອງຕົນ ພະອົງຈຶ່ງລູບຜິວພັນ ຢູ່ຕະຫຼອດເວລາ ເພື່ອຮັກສາໃຫ້ມັນຂາວຜຸດຜ່ອງ.


ຜິວຫນັງຕາຍທີ່ພະອົງລູບອອກ ແລ້ວເອົາມັນກອງໄວ້ ເມື່ອໄດ້ຜິວຫນັງຕາຍພຽງພໍແລ້ວ ພະອົງຈຶ່ງປັ້ນໃຫ້ເປັນຫນ່ວຍໂລກ. ແຕ່ຍັງມີຜິວຫນັງຕາຍຫນ້ອຍຫນຶ່ງເຫຼືອ ເພິ່ນຈຶ່ງປັ້ນເປັນ ສັດໂລກທີ່ມີຊີວິດສອງສິ່ງຂຶ້ນ ເໝືອນກັບພະອົງ, ພຽງແຕ່ມັນມີຂະຫນາດນ້ອຍກວ່າເທົ່ານັ້ນ.

ພະອົງປັ້ນຜູ້ທຳອິດສຳເລັດແລ້ວ ແຕ່ບໍ່ໄດ້ເຮັດດົງເທື່ອ, ເພິ່ນໄດ້ສືບຕໍ່ປັ້ນຜູ້ທີສອງຈົນ ສຳເລັດ ແລະກໍ່ບໍ່ທັນເຮັດດົງຄືກັນ. ຂະນະທີ່ພະອົງກຳລັງຄົ້ນຄິດວິທີຈະເຮັດດົງຢູ່ນັ້ນ ນ້ອງ ປຶກຂອງພະອົງກໍ່ມາຮອດ.



"ໃຫ້ຂ້ານ້ອຍເຮັດດົງແມ່," ລາວເວົ້າ, "ພະອົງຊົງມ່ວນມາ ຫຼາຍແລ້ວ, ຂໍໃຫ້ຂ້ານ້ອຍໄດ້ເຮັດ ນຳແດ່."

ເທບພະເຈົ້າເມລຸບໍ່ຢາກໃຫ້ ນ້ອງເຊີ້ຊ້າເງິ່ງະຂອງເພິ່ນເຮັດ ເລີຍ ແຕ່ໃນທີ່ສຸດພະອົງກໍ່ຊົງອະ ນຸຍາດ. ດັ່ງນັ້ນ ນ້ອງປຶກຈຶ່ງໄດ້ ເຮັດດົງ. ໃນຂະນະທີ່ພະອົງອອກ ໄປເຮັດສິ່ງອື່ນຢູ່ຂ້າງນອກ. ເມື່ອ ດົງທັ້ງສອງສຳເລັດແລ້ວ ນ້ອງ



ປີກຂອງພະອົງກໍ່ເອົາດ້ວງຕິດໃສ່ໃບໜ້າທັງສອງ ແຕ່ບັງເອີນລາວຕິດລວງປີ້ນ, ເອົາເບື້ອງມີຮູຂຶ້ນເທິງ ແລ້ວລາວກໍ່ຫນີໄປ.

ມື້ໜຶ່ງ ເມື່ອຝົນຕົກໜັກລົງໃສ່ໜ້າໂລກໜ່ວຍໃໝ່ ມະນຸດໃໝ່ສອງຄົນນີ້ກໍ່ຢູ່ຢ່າງລຳບາກຫຼາຍ ເພາະນ້ຳຝົນໄຫຼລົງໄປຕາມຜົມດຳຂີ້ ແລ້ວໄຫຼລົງເຂົ້າຮູດ້ງຂອງພວກເຂົາ. ດັ່ງນັ້ນ ພວກເຂົາຈຶ່ງໄດ້ເອົາຫົວຕັ້ງລົງ ແລ້ວເອົາຕີນຊີ້ຂຶ້ນຟ້າຢູ່ກ້ອງຕົ້ນໄມ້ໃຫຍ່ ລໍຖ້າຈົນກວ່າຝົນຈະເຊົາ ແລະພວກເຂົາຕ້ອງໄດ້ເຮັດແບບນີ້ທຸກໆຄັ້ງທີ່ມີຝົນຕົກລົງມາ.

ມື້ໜຶ່ງເທບພະເຈົ້າ ເມລຸ ສັງເກດເຫັນວ່າ ມີຝົນດີຜິເສດກຳລັງຕົກລົງສູ່ໂລກ ພະອົງກໍ່ລົງມາເບິ່ງມະນຸດທັງສອງ ໂດຍຫວັງວ່າຈະເຫັນມະນຸດທັງສອງດີໃຈ, ຊາບຊຶ້ງໃນພະຄຸນ ແລະ ມ່ວນກັບນ້ຳຝົນທີ່ພະອົງປະທານມາໃຫ້ພວກເຂົາ.

ແຕ່ພະອົງກໍ່ຕ້ອງແປກໃຈ ເມື່ອເຫັນສອງຄົນນັ້ນ ເອົາຫົວຕັ້ງລົງດິນຢູ່ກ້ອງຕົ້ນໄມ້ຕົ້ນໜຶ່ງ.

"ພວກເຈົ້າເຮັດຫຍັງແບບນີ້?" ພະອົງຖາມພ້ອມທັງປີ້ນພວກເຂົາໃຫ້ກັບມາຢືນດ້ວຍສອງຂາຄືເກົ່າ.


ຂະນະນັ້ນເອງ ພະອົງເຫັນວ່າມີນ້ຳຝົນໄຫຼລົງຕາມເສັ້ນຜົມ ແລ້ວໄຫຼເຂົ້າໄປໃນຮູດ້ງຂອງພວກເຂົາ. ພະອົງເກືອບອົດກັ້ນສຽງຫົວໄວ້ບໍ່ໄດ້ ເມື່ອເຫັນສະພາບອັນໜ້າອີ່ດູຕົນແກມຕະລົກແບບນີ້ ແລ້ວພະອົງກໍ່ແກ້ໄຂໃຫ້ມັນຖືກຕ້ອງ.

ເທບພະເຈົ້າເມລຸດຶງດ້ງທັງສອງອອກ ແລ້ວຕິດເຂົ້າຄືນໃຫ້ຖືກລວງ ໂດຍໃຫ້ຮູດ້ງລົງທາງລຸ່ມ ຄືກັບດ້ງຂອງພວກເຮົາທຸກວັນນີ້.



ມາເລເຊຍ

ເຂົ້າຮ່ວມອາຊຽນ: 8 ສິງຫາ 1967
ນະຄອນຫຼວງ: ກົວລາລຳເປີ
ປະຊາກອນ: 28 ລ້ານ ຄົນ
ເນື້ອທີ່: 329,847 ກມ^2
ຄວາມໜາແໜ້ນ: 86 ຄົນ/ກມ^2
ອາຍຸປານກາງ: 26.8 ປີ
ສາສະໜາ: ປະມານ 60% ຂອງພົນລະເມືອງເປັນຊາວມຸດສະລິມ, 20% ເປັນຊາວພຸດ, 10% ເປັນຊາວຄິສຕຽນ ແລະ ອີກ 6% ເປັນຊາວຮິນດູ.
ພາສາ: ມະເລ (ເປັນທາງການ). ພາສາອັງກິດ, ຈີນ ແລະ ພາສາຊົນເຜົ່າອື່ນໆ ກໍ່ນຳໃຊ້ເວົ້າກັນຢ່າງກວ້າງຂວາງ.
ເສດຖະກິດ: ມາເລເຊຍ ເປັນຜູ້ໜຶ່ງທີ່ສະໜອງຢາງທີ່ໃຫຍ່ທີ່ສຸດຂອງໂລກ ເຊິ່ງມັນສາມາດສົ່ງເຄື່ອງເອເລັກໂຕນິກ, ນ້ຳມັນ, ກາສທຳມະຊາດ, ໄມ້, ນ້ຳມັນປ່າມ ແລະ ແຜ່ນແພ ອອກ.
ລາຍໄດ້ຕໍ່ຄົນ: $7,230 (US)
ລາຍໄດ້ປຽບທຽບຕໍ່ຄົນ: $14,700 (US)
ລະດັບລາຍໄດ້ປຽບທຽບ: 77
ສຳປະສິດຈີນີ: 44.1



ກິໂລເມັດ
0 100 200 300 400 500

จอจทอม George Town
โกะทะปาระหุ Kota Baharu
กัวลาเทเรงกานุ Kuala Terengganu
อีโป Ipoh
ซุนไกซีพุต Sungai Siput
กวนทัน Kuantan
กัวลาลำเปอ
มาเลเซีย
สิงคโปร์
ช่องแคบมะละกา
อินโดนีเซีย
ทะเลซูลาวา
จาการ์ตา
บรูไน
บันดาเสรีเบกาวัน
โกตะกีนะบะลู Kota Kinabalu
ซันดะกัน Sandakan
ทะเวา Tawau
กูชิง Kuching
ซีบู Sibu
มะนิล

ມາເລເຊຍ



ການປູກຊາທີ່ປົກຄຸມເອົາພູຫຼາຍໜ່ວຍໃນປະເທດມາເລເຊຍ.

ພູມີປະເທດ

ມາເລເຊຍ ເປັນປະເທດທີ່ຢູ່ແຍກກັນຢູ່ສອງສ່ວນຄື: ສ່ວນໜຶ່ງຢູ່ດິນແດນດ້ານໃຕ້ຂອງໄທ ບຶນແຫຼມອັນຍາວຢຽດ. ອີກເຄິ່ງໜຶ່ງຕັ້ງຢູ່ບຶນເກາະບໍນີໂອ ເຊິ່ງແບ່ງດິນຮ່ວມກັບ ອິນໂດເນເຊຍ ແລະ ບຣູໄນ. ລະຫວ່າງສອງດິນແດນຂອງມາເລເຊຍນີ້ ມີຊ່ອງແຄບມາລາກາ ເຊິ່ງເປັນເສັ້ນທາງເດີນເຮືອທີ່ສຳຄັນ ແລະ ເປັນບ່ອນທຳທຸລະກິດຫຼາຍທີ່ສຸດຂອງໂລກອີກແຫ່ງໜຶ່ງ.

ປະຫວັດສາດ

ມີຫຼາຍຮ້ອຍອາຍາຈັກໄດ້ປົກຄອງດິນແດນທີ່ເປັນປະເທດມາເລເຊຍໃນປະຈຸບັນ ເຊິ່ງບາງອາຍາຈັກກໍ່ຢູ່ຮອດ 2,000 ປີ. ພວກເຂົາປູກເຄື່ອງເທດທີ່ພວກເຂົາຄ້າຂາຍກັບຈີນ ເພື່ອແລກເອົາເຫຼັກ ແລະ ເຄື່ອງປັ້ນດິນເຜົາ. ພວກເຂົາຍັງຄ້າຂາຍກັບອິນເດຍ ແລະ ເອເຊຍຕາເວັນອອກສ່ຽງໃຕ້. ປະຊາຊົນໄດ້ຮັບອິດທິພົນສອງສາສະໜາມາຈາກອິນເດຍ ເຊັ່ນ: ສາສະໜາ



by Sakurai Midori CC-BY-SA 2.1

ມາຕາບັກ ແມ່ນອາຫານນິຍົມກິນໃນມາເລເຊຍ. ກ່ອນອື່ນໝົດ ພໍ່ຄົວຈະປະສົມແປ້ງໃຫ້ເປັນແຜ່ນບາງໆກ່ອນ ແລ້ວກໍ່ນຳໄປທອດໃຫ້ອ່ອນ. ຫຼັງຈາກນັ້ນ ພໍ່ຄົວກໍ່ຈະໃສ່ສ່ວນປະສົມທີ່ມີໄຂ່, ຜັກບົ່ວ, ຊີ້ນ, ເກືອ ແລະ ຜັກຫອມລົງໄປ, ຕໍ່ມາເພິ່ນຈະພັບແຜ່ນເຂົ້າ ແລ້ວນຳໄປທອດອີກເທື່ອໜຶ່ງ ຈົ່ງເອົາອອກມາຕັດເປັນຕ່ອນສີ່ຫຼ່ຽມ.



Neitram, CC-BY-SA 3.0

ສະຖານທີ່ ເມີເດກາເປັນທີ່ຮູ້ຈັກວ່າ "ເປັນມົນທິນເອກະລາດ" ໃນປະເທດມາເລເຊຍ. ເຊິ່ງຕັ້ງຢູ່ໃນໃຈກາງ ຂອງເມືອງຫຼວງ ອ້ອມຮອບໄປດ້ວຍ ເມືອງຕ່າງໆທີ່ສວຍງາມທີ່ສຸດ ແລະ ຕຶກອາຄານຕ່າງໆທີ່ສຳຄັນທີ່ສຸດ. ໃນວັນທີ 31 ເດືອນສິງຫາ, ປີ 1957, ທຸງຊາດມາເລເຊຍໄດ້ຖືກ ຍົກຂຶ້ນໃນທີ່ນີ້, ຄືຕອນທີ່ມາເລເຊຍ ໄດ້ພົ້ນອອກຈາກແອກປົກຄອງຂອງ ອັງກິດ.



Morio CC-BY-SA 3

ຕຶກແຝດໃນ ກົວລາລຳເປົ໋ເມືອງ ຫຼວງຂອງມາເລເຊຍ ໄດ້ສ້າງສຳ ເລັດໃນປີ 1998. ຕະຫຼອດຫົກປີ ຫຼັງຈາກນັ້ນ ມັນໄດ້ເປັນຕຶກທີ່ສູງ ທີ່ສຸດໃນໂລກ.

ຕຶກສູງສ່ວນໃຫຍ່ໃນໂລກໃຊ້ ເຫຼັກເປັນໂຄງສ້າງ. ແຕ່ເຫຼັກໃນ ມາເລເຊຍແມ່ນແພງຫຼາຍ ດັ່ງນັ້ນ ນັກສະຖາປະນິກຈຶ່ງໃຊ້ຄອນກີດ ແທນ.

ພຸດ ແລະ ຮິນດູ.

ຕໍ່ມາ ຊາວຄ້າຂາຍກໍ່ມາເຂດນີ້ຫຼາຍຂຶ້ນ. ທ່າເຮືອມາລາກາເຕັມໄປ ດ້ວຍເຮືອກຳປັ່ນ ເຊິ່ງມາຈາກຫຼາຍພາກສ່ວນຂອງເອີຣົບ ແລະ ເອເຊຍ. ນັກເດີນເຮືອຈຳນວນຫຼາຍເວົ້າວ່າ ມັນເປັນທ່າເຮືອທະເລທີ່ຫຍຸ້ງວຽກທີ່ ສຸດເທົ່າທີ່ພວກເຂົາເຄີຍເຫັນມາ. ຊາວຄ້າຂາຍຄົນອາຣັບທີ່ມາຈາກຕາ ເວັນຕົກສ່ຽງໃຕ້ຂອງເອເຊຍກໍ່ມາຮອດ ແລະນຳເອົາສາສະໜາຂອງພວກ ເຂົາເຂົ້າມາຄື ສາສະໜາມຸດສະລິມ. ສາສະໜາໃໝ່ເຫຼົ່ານີ້ປະປົນກັບ ຄວາມເຊື່ອຖືວິນຍານຂອງຄົນທີ່ຢູ່ກ່ອນ. ມີຫຼາຍຄົນຍຶດຖືປະຕິບັດສາສະ ໜາທີ່ໄດ້ຮວບຮວມເອົາພື້ນຖານອັນຫຼາກຫຼາຍຈາກສາສະໜາອື່ນ.

ໃນປີ 1511 ກອງທັບເຮືອຂອງປອກຕຸຍການ ໄດ້ຢຶດເອົາທ່າເຮືອມາລາ ກາ. ພວກເຂົາຄິດວ່າພວກເຂົາຈະສາມາດຮັ່ງມີໄດ້ດ້ວຍການເກັບພາສີ ແພງໆຈາກເຮືອທັງໝົດທີ່ມາເຮັດທຸລະກິດຢູ່ທີ່ນັ້ນ. ແຕ່ຊາວຄ້າຂາຍບໍ່ ຕ້ອງການຈ່າຍພາສີ. ສະນັ້ນ ພວກເຂົາຈຶ່ງເດີນທາງໄປທ່າເຮືອອື່ນ ແລະ ມາລາກາ ກໍ່ເສຍບົດບາດສຳຄັນໄປ.

ຕໍ່ມາ ອັງກິດກໍ່ມາຮອດ. ພວກເຂົາໄດ້ຢຶດເອົາປະເທດຫຼາຍກ່ວາໜຶ່ງ ສະຕະວັດ, ຈີນກະທັ້ງ ຍີ່ປຸ່ນເຂົ້າມາຮຸກຮານໃນລະຫວ່າງສົງຄາມໂລກຄັ້ງ ທີ II. ໃນຕອນທ້າຍຂອງສົງຄາມ ມີການເຈລະຈາອັນຍືດຍາວກ່ຽວກັບອະ ນາຄົດຂອງມາເລເຊຍ. ມັນກາຍເປັນປະເທດອິດສະລະພາບໃນປີ 1963.



by Azreey CC-BY-SA 3.0

ໃນປີ 1917 ກະສັດອິງໜຶ່ງໃນເມືອງແຫ່ງລາຊະວົງ ກົວລາກາງສາ (Kuala Kangsar) ໄດ້ຊົງປ່ວຍຢ່າງໜັກ. ເມື່ອຫາຍດີແລ້ວ, ພະອົງໄດ້ສ້າງສຸເລ່ົາ (ວັນມຸດສະລິມ) ແຫ່ງນີ້ຂຶ້ນ ເພື່ອເປັນການໂມທະນາທານ ທີ່ເຮັດໃຫ້ພະອົງມີພຣະຊົນຢູ່ຕໍ່. ຫາຍຄົນໃນມາເລເຊຍເຊື່ອວ່າ ນີ້ແມ່ນສຸ. ເລ່ົາທີ່ງາມທີ່ສຸດໃນປະເທດຂອງຕົນ.

ສາສະໜາ


ປະຊາກອນສ່ວນໃຫຍ່ໃນມາເລເຊຍແມ່ນມຸດສະລິມ, ເຊິ່ງເອີ້ນອີກຊື່ ໜຶ່ງວ່າ ອິດສະລາມ. ສາສະໜານີ້ໄດ້ມີການຈະເລີນຂຶ້ນໂດຍການສິດສອນ ຂອງຊາຍຄົນໜຶ່ງ ເຜີ່ນຊື່ວ່າ ໂມຮາມເມັດ, ມີຊີວິດຢູ່ປະມານ 1400 ປີທີ່ ຜ່ານມາ. ເຊັ່ນດຽວກັນກັບສາສະໜາຄິສຕຽນ, ມຸດສະລິມເຊື່ອວ່າມີພະ ເຈົ້າແຕ່ອົງດຽວຄືອົງທີ່ມີອຳນາດສູງສຸດ.

ໂມຮາມເມັດ ມີຊີວິດຢູ່ໃນເຂດໃດໜຶ່ງແຖບເອເຊຍຕາເວັນຕົກ ເຊິ່ງປະ ຈຸບັນນີ້ແມ່ນປະເທດ ອາຣັບບີຊາອຸດິດ. ສາສະໜາມຸດສະລິມໄດ້ມີການຂະ ຫຍາຍຕົວໄປທົ່ວເອເຊຍຕາເວັນຕົກ ແລະ ທາງຕອນເໜືອຂອງອາຟຣິກາ ຢ່າງໄວອາ. ບັນດາພໍ່ຄ້າຊາວມຸດສະລິມໄດ້ນຳເອົາສາສະໜາຂອງພວກ ເຂົາໄປຍັງປະເທດຕ່າງໆເຊັ່ນ: ອິນໂດເນເຊຍ ແລະ ມາເລເຊຍ.



Loke Seng Hon 2008, CC-BY-SA 3.0

ຜູ້ອົບພະຍົບຈາກອິນເດຍໄດ້ນຳ ເອົາສາສະໜາຮິນດູຂອງພວກ ເຂົາເຂົ້າມານຳ. ຮູບປັ້ນນີ້ໄດ້ສະ ແດງໃຫ້ເຫັນພະເຈົ້າຂອງຮິນດູທີ່ ມີຊື່ວ່າ ມູຣຸການ. ຮູບປັ້ນນີ້ມີ ຄວາມສູງເຖິງ 43 ແມັດ.



ຫາຍເທື່ອ, ຮູບພາບ ຫຼື ແຜນທີ່ຈະຊ່ວຍໃຫ້ເຮົາເຂົ້າໃຈຂໍ້ມູນໄດ້ງ່າຍຂຶ້ນ. ແຜນທີ່ປະເທດມາເລເຊຍສະບັບນີ້ ໄດ້ສະແດງໃຫ້ເຫັນຄວາມໜາແໜ້ນຂອງປະຊາກອນ. ພື້ນທີ່ສີມ່ວງເຂັ້ມແມ່ນມີຢ່າງໜ້ອຍ 4,500 ຄົນອາໄສຢູ່ໃນແຕ່ລະກິໂລແມັດມົນທົນ. ພື້ນທີ່ເຫຼົ່ານີ້ແມ່ນເມືອງຕ່າງໆ. ຕົວຢ່າງ ສີສົ້ມອ່ອນສະແດງໃຫ້ເຫັນພື້ນທີ່ ທີ່ມີຄົນອາໄສຢູ່ 10 ຫາ 50 ຄົນໃນແຕ່ລະກິໂລແມັດມົນທົນ. ສ່ວນໃຫຍ່ໃນພື້ນທີ່ນີ້ແມ່ນເຂດປູກຝັງ. ພື້ນທີ່ ສີເຫຼືອງອ່ອນແມ່ນເຂດປ່າ ເກືອບຈະບໍ່ມີຄົນອາໄສຢູ່. ສີຟ້າໝາຍເຖິງທະເລ; ສີເທົາໝາຍເຖິງປະເທດອື່ນ. ໃນແຜນທີ່ແບບນີ້ ທ່ານຈະເຫັນໄດ້ໂດຍງ່າຍວ່າ ຄົນສ່ວນໃຫຍ່ມັກອາໄສຢູ່ໃກ້ກັບທະເລ.



ນ້ຳມັນປາມ ເປັນສິນຄ້າສົ່ງອອກ ທີ່ສຳຄັນ ຂອງມາເລເຊຍ ແຕ່ ຕ້ອງໄດ້ຕັດໄມ້ເປັນຈຳໜວນຫຼາຍ ເພື່ອເຮັດພື້ນທີ່ປູກຕົ້ນປາມ.

ຕົກອາຄານຂອງສາສະໜາມຸດສະລິມນັ້ນ ເຜີ່ນເອີ້ນວ່າ ສຸເລ່ຳ. ໂດຍ ປົກກະຕິແລ້ວ, ສຸເລ່ຳຈະມີຈອມກົມ (ຫຼັງຄາມົນ) ກັບຫໍຄອຍສູງໆ. ແຕ່ລະ ມັ້ຈະມີຊາຍຜູ້ໜຶ່ງມາຢືນຢູ່ໃນຫໍຄອຍເຫຼົ່ານີ້ ແລະ ເອີ້ນຄົນທົ່ວຫຼາຍໃຫ້ມາ ສູດມົນ.

ເສດຖະກິດ

ໃນສະຕະວັດທີ 19 ອັງກິດໄດ້ນຳເອົາຄົນງານຈາກຈີນມາເຮັດວຽກໃນ ບໍ່ແຮ່ ແລະ ຈາກອິນເດຍມາເຮັດວຽກປູກຕົ້ນຢາງ.

ປະຈຸບັນນີ້ ນ້ຳມັນ ແລະ ກາສທຳມະຊາດໄດ້ກາຍເປັນສິນຄ້າສົ່ງອອກ ແທນແຮ່ທາດ ແລະ ດີບຸກ. ນ້ຳມັນປາມໄດ້ກາຍມາເປັນສິນຄ້າທາງກາມ ກະເສດທີ່ໃຫຍ່ທີ່ສຸດແທນທີ່ຢາງ. ເມັດ ໂກໂກ ແລະ ເຄື່ອງເທດ ໂດຍສະ ເພາະແມ່ນພິກໄທ ເປັນພືດຜົນທາງກາມກະເສດທີ່ສຳຄັນ. ຫຼາຍຄອບຄົວ ມີທີ່ງນານ້ອຍເປັນຂອງຕົນເອງ ແຕ່ມາເລເຊຍຈຳຕ້ອງຊື້ເຂົ້າຈາກຕ່າງປະ ເທດເປັນຈຳນວນຫຼວງຫຼາຍ.



ຮູບ: ມີຊົນເຜົ່າດາຢັກ (Dayak tribes) ຫຼາຍກວ່າ100 ຊົນເຜົ່າທີ່ອາໄສຢູ່ໃນເກາະບໍນີໂອ. ແຕ່ລະຊົນເຜົ່າຈະມີປະເພນີ, ການນຸ່ງຖື ແລະ ພາສາທ້ອງຖິ່ນເປັນຂອງຕົນເອງ. ພາບຖ່າຍນີ້ແມ່ນຖ່າຍໃນປີ 1910 ເຊິ່ງສະແດງໃຫ້ເຫັນແມ່ຍິງຈາກຊົນເຜົ່າໜຶ່ງໃນກຸ່ມເຫຼົ່ານີ້.

ດາຢັກ ມີລະບົບສິດໃນການນຳໃຊ້ທີ່ດິນ ໂດຍໃຫ້ຂຶ້ນກັບຜູ້ທີ່ໄດ້ນຳໃຊ້ທີ່ດິນນັ້ນມາກ່ອນ. ຮູບການນີ້ ຫຼາຍຄັ້ງ ມັກຈະນຳໄປສູ່ຄວາມຂັດແຍ່ງກັນ ຍ້ອນຫົວໜ່ວຍທຸລະກິດ ຈະພະຍາຍາມຄອບຄອງພື້ນທີ່ໃຫ້ໄດ້ຫຼາຍເພື່ອການປູກຝັງ.



by Malene Thyssen CC-BY-SA 3.0

ເຂດປ່າຮ້ອນ-ຊຸ່ມຂອງເກາະບໍນີໂອແມ່ນບ້ານຂອງພືດ ແລະ ສັດທີ່ໜ້າສົນໃຈຫຼາຍຊະນິດ. ລີງອຸລ້ຽງອຸຕັ້ງ ແມ່ນສັດທີ່ມີສາຍພັນໃກ້ຄຽງກັບມະນຸດທີ່ສຸດ. ເຈົ້າຮູ້ຈັກໃຜບໍທີ່ມີຮູບຮ່າງໜ້າຕາແບບນີ້?

ເກາະບໍນີໂອ

ເກາະບໍນີໂອ ແມ່ນເກາະທີ່ໃຫຍ່ອັນດັບທີສາມໃນໂລກ. ລາຊະອານາຈັກບຣູໄນທັງໝົດແມ່ນຢູ່ເທິງເກາະບໍນີໂອ. ນອກຈາກນີ້ ຍັງເປັນບາງສ່ວນຂອງອິນໂດເນເຊຍ ແລະ ມາເລເຊຍລວມຢູ່ໃນນັ້ນດ້ວຍ.

ເກາະບໍນີໂອນອນຢູ່ເທິງເສັ້ນທາງລະຫວ່າງອິນເດຍ ແລະ ຈີນ. ຈາກປະມານ ປີ 600 ຫາ 1300, ມັນເປັນສູນກາງການຄ້າທີ່ສຳຄັນ. ແຕ່ໃນທີ່ນັ້ນກໍ່ມີໂຈນສະລັດອາໄສຢູ່ຄືກັນ. ໂຈນສະລັດມັກໂຈມຕີເຮືອຕ່າງໆຂ້າລູກເຮືອ ແລະ ລັກເອົາສິນຄ້າຂອງພວກເຂົາໄປ.

ປະຊາກອນສ່ວນໃຫຍ່ແມ່ນອາໄສຢູ່ໃກ້ກັບຝັ່ງທະເລ ແຕ່ກໍ່ມີຫຼາຍເຜົ່າທີ່ອາໄສຢູ່ໃນປ່າຝູ. ໃນອະດີດ ໄດ້ມີຊົນເຜົ່າໜຶ່ງຊື່ວ່າເຜົ່າດາຢັກ ແມ່ນເຜົ່າທີ່ມີຊື່ສຽງ ແລະ ເປັນທີ່ຢຳເກງ ເພາະພວກເຂົາເປັນເຜົ່າທີ່ລ່າຫົວມະນຸດ. ແຕ່ພາຍໃນກຸ່ມຂອງພວກເຂົາເອງ ແມ່ນມັກຄວາມສະຫງົບ. ເມື່ອຄົນໃນເຜົ່າດາຢັກ ຫາກບໍ່ສາມາດຕົກລົງກັນໄດ້ໃນເລື່ອງໃດໜຶ່ງ ພວກເຂົາຈະບໍ່ຕໍ່ສູ້ກັນ, ແຕ່ພວກເຂົາຈະຍ່າງລົງໄປດຳນ້ຳທະເລແຂ່ງກັນ, ຖ້າໃຜສາມາດກັ້ນຫາຍໃຈຢູ່ໃນນ້ຳໄດ້ດົນກວ່າ ຈະເປັນຜູ້ຊະນະ.

ຊາເລັມ ແລະ ຮັງຕໍ່

ບ່າຍວັນໜຶ່ງອາກາດສົດຊື່ນແຈ່ມໃສ ມີກວາງນ້ອຍໂຕໜຶ່ງກຳລັງຍ່າງຢ່ອງໆ ຜ່ານປ່າດົງຢ່າງລະມັດລະວັງໂດຍທີ່ມັນຮູ້ດີວ່າ ສັດຕູທີ່ໜ້າຢ້ານກົວທີ່ສຸດຂອງມັນຢູ່ ທາງຫຼັງບໍ່ໄກປານໃດ. ໃນຂະນະດຽວກັນນັ້ນ ມັນກໍ່ໄດ້ຍິນສຽງເນື້ອງນັນດັງມາອື່ນໆ ແລະ ເບິ່ງຄືວ່າຈະດັງມາຈາກພຸ່ມໄມ້ທີ່ຢູ່ໃກ້ໆນັ້ນ. ມັນຈຶ່ງຄ່ອຍໆຢ່ອງເຂົ້າໄປໃກ້ໆກໍ່ເຫັນຮັງຕໍ່. ດັ່ງນັ້ນ ກວາງນ້ອຍຈຶ່ງນັ່ງລົງ ແລະ ຄ່ອຍໆດຶງເອົາໃບຕານ ພ້ອມທັງຈ້ອງຕາເບິ່ງຮັງຕໍ່ທີ່ຢູ່ຕໍ່ໜ້າ ແລະ ໃຊ້ໃບຕານວີຮັງຕໍ່ຈົນເຮັດໃຫ້ສຽງນັ້ນສະຫງົບລົງ.

ຕໍ່ມາ ເສືອກໍ່ໄດ້ນຳຮອຍຕີນມາຈົນຮອດບ່ອນກວາງຢູ່ ມັນເລີຍກະໂດດຄຸບກວາງແບບບໍ່ຮູ້ສຶກຕົວ ພ້ອມທັງຮ້ອງຄຳລາມວ່າ: "ບັດນີ້ ເຈົ້າຜູ້ນ້ອຍເປັນຕາແຊບກໍ່ຖືກຈັບຈົນໄດ້. ກູຈະມ່ຳມື້ງດຽວນີ້."




ແຕ່ກວາງນ້ອຍຜັດຍິ້ມເສີຍ ແລະ ເວົ້າອອກມາວ່າ, "ຢ່າກິນຂ້ານ້ອຍທ້ອນ ອ້າຍໃຫຍ່! ອ້າຍຮູ້ບໍ່ວ່າ ນ້ອງນີ້ເປັນຜູ້ທີ່ພະລາຊາມອບໝາຍໃຫ້ເບິ່ງແຍງກອງກ່ອມນອນທີ່ພະອົງຮັກທີ່ສຸດໄດ່ ຂະໜາດວ່າ ນ້ອງຊິອອກໄປໃສໜ້ອຍດຽວກໍ່ຍັງບໍ່ໄດ້ເລີຍ."

"ຢູ່ໃສອັນກອງກ່ອມນອນທີ່ນຶ່ງຖືກມອບໝາຍໃຫ້ເຝົ້າຫັ້ນນະ?" ເສືອຖາມດ້ວຍຄວາມສົງໄສ.

"ຢູ່ໃນພຸ່ມໄມ້ຫັ້ນເດ," ກວາງນ້ອຍຕອບ. "ຂະໜາດສຽງມັນດ້ງປານນັ້ນອ້າຍກໍ່ຍັງບໍ່ໄດ້ຍິນຫວາ! ແລະ ຖ້າຕີບມັນເບິ່ງແມ໋ ວ່າມັນຈະມີສຽງມ່ວນອ່ອນຊ້ອນຂະໜາດໃດ? ມັນມີສຽງດ້ງກ້ອງ, ມ່ວນ ແລະ ຫ້ານອ່ອນຊ້ອນ ດັ່ງຂຸ່ຍໄມ້ໄຜ່ພຸ້ນໄດ່ ຖ້າອ້າຍໄດ້ຍິນກໍ່ຈະເຮັດໃຫ້ເພີດເພີນຈົນເຜີລັບໄປແບບບໍ່ຮູ້ຕົວພຸ້ນລະ."

ເມື່ອເສືອໄດ້ຍິນແນວນັ້ນ ມັນຈຶ່ງຢຸດຟັງ ພ້ອມທັ້ງຄຳລາມດ້ວຍນ້ຳສຽງອັນ



ແຜ່ວເບົາວ່າ: "ຊາເລັ້ມເອີ ໃຫ້ເຮົາຕົບເບິ່ງ
ບາດໜຶ່ງໄດ້ບໍ ເທື່ອດຽວກະໄດ້ນ່າ ກ່ອນ
ທີ່ເຮົາຈະກິນໂຕ. ເຮົາວ່າ ມັນຄືຊີຄັກ
ຂະໜາດເນາະ."

"ຢ່າແຕະຕ້ອງມັນໄດ່! " ຊາເລັ້ມ
ຕອບ. "ອ້າຍບໍ່ຢ້ານລາຊາຜູ້ຍິ່ງ
ໃຫຍ່ດ່າຫວະ."

ແຕ່ເສືອກໍ່ຍັງສືບຕໍ່
ອ້ອນວອນໄປໆ-ມາໆຢູ່ບໍ່ເຊົາ. ຊາເລັ້ມ
ຄິດຢູ່ຄາວໜຶ່ງ ແລ້ວກໍ່ເວົ້າວ່າ:

"ບໍ່, ນ້ອງບໍ່ກ້າອະນຸຍາດໃຫ້ອ້າຍຕົບ. ຖ້າ
ຕົບກອງໜ່ວຍນີ້ມັນກໍ່ເທົ່າກັບຂ້າຊີວິດຂອງ
ນ້ອງພຸ້ນໄດ. ແນວໃດກໍ່ຢ່າ ຄັນວ່າຊິຕົບ
ແທ້ໆ ລໍຖ້າໃຫ້ນ້ອງໄປຂໍອະນຸຍາດນຳພະອົງ
ກ່ອນ ນ້ອງຄິດວ່າ ເພິ່ນຄືຈະອະນຸຍາດຢູ່
ດອກ. ແຕ່ອ້າຍຕ້ອງສັນຍາວ່າ ຈະບໍ່ແຕະ
ຕ້ອງມັນກ່ອນ ຈົນກວ່າຈະໄດ້ຍິນສຽງເອີ້ນ
ຂອງນ້ອງສັ່ງ."

ເສືອຕອບຢ່າງກະຕືລືລົ້ນວ່າ "ກໍ່ໄດ້ ໄປ
ຖາມເລີຍ ໄປດຽວນີ້."

ກວາງນ້ອຍກໍ່ກະໂດດເຕັ້ນຊ້າຍເຕັ້ນຂວາ
ອອກໄປ. ທັນທີທີ່ມັນມາຮອດບ່ອນທີ່ປອດ
ໄພ ໄກພໍທີ່ສຽງຂອງມັນພໍຈະເຮັດໃຫ້ເສືອໄດ້
ຍິນແລ້ວ ມັນກໍ່ຢຸດ ແລະ ຮ້ອງອອກມາທັນ



ທີວ່າ:

"ເອົາ! ຕົບໂລດ ແຕ່ຕ້ອງຕົບແຮງໆບາດ
ດຽວໄດ່. ພະລາຊາອະນຸຍາດແລ້ວ."

ເມື່ອໄດ້ຍິນແນວນັ້ນ ເສືອກໍ່ງ້າງຝາມືຂຶ້ນ
ແລະ ຕົບຢ່າງແຮງ ຈົນເຮັດໃຫ້ຮັ້ງຕໍ່ໝຸ່ນ
ແອ໊ບແຍ໊ບ.

ທັນໃດນັ້ນ ກໍ່ມີສຽງຕໍ່ທີ່ໂມໂຫຈຳນວນ
ມະຫາສານບິນມາສຽງດັງທຶມໆ ແລະ ກົ່ງ
ຕີວົງເອົາເຂັ້ມແຫຼມໆຢູ່ກົ້ນທີ່ມີຜິດແທງ
ວົງສູ່ເນື້ອໜັງຂອງຜູ້ບຸກລຸກຢ່າງບ້າຄັ່ງ.

"ອະໂດຣາ, ອະໂດຣາ, ອະໂດຣາ!" ເສືອ
ແຜດສຽງອອກມາຢ່າງແຮງ ຍ້ອນຖືກ



ພວກຕໍ່ໂມໂຫເຫຼົ່ານັ້ນດຽດເປັນພັນໆບ່ອນ. ມັນແລ່ນປົບຕາຍໄປໄວປານຟ້າແມບ. ສຽງຮ້ອງຂອງມັນພາໃຫ້ສັດນ້ອຍໃຫຍ່ທັ້ງຫຼາຍຢ້ານ ຈົນຕັບສັ່ນຂວັນຫາຍ. ໃນທີ່ສຸດ ເສືອກໍ່ມາຮອດແມ່ນ້ຳ. ເສືອຕາຟາງ ມັນຈຶ່ງກະໂດດລົງຫ້ວຍນ້ຳ ຫົວຂອງມັນຍັງເຕັ້ນໄປດ້ວຍຕໍ່ຫຸ້ມດຽດຢູ່.

ໃນທີ່ສຸດ ກະແສນ້ຳທີ່ໄຫຼແຮງຈຶ່ງພັດເອົາຕໍ່ອອກຈາກເສືອໄປຈົນໝົດ. ເສືອນອນຢຽດປ່ອຍຕົວເອງໃຫ້ໄຫຼໄປຕາມກະແສນ້ຳຢ່າງເຈັບປວດ ພ້ອມທັງພະຍາຍາມສູບລົມ ຫາຍໃຈບາດໃຫຍ່ໆ.

ຂະນະນັ້ນ ເສືອກໍ່ໄດ້ໄຫຼໄປຄ້າງຢູ່ໂງ່ນຫີນກາງນ້ຳໃຫຍ່ກ້ອນໜຶ່ງ ມັນຈຶ່ງຄ່ອຍໆຄານຂຶ້ນໄປເທິງໂງ່ນຫີນເພື່ອພັກຜ່ອນ ທັນໃດນັ້ນ ມັນກໍ່ໄດ້ຍິນສຽງຫົວສະອີກສະອ້ອຍ ມັນຈຶ່ງງວາກຊ້າຍງວາກຂວາ ກໍ່ເຫັນກວາງນ້ອຍຫົວຂວັນຈົນໄສ້ຂີດໄສ້ໂຂຢູ່ເທິງຕາຜັ່ງ.

"ບັກກວາງ! ມຶງໜີລອດຈາກກູເທື່ອນີ້ ຍ້ອນກິນອຸບາຍຫຼອກລວງຂອງມຶງ," ເສືອເວົ້າຢ່າງຄຽດຂົ້ມ. "ແຕ່ຖ້າກູພົບມຶງເທື່ອໜ້າ ເບິ່ງເດີ ຈະບໍ່ໃຫ້ມີຄຳວ່າພາດອີກ ມຶງຈະຕ້ອງລົງໄປທາງຮູຄໍ່ຂອງກູແນ່ນອນ ແມ່ນແຕ່ກະດູກກໍ່ບໍ່ໃຫ້ເຫຼືອ."

ເມື່ອກວາງເຊົາຫົວຂວັນ ແລ້ວກໍ່ກະໂດດຢ່ອງໆເຂົ້າໄປໃນປ່າ ພ້ອມທັງຫຼຽວກັບມາ ແລະ ເວົ້າວ່າ: "ເອີ, ອ້າຍໜ້າຂີ້ນເອີຍ ບໍ່ຕ້ອງຜິດຫວັງດອກ ເທື່ອໜ້າເຮົາຊິພະຍາຍາມຄິດຫາແນວມ່ວນໆກວ່ານີ້ອີກ."

ໃນທີ່ສຸດ ມັນກໍ່ຈົບລົງດ້ວຍສຽງກອງກ່ອມນອນຂອງພະລາຊາໂຊໂລມອນທີ່ເຮັດໃຫ້ເສືອລືມບໍ່ລົງ.

ไท

ເຂົ້າຮ່ວມອາຊຽນ: 8 ສິງຫາ 1967

ນະຄອນຫຼວງ: ບາງກອກ

ປະຊາກອນ: 68 ລ້ານ ຄົນ

ເນື້ອທີ່: 513,120 ກມ^2

ຄວາມໜາແໜ້ນ: 130 ຄົນ/ ກມ^2

ອາຍຸປານກາງ: 34.2 ປີ

ສາສະໜາ: ປະຊາຊົນສ່ວນຫຼາຍເປັນຊາວພຸດ. ປະມານ 5% ຖືສາສະໜາມຸດສະລິມ ໂດຍສະເພາະຢູ່ທາງພາກໃຕ້.

ພາສາ: ພາສາໄທ (ເປັນທາງການ). ມີຫຼາຍພາສາຊົນເຜົ່າ. ສ່ວນພາສາອັງກິດ ແມ່ນນຳໃຊ້ໃນບາງກຸ່ມຄົນທີ່ພົວພັນກັບຕ່າງປະເທດ.

ເສດຖະກິດ: ໄທ ເປັນປະເທດສົ່ງເຂົ້າອອກອັນດັບໜຶ່ງຂອງໂລກ. ປະຊາຊົນສ່ວນຫຼາຍເປັນຊາວນາປູກເຂົ້າ. ແຕ່ການຜະລິດສິນຄ້າ ແລະ ການທ່ອງທ່ຽວແມ່ນກຳລັງມີຄວາມສຳຄັນ. ແຜ່ນແພ, ລິດຍົນ ແລະ ອາຫານທະເລ ເປັນສິນຄ້າສົ່ງອອກທີ່ສຳຄັນຂອງໄທ.

ລາຍໄດ້ຕໍ່ຄົນ: $3,760 (US)

ລາຍໄດ້ປຽບທຽບຕໍ່ຄົນ: $8,700 (US)

ລະດັບລາຍໄດ້ປຽບທຽບ: 118

ສຳປະສິດຈີນີ: 43



by Tevaprapas Makklay CC-BY-SA 3.0

ไท

ນັກຟ້ອນໄທກຳລັງສະແດງບົດຟ້ອນພື້ນເມືອງຢູ່ວັດໃນປະເທດໄທ.

ປະຫວັດສາດ

ສະໄໝກ່ອນ ປະເທດໄທ ກໍ່ຄືປະເທດອື່ນສ່ວນຫຼາຍໃນເອເຊຍຕາເວັນອອກສ່ຽງໃຕ້ຄືເປັນບ້ານຂອງຫຼາຍເຜົ່າທີ່ແຕກຕ່າງກັນ. ໃນບັນດາຜູ້ທີ່ມາອາໄສຢູ່ຕົ້ນໆນັ້ນແມ່ນເຜົ່າໄຕ ເຊິ່ງເປັນເຜົ່າທີ່ໄດ້ອົບພະຍົບມາຈາກທາງພາກໃຕ້ຂອງຈີນ ພວກເຂົາເຂົ້າມາດິນແດນທີ່ປະຈຸບັນເປັນປະເທດລາວ, ຫວຽດນາມ ແລະ ໄທ. ເຜົ່າໄຕນຳໃຊ້ລະບົບການເມືອງຄືກັນກັບລະບົບທີ່ພວກເຂົາມີໃນປະຈຸບັນຄື ມີຫຼາຍບ້ານປະກອບເປັນເມືອງ ເຊິ່ງເຮັດໃຫ້ພວກເຂົາມີອຳນາດຍິ່ງໃຫຍ່ຂຶ້ນ.

ເຜົ່າຂະເໝນມາຈາກກຳປູເຈຍ ໃນທາງຕາເວັນອອກ. ເຜົ່າມອນມາຈາກມຽນມ້າທາງຕາເວັນຕົກ. ພວກເຂົາເປັນຊາວພຸດ ແລະໄດ້ນຳເອົາສາສະໜາມາພ້ອມກັບພວກເຂົາ.

ອານາຈັກໄທກໍ່ຕັ້ວຂຶ້ນໃນສະຕະວັດທີ 13 ເຊິ່ງມີສູນກາງປົກຄອງຢູ່ສຸ



ອ່າວທະເລໃນປະເທດໄທແມ່ນເຕັມໄປດ້ວຍໝູ່ເກາະຫີນປູນຕ່າງໆ. ແຕ່ກ່ອນ, ທັງໝົດໃນຂົງເຂດນີ້ແມ່ນເຂດພູສູງ. ແມ່ນ້ຳໄດ້ກັດເຊາະໃສ່ຫີນສ່ວນໃຫຍ່ຈົນຫາຍ ໂດຍປະໃຫ້ເຫັນເປັນຮູບໂງ່ນຫີນສູງໆສອງສາມແຫ່ງ. ຄື້ນນ້ຳໄດ້ກັດເຊາະສ່ວນຕີນຂອງໂງ່ນຫີນນີ້ໄວກວ່າສ່ວນເທິງ.

ຈາລະຈອນແອອັດ

ເມື່ອຖະໜົນສາຍຕ່າງໆໃນບາງກອກເລີ່ມແອອັດ ທາງລັດຖະບານໄດ້ສ້າງຖະໜົນເພີ່ມ. ແຕ່ປະຊາຊົນພັດຊື້ລົດຍົນເພີ່ມຂຶ້ນ ແລະ ຍິ່ງເຮັດໃຫ້ບັນຫາຮ້າຍແຮງໄປກວ່າເກົ່າ.

ໃນປີ 1999 ໄດ້ມີການສ້າງລະບົບຂົນສົ່ງສາທາລະນະຂຶ້ນ. ລົດໄຟຟ້າດັ່ງກ່າວນີ້ ໄດ້ເຄື່ອນຍ້າຍຜູ້ຄົນນັບເຄິ່ງລ້ານໄປມາຢ່າງວ່ອງໄວ ແລະ ສະດວກຂຶ້ນ. ແຕ່ກໍ່ຍັງມີອີກຫຼາຍພື້ນທີ່ ທີ່ລົດໄຟໄປບໍ່ເຖິງ.





Ahoerstemeier CC-BY-SA 3.0





Tevaprapas Makklay CC-BY-3.0

ປະເທດໄທເຄີຍມີເມືອງໜວງເຖິງສາມແຫ່ງດ້ວຍກັນ. ສຸໂຂໄທ (ຮູບເທິງ), ຕໍ່ມາແມ່ນອະຍຸທະຍາ (ຮູບກາງ). ກອງທັບຈາກປະເທດມຽນມ້າໄດ້ເຂົ້າຮຸກຮານ ແລະ ທຳລາຍອະຍຸທະຍາໃນປີ 1767. ເມືອງໜວງຈຶ່ງໄດ້ຍ້າຍໄປຢູ່ທາງພາກໃຕ້ ທຳອິດແມ່ນຢູ່ຊົນບູຣີ, ຕໍ່ມາ ກໍ່ໄດ້ຍ້າຍຂ້າມແມ່ນ້ຳມາຫາບາງກອກ (ຮູບລຸ່ມ).

ໂຂໄທ ຢູ່ລະຫວ່າງກາງຈາກບາງກອກ ຫາຊຽງໃໝ່. ນະຄອນໜວງເຄື່ອນຍ້າຍໜາຍເທື່ອ ແລະໃນທີ່ສຸດກໍ່ມາຕັ້ງຢູ່ບາງກອກ.

ອານາຈັກໜຶ່ງອີກເຊິ່ງເອີ້ນວ່າ ລ້ານນາ ກໍ່ຕັ້ວຂຶ້ນທາງພາກເໜືອ ໂດຍມີສູນກາງປົກຄອງຢູ່ຊຽງໃໝ່. ລ້ານນາໄດ້ເຕີບໃຫຍ່ຈົນກາຍເປັນອານາຈັກ ແລະ ທັງເປັນສູນກາງຂອງການສຶກສາສາສະໜາພຸດ ແລະ ວັນນະຄະດີ.

ເກືອບຕະຫຼອດໄລຍະດັ່ງກ່າວນີ້ ຊາຍແດນຂອງໄທ ບໍ່ແນ່ນອນ ແລະ ມັກຈະມີການປ່ຽນແປງ. ຖະໜົນຢູ່ໃນສະພາບກັນດານ ແລະ ການທ່ອງທ່ຽວເປັນເລື່ອງຍາກລຳບາກ. ກະສັດຢູ່ສູນກາງອານາຈັກ ເກັບພາສີຈາກແຄ້ວຕ່າງໆ ແລະຕາບໃດທີ່ແຄ້ວຕ່າງໆເຫຼົ່ານັ້ນຍັງຈ່າຍພາສີ ພວກເຂົາຈະຖືກອະນຸຍາດໃຫ້ເຮັດຫຍັງກໍ່ໄດ້ຕາມໃຈມັກ.

ເມື່ອບັນດາປະເທດເອີຣົບເລີ່ມຕົ້ນຍຶດເອົາຫົວເມືອງຂຶ້ນໃນເອເຊຍ ພວກເຂົາກໍ່ໃຊ້ປະໂຫຍດຈາກສະຖານະການນີ້. ຝຣັ່ງຍຶດດິນແດນທາງພາກເໜືອ ແລະ ຕາເວັນອອກ. ອັງກິດຍຶດແຫຼມທາງໃຕ້ເປັນສ່ວນຫຼາຍ. ຄົນໄທເລີ່ມຕົ້ນກຳນົດ ແລະ ປ້ອງກັນເຂດແດນຂອງຕົນ. ແຕ່ໄທໄດ້ສູນເສຍດິນແດນໄປ 1/3 ຂອງອານາເຂດທັງໝົດ.


ແນວໃດກໍ່ຕາມ ໄທກໍ່ບໍ່ຍອມເປັນຫົວເມືອງຂຶ້ນ ເຊິ່ງບໍ່ຄືກັນກັບປະເທດເພື່ອນບ້ານ. ໄທເປັນພຽງປະເທດດຽວໃນເອເຊຍຕາເວັນອອກສ່ຽງໃຕ້ທີ່ບໍ່ເຄີຍເປັນຫົວເມືອງຂຶ້ນຂອງປະເທດເອີຣົບ. ກະສັດມີອຳນາດສູງສຸດຈົນມາ

ຕົ້ນກຳເນີດຂອງເຜົ່າລີຊູ

ຍິງຄົນນີ້ແມ່ນມາຈາກເຜົ່າລີຊູ, ໜຶ່ງໃນຫົກຊົນເຜົ່າພູດອຍທີ່ໃຫຍ່ທີ່ສຸດໃນປະເທດໄທ. ຄົນລີຊູຈະໃຊ້ບົດເພງ ເພື່ອເລົ່າຕໍ່ເລື່ອງລາວປະຫວັດສາດຕ່າງໆຈາກຄົນລຸ້ນໜຶ່ງໄປສູ່ຄົນອີກລຸ້ນໜຶ່ງ.

ຕາມເລື່ອງເລົ່າເລື່ອງໜຶ່ງຂອງຊາວລີຊູ, ເຜົ່າຂອງເຂົາເຈົ້າເກີດຂຶ້ນຫຼັງຈາກເຫດການນ້ຳຖ້ວມໂລກຄັ້ງໃຫຍ່ໄດ້ຜ່ານພົ້ນໄປ ເຊິ່ງໄດ້ຂ້າຄົນໝົດໂລກຍົກເວັ້ນສອງຄົນ: ຄືຜູ້ເປັນອ້າຍ ກັບນ້ອງສາວ. ພວກເຂົາເຈົ້າຮູ້ວ່າຕົນເອງຕ້ອງໄດ້ສືບພັນຮ່ວມກັນ ຖ້າບໍ່ເຊັ່ນນັ້ນ ມະນຸດກໍ່ຈະສູນພັນໄປຈາກແຜ່ນດິນໂລກນີ້ ແຕ່ຍ້ອນພວກເຂົາເປັນອ້າຍນ້ອງກັນ ອັນເຮັດໃຫ້ພວກເຂົາຮູ້ສຶກວ່າຕົນເອງບໍ່ຄວນເຮັດເຊັ່ນນັ້ນ.

ຝ່າຍດວງວິນຍານທັງຫຼາຍຈຶ່ງໄດ້ສະແດງໃຫ້ພວກເຂົາເຫັນສາກ ກັບ ຄົກວາງຢູ່ເທິງຍອດພູດອຍ. ດວງວິນຍານເຫຼົ່ານີ້ໄດ້ບອກພວກເຂົາໃຫ້ກິ້ງສາກລົງຈາກພູເບື້ອງໜຶ່ງ ແລະ ໃຫ້ກິ້ງຄົກລົງຈາກພູເບື້ອງກົງກັນຂ້າມ.




Steve Evans, CC-BY-2.0

ທັງສອງອ້າຍ-ນ້ອງກໍ່ໄດ້ເຮັດຕາມທີ່ດວງວິນຍານໄດ້ບອກຕົນ. ເມື່ອກິ້ງລົງໄປຮອດຕີນພູແລ້ວ, ສາກກໍ່ຍັງກິ້ງໄປຕໍ່ອີກ. ມັນກິ້ງອ້ອມຕີນພູ ແລ້ວກັບມາຫາຄົກອີກຄືເກົ່າ. ທັງສອງຄົນຈຶ່ງເຂົ້າໃຈແລ້ວວ່າ ອັນນີ້ແມ່ນສັນຍານບອກໃຫ້ພວກເຂົາສົມສູ່ກັນ ເພື່ອສືບເຊື້ອສາຍຕໍ່ໄປ. ພວກເຂົາຈຶ່ງເຮັດຕາມນັ້ນ ແລ້ວເຜົ່າລີຊູກໍ່ເກີດຂຶ້ນ.


ຮອດ ປີ 1932. ຫຼັງຈາກນັ້ນ ກະສັດຍັງຄົງເປັນປະມຸກຂອງລັດ ແຕ່ມີອຳນາດຈຳກັດ ແລະ ພະນັກງານລັດທີ່ໄດ້ຜ່ານການເລືອກຕັ້ງມີອຳນາດໃນການບໍລິຫານປະເທດຫຼາຍກວ່າ. ໄດ້ມີການກໍ່ລັດຖະປະຫານຂຶ້ນຫຼາຍຄັ້ງ ແຕ່ປະເທດກໍ່ກ້າວໜ້າຫາປະຊາທິປະໄຕ ແລະ ມີສະຖຽນລະພາບຫຼາຍຂຶ້ນ.

ປະເທດໄທນຳໃຊ້ປະຕິທິນສາສະໜາພຸດ ເຊິ່ງເລີ່ມນັບຕັ້ງແຕ່ພະພຸດທະເຈົ້າປະລິນິພານ. ຖ້າເອົາປີທີ່ໄທໃຊ້ ລົບ 543 ກໍ່ຈະໄດ້ປີ ຄ.ສ ທີ່ພວກເຮົານິຍົມໃຊ້ທົ່ວໄປ. ຕົວຢ່າງ ປີ ພ.ສ 2553 ແມ່ນ ປີ ຄ.ສ 2010.



ນັກແຕ້ມໄທຄົນນີ້ກຳລັງລອກແບບຮູບແຕ້ມທີ່ມີຊື່ສຽງ ເຊິ່ງລາວສາມາດຂາຍຮູບລອກແບບນີ້ໃຫ້ນັກທ່ອງທ່ຽວເປັນເງິນ 3,500,000ກີບ.

ເປັນຫຍັງນົກສາລິກາຈຶ່ງ ສຈບຄວາມຄົບ



ນິທານເລື່ອງນີ້ ນິຍົມກັນເລົ່າຢູ່ຫຼາຍປະເທດ ລວມທັງລາວ ແລະ ໄທ. ສ່ວນວິທີການເລົ່າແມ່ນມີຄວາມແຕກຕ່າງກັນໃນແຕ່ລະທ້ອງຖິ່ນ.

ດົນນານມາແລ້ວ ຄົນເຮົາ
ຈັບນົກແຂກເຕົ້າມາລ້ຽງ
ເພາະສາມາດສອນພາສາຄົນ
ໃຫ້ມັນໄດ້. ມັນບໍ່ພຽງແຕ່ເວົ້າ
ພາສາຄົນຕາມຫຼັງຄຳເວົ້າ
ຂອງເຈົ້າຂອງເທົ່ານັ້ນ ແຕ່ມັນ
ຍັງສາມາດສະແດງຄວາມຄິດ
ຂອງຕົວເອງອອກມາ.

ຄັ້ງໜຶ່ງ ຊາຍຄົນໜຶ່ງລ້ຽງ
ນົກແຂກເຕົ້າລາວໄປລັກ
ຄວາຍຂອງເພື່ອນບ້ານ ແລ້ວ
ຂ້າຄວາຍໂຕນັ້ນ. ຊາຍຄົນນັ້ນ
ເອົາຊີ້ນຄວາຍຈຳນວນໜຶ່ງມາ
ແຕ່ງກິນ ສ່ວນທີ່ເຫຼືອລາວ
ແບ່ງເປັນສອງພູດ. ລາວເຊື່ອງ
ພູດໜຶ່ງໄວ້ໃນເລົ້າເຂົ້າ ສ່ວນ
ອີກພູດໜຶ່ງເຊື່ອງໄວ້ຫຼັງເລົ້າ
ເຂົ້າ.

ມື້ຕໍ່ມາ ເພື່ອນບ້ານໄດ້ມາ
ຊອກຫາຄວາຍ ແລະໄດ້ຖາມ
ຊາຍຄົນນັ້ນວ່າ "ເຫັນຄວາຍ
ຂອງຂ້ອຍບໍ?"

"ບໍ່," ຊາຍຄົນນັ້ນຕອບ,
"ຂ້ອຍບໍ່ເຫັນ."

ແຕ່ນົກແຂກເຕົ້າຮ້ອງ
ອອກມາວ່າ, "ລາວຂ້າມັນ
ແລ້ວເອົາພູດໜຶ່ງໄວ້ໃນເລົ້າ
ເຂົ້າ ແລະລາວເອົາອີກພູດໜຶ່ງ
ໄວ້ຫຼັງເລົ້າເຂົ້າ."

ເພື່ອນບ້ານຊອກຄົ້ນຫາ
ຕາມບ່ອນທີ່ນົກບອກ ຈຶ່ງພົບ
ຊີ້ນຄວາຍທີ່ຖືກເຊື່ອງໄວ້ຕາມ
ທີ່ນົກແຂກເຕົ້າເວົ້າ.

"ຂ້ອຍບໍ່ໄດ້ລັກຄວາຍເຈົ້າ,"
ຊາຍຄົນນັ້ນປະຕິເສດ.

ແຕ່ນົກແຂກເຕົ້າເວົ້າແລ້ວ



ເວົ້າອີກວ່າ, “ລາວຂ້າມັນ ແລ້ວ ເອົາພູດໜຶ່ງໄວ້ໃນເວົ້າເຂົ້າ ສ່ວນອີກພູດໜຶ່ງລາວເອົາໄວ້ ຫຼັງເວົ້າເຂົ້າ.” ເມື່ອບໍ່ສາມາດ ເວົ້າໄດ້ວ່າອັນໃດແມ່ນ ອັນໃດ ບໍ່ແມ່ນ ພວກເຂົາກໍ່ເວີຍໄປ ຫາສານຕັດສິນ. ສານຕັດສິນ ວ່າ ຊາຍຄົນນັ້ນຈະຕ້ອງຖືກ ໄຕ່ສວນ.

ຄືນກ່ອນການໄຕ່ສວນ ຊາຍຂີ້ລັກໄດ້ເອົານົກແຂກ ເຕົ້າຍັດໃສ່ໃນໄຫ. ຫຼັງຈາກ ນັ້ນ ລາວກໍ່ອັດປາກໄຫດ້ວຍ ຜ້າແພ ແລ້ວປະໃຫ້ນົກນອນ ຢູ່ໃນນັ້ນ. ເມື່ອຮອດຕອນຄືນ ຊາຍຂີ້ລັກກໍ່ຕົບໄຫຄ່ອຍໆໃຫ້ ເກີດສຽງນັ້ນຄື ສຽງຝ້າຮ້ອງ. ຂະນະດຽວກັນ ລາວກໍ່ເອົານ້ຳ ຍ້ອຍວີ່ງໃສ່ຜ້າແພ ເພື່ອໃຫ້ ເກີດສຽງຄື ຝົນຕົກໜັກຄືນ ຊາຍຄົນນັ້ນເຮັດຝົນຕົກ ແລະ ຝ້າຮ້ອງເຖິງແມ່ນວ່າທ້ອງຟ້າ ທາງນອກຈະປອດໂປ່ງ ແລະ ເດືອນແຈ້ງສະຫວ່າງຢູ່.

ເຊົ້າມື້ຕ່ໍມາຊາຍຂີ້ລັກນຳ ເອົານົກແຂກເຕົ້າອອກຈາກ ໄຫ ແລ້ວເອົາມັນໃສ່ຖົງ ຈາກ ນັ້ນ ລາວກໍ່ພາມັນໄປຂຶ້ນສານ ເພື່ອໄຕ່ສວນ.

ເມື່ອນົກແຂກເຕົ້າຖືກເອີ້ນ ໄປໃຫ້ປາກຄຳ ມັນກໍ່ເວົ້າຄື ເຄີຍເວົ້າມາ, “ລາວຂ້າມັນ ແລ້ວເອົາພູດໜຶ່ງໄວ້ໃນເວົ້າ ເຂົ້າ ອີກພູດໜຶ່ງໄວ້ຫຼັງເວົ້າ ເຂົ້າ.”

ຄົນໝົດສານເຊື່ອຄວາມ ນົກແຂກເຕົ້າ.

ແຕ່ຊາຍຄົນນັ້ນຮ້ອງໃຫ້ ຂຶ້ນ. “ພວກເຈົ້າຈະໃສ່ໂທດ ຂ້ອຍຍ້ອນເຊື່ອຄວາມເວົ້ານົກ

ຫັ້ນບໍ?" ຄຳເວົ້າຄົນຄວນຈະມີ
ນ້ຳໜັກກວ່າບໍ່ແມ່ນຫວ່າ?
ຖາມນົກເລື່ອງອື່ນເບິ່ງແມ້?
ຖາມມັນເບິ່ງວ່າມື້ຄືນນີ້ເປັນ
ແນວໃດ?"

ຈາກນັ້ນ ພວກເຂົາກໍ່ຖາມ
ນົກ. ເມື່ອນົກຖືກຖາມ ມັນກໍ່
ລະນຶກໄດ້ເຖິງຄືນທີ່ຜ່ານມາ
ມັນເວີຍເວົ້າວ່າ, "ຝ່າຮ້ອງລັ່ນ
ໝົດຄືນ ແລ້ວຝົນກໍ່ຕົກ."

ແລ້ວຜູ້ຄົນກໍ່ພາກັນຮ້ອງ
ຂຶ້ນ, "ແມ່ນແທ້, ນົກໂຕນີ້ເຊື່ອ
ບໍ່ໄດ້! ມັນຊິມີຈັກເທື່ອວ່າ ຈະມີ
ລົມພາຍຸໃນກາງລະດູແລ້ງ ໃນ
ຄືນເດືອນແຈ້ງປານເປັນກາງ
ເວັນ. ຄວາມຜິດພາດຂອງມັນ
ເປັນອັນຕະລາຍແກ່ຊີວິດຜູ້ບໍ
ລິສຸດ. ຈາກນີ້ຕໍ່ໄປບໍ່ໃຫ້ຄົນ
ຈັບນົກແຂກຕໍ້າມາລ້ຽງອີກ."

ເມື່ອເປັນແນວນັ້ນ ຊາຍຂີ້
ລັກກໍ່ຖືກປ່ອຍຕົວໃຫ້ເປັນອິດ
ສະລະ ເພາະບໍ່ມີຫຼັກຖານພະ
ຍານອື່ນໃດຈະເອົາຜິດລາວ
ນອກຈາກຄຳເວົ້າຂອງນົກ.

ນົກແຂກຕໍ້າຖືກປ່ອຍເຂົ້າ
ປ່າໃຫ້ຫາລ້ຽງຕົວເອງ ແລະ
ຈະບໍ່ຖືກເບິ່ງແຍງໂດຍມະນຸດ
ອີກ.

ໜຶ່ງປີ ພາຍຫຼັງທີ່ໄດ້ດຳລົງ
ຊີວິດດັ່ງນົກປ່າ ນົກແຂກຕໍ້າ
ໄດ້ເຫັນນົກສາລິກາທີ່ມີຂົນດຳ
ແລະສີຄຳອັນງົດງາມ ແລ້ວ
ມັນຈຶ່ງຖາມນົກເຄົ້າ ແລະ
ກາວ່າ ທີ່ມັນເຫັນແມ່ນນົກ
ຫຍັງ? ແລ້ວນົກເຄົ້າ ແລະກາ
ກໍ່ຕອບວ່າ ມັນແມ່ນນົກທີ່ມີ
ຂົນອັນງົດງາມຈາກຕ່າງຖິ່ນ
ແລະມັນຍັງສາມາດເວົ້າພາສາ
ຄົນໄດ້.


"ພວກເຮົາຈະຕ້ອງເຕືອນ
ມັນໄດ!" ນົກແຂກຕໍ້າເວົ້າ.
ຈາກນັ້ນ ພວກມັນກໍ່ພາກັນໄປ
ຫາຜູ້ງົດງາມຈາກຕ່າງຖິ່ນ.
ເມື່ອພວກມັນມາພ້ຳກັນ ນົກ
ແຂກຕໍ້າກໍ່ຮ້ອງອອກມາວ່າ,





"ພວກເຮົາມາທັກທາຍ ແລະ ບອກກ່າວພູມປັນຍາຂອງ ພວກເຮົາໃຫ້ເຈົ້າຟັງ ເພາະ ເຈົ້າເປັນຜູ້ຕ່າງຖິ່ນໃນດິນ ແດນຂອງພວກເຮົາ. ມີຜູ້ ເວົ້າວ່າ ເຈົ້າເວົ້າພາສາຄົນໄດ້. ຂ້ອຍກໍ່ເວົ້າໄດ້ຄືກັນ. ຄັ້ງໜຶ່ງ ຂ້ອຍເຄີຍຖືກນຳໄປວ້ຽງໂດຍ ຊາຍຄົນໜຶ່ງ, ບໍ່ພຽງແຕ່ ຂ້ອຍສາມາດເວົ້າພາສາຂອງ ຄົນໄດ້ ຂ້ອຍຍັງສະແດງຄວາມ ຄິດຂອງຂ້ອຍໄດ້ອີກ ແລະ ດ້ວຍເຫດຜົນນີ້ ຈຶ່ງເຮັດໃຫ້ ຊາຍຄົນນັ້ນໃຈຮ້າຍ. ດັ່ງນັ້ນ ຂ້ອຍຈຶ່ງຖືກລົງໂທດຢ່າງປ່າ ເຖື່ອນ ແລະຖືກຂັບໄລ່ອອກ ຈາກເຮືອນຂອງມະນຸດ. ສະ ນັ້ນ ມື້ນີ້ພວກເຮົາຈຶ່ງມາເພື່ອ ເຕືອນເຈົ້າວ່າ ເມື່ອຄົນໄດ້ຍິນ ສຽງຂອງເຈົ້າ ເຂົາຈະຈັບເຈົ້າ ແລະເອົາເຈົ້າໄປວ້ຽງໄວ້ເຮືອນ ແລະແນ່ນອນ ເຈົ້າບໍ່ຄວນເວົ້າ ແນວອື່ນ ນອກເໜືອໄປຈາກ ສິ່ງທີ່ເຂົາສອນເຈົ້າເທົ່ານັ້ນ. ຖ້າເຈົ້າສະແດງຄວາມຄິດຂອງ ເຈົ້າອອກມາ ເຈົ້າຈະຖືກໄລ່ ອອກຈາກເຮືອນຄືກັນກັບ ຂ້ອຍ. ສິ່ງທີ່ມະນຸດໃສ່ໃຈບໍ່ ແມ່ນຄວາມຈິງ ຫຼື ພູມປັນຍາ ຂອງສິ່ງອື່ນດອກ ເຂົາຢາກໄດ້ ຍິນພຽງຄຳເວົ້າຈາກຄວາມ ຄິດຂອງຕົນເອງຊ້ຳໄປຊ້ຳມາ ເທົ່ານັ້ນ."

ຈາກນັ້ນ ມະນຸດກໍ່ໄດ້ຍິນ ສຽງທີ່ອອກມາຈາກລົ້ນຂອງ ນົກສາລິກາ ແລະພວກເຂົາກໍ່ ຈັບມັນມາວ້ຽງໃນເຮືອນ. ເນື່ອງຈາກວ່າ ນົກສາລິກາຈື່ ຄຳເຕືອນຂອງນົກແຂກເຕົ້າ ໄດ້ ມັນຈຶ່ງບໍ່ຍອມສະແດງ ຄວາມຄິດຂອງມັນອອກມາ ຢ່າງເດັດຂາດ ມັນພຽງສອນ ຄວາມຄົນເທົ່ານັ້ນ.



ອິນໂດເນເຊຍ

ເຂົ້າຮ່ວມອາຊຽນ: 8 ສິງຫາ 1967

ນະຄອນຫຼວງ: ຈາກາຕາ

ປະຊາກອນ: 240 ລ້ານ ຄົນ

ເນື້ອທີ່: 1,919,000 ກມ^2

ຄວາມໜາແໜ້ນ: 130 ຄົນ/ກມ^2

ອາຍຸປານກາງ: 28.2 ປີ

ສາສະໜາ: ປະມານ 80% ເປັນຊາວມຸດສະລິມ, 10% ເປັນຊາວຄິສຕຽນ ແລະ ເປັນຊາວພຸດມີພຽງໜ້ອຍດຽວເທົ່ານັ້ນ.

ພາສາ: ພາສາອິນໂດເນເຊຍ ຄ້າຍຄືກັບພາສາ ມາເລ ເຊິ່ງເປັນທາງການ. ຄົນສ່ວນຫຼາຍເວົ້າພາສາໜຶ່ງໃນ 3,000 ພາສາຊົນເຜົ່າຂອງປະເທດ ແລະ ຮຽນພາສາອິນໂດເນເຊຍ ເປັນພາສາທີສອງຂອງພວກເຂົາ.

ເສດຖະກິດ: ອິນໂດເນເຊຍ ມີເສດຖະກິດໃຫຍ່ທີ່ສຸດໃນກຸ່ມອາຊຽນ ເຊິ່ງໄດ້ຮັບຄວາມເສຍຫາຍຫຼາຍກວ່າປະເທດອື່ນໆ ໃນວິກິດການການເງິນເອເຊຍໃນປີ 1997-1998. ແຕ່ປະຈຸບັນນີ້ ເສດຖະກິດແມ່ນເຕີບໂຕຢ່າງໝັ້ນຄົງອີກຄັ້ງ ເຊິ່ງສາມາດສົ່ງນ້ຳມັນ, ການສຳມະຊາດ, ຢາງ ແລະ ໄມ້ອອກເປັນຈຳນວນຫຼວງຫຼາຍ.

ລາຍໄດ້ຕໍ່ຄົນ: $2,230 (US)

ລາຍໄດ້ປຽບທຽບຕໍ່ຄົນ: $4,300 (US)

ລະດັບລາຍໄດ້ປຽບທຽບ: 156

ສຳປະສິດຈີນີ: 37

by Gunkarta Gunawan Kartapranata CC-BY-SA 3.0


ອິນໂດເນເຊຍ



ພູມີປະເທດ

ອິນໂດເນເຊຍເປັນປະເທດທີ່ມີພົນລະເມືອງຫຼາຍເປັນອັນດັບ 4 ຂອງ ໂລກ. ມີພຽງແຕ່ປະເທດຈີນ, ອິນເດຍ ແລະ ສະຫະລັດອາເມຣິກາເທົ່ານັ້ນ ທີ່ມີພົນລະເມືອງຫຼາຍກວ່າ. ຄົນອິນໂດເນເຊຍອາໄສຢູ່ແບບກະແຈກກະ ຈາຍບົນ 4 ເກາະໃຫຍ່ ແລະ ອີກ 15,000 ເກາະນ້ອຍ. ຈາກສົ້ນສຸດທາງ ຕາເວັນອອກຂອງປະເທດຫາສົ້ນສຸດທາງຕາເວັນຕົກ ອິນໂດເນເຊຍ ມີ ຄວາມກ້ວາງ 5,100 ກມ. ຈາກທິດເໜືອຫາໃຕ້ ກ້ວາງ 1,800 ກມ. ພື້ນ ທີ່ເຫຼົ່ານັ້ນສ່ວນຫຼາຍເປັນນ້ຳ ບໍ່ແມ່ນທີ່ດິນ ແຕ່ອິນໂດເນເຊຍກໍ່ຍັງຄົງໃຫຍ່ ກວ່າປະເທດອື່ນໃນກຸ່ມອາຊຽນ. ມີເນື້ອທີ່ທຽບເທົ່າປະເທດລາວ, ກຳປູ ເຈຍ, ຫວຽດນາມ, ໄທ ແລະ ມຽນມ້ານາຮວມກັນ.

ເພາະວ່ານັ້ນໃຫຍ່ຫຼາຍ ເຊິ່ງປະກອບດ້ວຍເກາະທີ່ແຍກຈາກກັນຫຼາຍ ຮ້ອຍເກາະ ແລະ ຫຼາຍບ້ານກະແຈກກະຈາຍໄປຕາມຮ່ອມພູຜາ ສະນັ້ນ ຈຶ່ງມີຫຼາຍວັດທະນະທຳໄດ້ພັດທະນາຂຶ້ນໃນອິນໂດເນເຊຍ ເຊິ່ງມີຊົນເຜົ່າ ທີ່ແຕກຕ່າງກັນເຖິງ 300 ຊົນເຜົ່າ ແລະ ໃຊ້ພາສາເຖິງ 250 ພາສາ.



frank wouters CC-BY 2.0

ອະນຸສອນສະຖານບູຮານແຫ່ງ ໂບໂຣບູດົວແມ່ນວິຫານສາສະ ໜາພຸດທີ່ໃຫຍ່ທີ່ສຸດໃນໂລກ ແລະ ເປັນສະຖານທີ່ທ່ອງທ່ຽວ ອັນດັບ 1 ໃນອິນໂດເນເຊຍ. ມັນ ມີຄວາມເກົ່າແກ່ປະມານ 1200 ປີ. ໂບໂຣບູດົວ ຖືກສ້າງຂຶ້ນ 9 ຊັ້ນ ແລະ ມີທາງຍ່າງອ້ອມຮອບ ແຕ່ລະຊັ້ນ. ພະສິ່ງທີ່ເຫັນຢູ່ນີ້ ແມ່ນກຳລັງນະມັດສະການຢູ່ຊັ້ນ ເທິງສຸດ.



by Flydime CC-BY-3.0



by Christopher CC-BY-SA 3.0

ໜັງຕຸກກະຕາ

ເປັນເວລາຫຼາຍຮ້ອຍປີແລ້ວ ທີ່ໜັງຕຸກກະຕາ (ເຄື່ອງເຊີດ) ໄດ້ໃຫ້ຄວາມບັນເທີງແກ່ຄົນອິນໂດເນເຊຍ. ເຄື່ອງເຊີດເງົາ ດັ່ງທີ່ເຫັນຢູ່ນີ້ ແມ່ນເປັນທີ່ນິຍົມໃນເກາະຊາວາ ແລະ ບາລີ. ຕຸກກະຕາທີ່ດີທີ່ສຸດແມ່ນຜະລິດຈາກໜັງຄວາຍ. ຕຸກກະຕາແຕ່ລະໂຕຈະຖືກເຊີດຂຶ້ນໂດຍມີໄມ້ສາມທ່ອນທີ່ເຮັດຈາກເຂົາຄວາຍ ຫຼື ໄມ້ໄຜ່ເປັນໂຕຊ່ວຍ.



ປະຫວັດສາດ


ຢ່າງໜ້ອຍກໍ່ 4,000 ປີ ຜ່ານມາແລ້ວ ທີ່ມີຄົນອາໄສຢູ່ໃນເກາະເຫຼົ່ານີ້. ພວກເຂົາປູກເຂົ້າ, ສ້າງບ້ານ ແລະ ເລີ່ມຄ້າຂາຍກັບອິນເດຍ ແລະ ຈີນ.

ໃນສະຕະວັດທີ 7 ອິນໂດເນເຊຍກາຍເປັນອານາຈັກແຫ່ງການຄ້າທີ່ຊົງອຳນາດ. ຄົນສ່ວນຫຼາຍເຊື່ອຖືສາສະໜາພຸດ ແລະ ຮິນດູ. ພວກເຂົາສ້າງໂບໂຣບູດົວ ເຊິ່ງເປັນອະນຸສາວະລີທາງສາສະໜາພຸດທີ່ໃຫຍ່ທີ່ສຸດໃນໂລກ ບົນເກາະຊາວາ ແລະ ໄດ້ຄ້າຂາຍກັບປະເທດອື່ນໃນເອເຊຍຕາເວັນອອກສ່ຽງໃຕ້.

ຈາກນັ້ນ ຊາວຄ້າຂາຍຮິນດູກໍ່ມາຮອດ ແລະໄດ້ສ້າງອານາຈັກໃໝ່ຂຶ້ນບົນເກາະອີກແຫ່ງໜຶ່ງ ຄື ເກາະ ສຸມາດຕຣາ. ອິດທິພົນຂອງພວກເຂົາແຜ່ຂະຫຍາຍອອກ. ປະຈຸບັນນີ້ ຄົນສ່ວນຫຼາຍໃນອິນໂດເນເຊຍແມ່ນຊາວມຸດສະລິມ.

ເມື່ອເອີຣົບເລີ່ມຊົງອຳນາດ ຊາວຄ້າຂາຍເອີຣົບຕ້ອງການເຄື່ອງເທດທີ່ເຕີບໃຫຍ່ໄດ້ດີໃນພູມອາກາດຂອງອິນໂດເນເຊຍ. ປອກຕຸຍການ, ອັງກິດ, ແລະ ໂຮນລັງ ທັງໝົດພະຍາຍາມຄອບຄອງອິນໂດເນເຊຍ. ໂຮນລັງເຮັດສຳເລັດ ແລະ ອິນໂດເນເຊຍກໍ່ກາຍມາເປັນເມືອງຂຶ້ນຂອງໂຮນລັງ.


ໃນປີ 1945 ເມື່ອສົງຄາມໂລກຄັ້ງທີ II ສິ້ນສຸດລົງ ໂຮນລັງພະຍາຍາມ



ເມື່ອສອງພັນປີມາແລ້ວ ພໍ່ຄ້າຊາວອິນໂດເນເຊຍໄດ້ແລ່ນເຮືອໄປຍັງທະວີບອາຟຣິກາ. ພວກເຂົາເປັນນັກເດີນເຮືອທີ່ມີຄວາມສາມາດ. ຮູບພາບນີ້ແມ່ນເຮືອລຳໜຶ່ງທີ່ແກະສະຫຼັກຢູ່ຝາວັດໂບໂຣບູດົວປະມານປີ 800.

ນັກລ່າຫົວແຫ່ງເກາະບໍນີໂອ

ດົນນານມາແລ້ວ ຄົນດາຢັກທີ່ຢູ່ເທິງເກາະບໍນີໂອ ເຄີຍເປັນພວກລ່າຫົວມະນຸດ. ພວກເຂົາຈະຕັດ ແລະ ສະສົມຫົວຂອງ ພວກສັດຕູ. ຄົນ ສ່ວນໃຫຍ່ແມ່ນ ໄດ້ຍົກເລີກ ການປະຕິບັດ ດັ່ງກ່າວແລ້ວ ແຕ່ພວກເຂົາກໍ່ ຍັງຖືວ່າເປັນນັກສູ ທີ່ໂຫດຢູ່.



ໃນລະຫວ່າງສົງຄາມໂລກ ຄັ້ງທີ II ເມື່ອຍີ່ປຸ່ນໄດ້ຢຶດຄອງອິນໂດເນ ເຊຍ ພວກເຂົາໄດ້ປະຕິບັດຕໍ່ຄົນທ້ອງຖິ່ນຢ່າງໂຫດ ຮ້າຍ. ສະນັ້ນ ຈຶ່ງເກີດມີການລວມຕົວກັນຂອງນັກຮົບ ດາຢັກຫຼາຍຄົນກັບທະຫານ ຝ່າຍພັນທະມິດເພື່ອຕໍ່ສູ ຕ້ານຍີ່ປຸ່ນ. ທາງດາ ຢັກໄດ້ລາຍງານ ການກະທຳ ຂອງກອງທັບ ຍີ່ປຸ່ນໃຫ້ແກ່ ຝ່າຍພັນທະ ມິດພ້ອມທັງໄດ້ ສັ່ງຫານ ແລະ ຈັບ ທະຫານຍີ່ປຸ່ນໄດ້ປະ ມານ 1,500 ຄົນ. ໃນບາງ ກໍລະນີ, ພວກເຂົາກໍ່ໄດ້ຕັດຄໍ ແລະ ສະ ສົມຫົວຂອງສັດຕູໄວ້.

ຄອບຄອງອີກເທື່ອໜຶ່ງ. ແຕ່ອິນໂດເນເຊຍປະກາດເອກະລາດ ແລະ ທ່ານ ສຸກາໂນ ກໍ່ກາຍມາເປັນປະທານປະເທດ. ມັນກິນເວລາ 4 ປີ ຈຶ່ງກ່ອນ ພວກເຂົາຈະສາມາດຂັບໄລ່ຊາວໂຮນລັງອອກຈາກປະເທດ.

ບັນດາເກາະຂອງອິນໂດເນເຊຍ

ອິນໂດເນເຊຍຄອບຄຸມຫຼາຍກ່ວາ 15,000 ເກາະ ແຕ່ມີຫຼາຍເກາະເປັນ ເກາະນ້ອຍ ແລະບໍ່ມີຄົນອາໄສຢູ່. ມັນເປັນສ່ວນໜຶ່ງຂອງໝູ່ເກາະທີ່ໃຫຍ່ ກ່ວາ ເຊິ່ງລວມມີ ຟີລິບປິນ ເຊິ່ງເປັນໝູ່ເກາະທີ່ໃຫຍ່ທີ່ສຸດໃນໂລກ. ບັນດາ ເກາະທີ່ໃຫຍ່ທີ່ສຸດໃນອິນໂດເນເຊຍແມ່ນ:

ສຸມາດຕຣາ: ສຸມາດຕຣາແມ່ນໝູ່ເກາະໃຫຍ່ທີ່ໄກທີ່ສຸດທາງທິດຕາ ເວັນຕົກຂອງອິນໂດເນເຊຍ. ມັນມີພູມອາກາດທີ່ຮ້ອນ ແລະ ຊຸ່ມ, ມີສັດປ່າ ຫຼາຍຊະນິດ ລວມມີ: ໂຕ ແຮດ, ເສືອ, ທາເປີ, ຊ້າງ ແລະ ລີງອຸລັງອຸຕັງ.



by Team Yatta CC-BY-2.5

ໜ້າກາກນີ້ແມ່ນເຄີຍໃຊ້ໃນພິທີ ຕ່າງໆມາແລ້ວເທິງເກາະຊາວາ.





by Steve Cornish CC-BY-2.0

ราโฟลิเซย (Rafflesia) แม่นดอกไม้ที่ใหย่ที่สุดในโลก. บางซะนิดมีความกว้างเถิง 1 แม้ด และ มีน้ำหนักเถิง 10 กิโลกรัม. ราฟะลิเซยได้เกิดขึ้นตามเกาะต่างๆของอินโดเนเซย, มาเลเซย และ ฟิลิบปิน.

ราฟะลิเซย บ่มีลำต้น (เถือ ซี ก้าน). มันจะเลินใหย่ขึ้นจากกานฝังตัวเข้าในเถือของพืดซะนิดอื่น. สิ่งที่พวกเราเห็นทั่งหมดนี้แม่นดอกของมัน.

มันถืกตั้งชื่ตามชื่ของท่านโทมัด ราโฟ (Thomas Raffles) ผู้สร้างตั้งนะคอนยุกใหม่ ของ สิงกะโป.

ซาวา: เถิงแม่นว่า มันเป้นผรงเกาะใหย่อันดับ 4 ของอินโดเนเซย ซาวาก่มีผินละเม็องหลายกว่าเค่งหนึ่งของผินละเม็องในประเทด และ นะคอนหลวงยู่ในซาวา. ในเกาะนี้มี อัดสาสะหนาพุด และ ธินดู ที่สำคันจำนอนหลายเช่น: พะทาดใหย่ โบโธบูด๊อ. จากซากที่ได้ถืกค้นคว้าใช้ธู้ว่า คินยุกต้นๆ เช่งเป้นคินดืกดำบันอาไสยู่ในเกาะซาวา ตั้งแต่ 500,000 หา 1,000,000 ปีมาแล้อ.

บ๋มิโอ: มีสามประเทดร่อมยู่ใน บ๋มิโอ. พื้นที่ส่อนหลายของเกาะเป้นของอินโดเนเซย. บางจำนอนเป้นของมาเลเซย และพื้นที่สุดท้าย เช่งเป้นพื้นที่น้อยแม่นประเทดบธูไน. บ๋มิโอ แม่นเกาะที่ใหย่ในอิงเอดนี้ แต่มีผินละเม็องอาไสยู่ผรงเล็กหน้อย. ส่อนหลายพื้นที่เป้นพูเอ๊า และ ปักคุมด้อยป่าต็บ จึ่งบ่ค่อยมีผู้ใดในโลกธู้จัก.

นิอกินี: เกาะที่ใหย่ที่สุดในเอเซยตาเอ้นออกส่รงใต้ ได้ถืกแยกออกเป้นสองประเทด. ส่อนตาเอ้นตีกเค่งหนึ่งของ ปาปัอ ได้กายเป้นส่อนหนึ่งของอินโดเนเซยในปี 1963. ย้อนแนอนี้หลายคินในเกาะจึ่งบ่พ่อใจ และต้องกานยากแยกตัวออกเป้นประเทดอิดสะละ แต่กานเล็อกตั้งปี 1969 ตัดสินว่า มันจะยังคึงเป้นส่อนหนึ่งของอินโดเนเซย.

ການລະເບີດຄັ້ງໃຫຍ່ທີ່ສຸດ

ມີວັນໜຶ່ງໃນປີ 1883 ຜູ້ຄົນໃນອິດສະຕຣາລີໄດ້ຍິນສຽງແປກໆ. ມັນຄ້າຍຄືກັບສຽງລະເບີດ, ແຕ່ເມື່ອພວກເຂົາເບິ່ງໄປອ້ອມຮອບ ພວກເຂົາກໍ່ບໍ່ສັງເກດເຫັນສິ່ງຜິດປົກກະຕິໃດໆ. ພວກເຂົາຄິດວ່າມັນເປັນສຽງທີ່ເກີດຈາກຫີນໃຫຍ່ໃນຮ່ອມພູໃກ້ໆນັ້ນຖະຫຼົ່ມ.

ແຕ່ມັນບໍ່ແມ່ນ. ສຽງນັ້ນແມ່ນມາຈາກພູເຂົາໄຟທີ່ຢູ່ເທິງເກາະໜຶ່ງທີ່ຕັ້ງຢູ່ລະຫວ່າງເກາະຊາວາ ກັບ ເກາະສຸມາດຕຣາກຳລັງລະເບີດຂຶ້ນ ເຊິ່ງມັນຢູ່ໄກອອກໄປເຖິງ 3,500 ກິໂລແມັດ.



ພູເຂົາໄຟນີ້ມີຊື່ວ່າ ຄຣາກາໂຕອາ (Krakatoa). ມັນເລີ່ມປ່ອຍຂີ້ເທົ່າ, ອາຍນ້ຳ ແລະ ກຸ່ມຄວັນອອກມາໃນເດືອນພຶດສະພາ, ປີ 1883. ໃນວັນທີ 27 ເດືອນສິງຫາ ມັນໄດ້ລະເບີດຂຶ້ນ ເຊິ່ງເປັນການລະເບີດຂອງພູເຂົາໄຟທີ່ໃຫຍ່ທີ່ສຸດໃນໂລກເທົ່າທີ່ມີການບັນທຶກມາ.

ການລະເບີດຄັ້ງນີ້ແມ່ນໃຫຍ່ຫຼາຍ ແລະ ເປັນຕາຢ້ານທີ່ສຸດເກີນທີ່ເຮົາຈະສາມາດຈິນຕະນາການໄດ້. ຕໍ່ໄປນີ້ ແມ່ນຄວາມຈິງບາງຢ່າງກ່ຽວກັບການລະເບີດຂອງມັນ.

• ການລະເບີດໄດ້ເຮັດໃຫ້ປາກຂອງພູເຂົາໄຟກວ້າງອອກ 6 ກິໂລແມັດ.

• ການສັ່ນໄຫວຂອງແຜ່ນດິນໄດ້ເຮັດໃຫ້ເກີດຄື້ນຍັກໃນມະຫາສະໝຸດ ເຊິ່ງຮູ້ກັນວ່າ "ຊຶນາມິ." ມີຄື້ນໜຶ່ງໃນຄື້ນເຫຼົ່ານີ້ສູງເຖິງ 30 ແມັດ. ເມື່ອມັນເຄື່ອນຕົວເຂົ້າຮອດເກາະສຸມາດຕຣາ ແລະ ເກາະຊາວາ ມັນໄດ້ທຳລາຍໄປຫຼາຍໝູ່ບ້ານຈົນຮາບກ້ຽງ ແລະ ໄດ້ສັງຫານຄົນເຖິງ 30,000 ຄົນ.

• ພູເຂົາໄຟເຮັດໃຫ້ເກີດເປັນຫີນຫຼາຍຊະນິດ. ຫີນຊະນິດໜຶ່ງມີຮູອາກາດນ້ອຍໆປະສົມຢູ່ ມັນກາຍເປັນກ້ອນຫີນທີ່ມີນ້ຳໜັກເບົາຫຼາຍຈົນສາມາດຟູເທິງໜ້ານ້ຳໄດ້. ເຮືອທີ່ແລ່ນໄປມາໃນທະເລອ້ອມຄຣາກາໂຕອາ ພົບວ່າຕົນເອງເຄື່ອນຕົວໄດ້ຍາກຫຼາຍ ເພາະໜ້ານ້ຳເຕັມໄປດ້ວຍກ້ອນຫີນທີ່ຟູຢູ່.

• ຂີ້ຝຸ່ນທີ່ເກີດຈາກການລະເບີດ ໄດ້ປົວຂຶ້ນໄປໃນທ້ອງຟ້າ ແລະຂະຫຍາຍຕົວອອກໄປທົ່ວທຸກທິດທາງ. ກຸ່ມຂີ້ຝຸ່ນໄດ້ກີ້ງບັງແສງຕາເວັນໄວ້ ຈົນເຮັດໃຫ້ອາກາດໜາວລົງ. ອຸນຫະພູມໂດຍສະເລ່ຍອ້ອມຮອບໂລກໄດ້ຫຼຸດລົງຈາກປົກກະຕິ 1 ອົງສາ.

ທາງເສືອ



ຕາເວັນພວມຄ້ອຍລັບຂອບຟ້າຍາມແລງ ຊາວນາຄົນໜຶ່ງກຳລັງຍ່າງກັບຈາກທົ່ງນາ ມຸ່ງໜ້າສູ່ເຮືອນ. ລາວຄິດເພີດເພີນໄປເຖິງຄາບເຂົ້າ ສຽງຂຸ່ຍ ແລະ ຢາກນອນ. ຂະນະທີ່ຍ່າງລັດເລາະມາຕາມທາງ ລາວກໍ່ມາຮອດພະລານຫີນ. ລາວຫຼຽວເຫັນທາງ - ທາງ ລາຍໆ - ທາງຍາວໆ ແກວ່ງໄປ-ແກວ່ງມາ ຈາກຫຼືບຫີນ. ມັນແມ່ນທາງເສືອທີ່ໃຫຍ່ຫຼາຍ.

ຊາວນາຢ້ານ ຈົນບໍ່ຮູ້ຊິເຮັດແນວໃດ. ລາວຢາກແລ່ນກັບບ້ານໄວໆ ແຕ່ລາວກໍ່ຄິດໄດ້ວ່າ ຖ້າແລ່ນເສືອຈະເຫັນ ເພາະມັນລີ້ລັດທາງຢູ່. ດັ່ງນັ້ນ ລາວຈຶ່ງວາງຜ້າຂໍ ແລ້ວຄຸບທາງເສືອ. ມີການດິ້ນຮົນເກີດຂຶ້ນ. ເສືອພະຍາຍາມດິ້ນ



ເພື່ອໃຫ້ຫຼຸດ. ເສືອດຶງ, ຊາວນາລາວກໍ່ດຶງ. ພວກ
ເຂົາດຶງກັນໄປດຶງກັນມາ. ເສືອຍິ່ງແຂ້ວແທກແງກ
ທ້ງດຶງທ້ງເອົາລ້ບຄູດດິນ. ຊາວນາອ້າປາກຊາບ
ງາບຫາຍໃຈຫອບແຫບ ເຫື່ອໄຫຼໂຄຍ້ອຍ ແຕ່ລາວ
ກໍ່ຍ້ງດຶງໄວ້ຢ່າງເອົາເປັນເອົາຕາຍ. ຂະນະທີ່ຕ່າງ
ຝ່າຍຕ່າງດີ້ນຮົນຢູ່ນັ້ນ ກໍ່ມີສາທຸຕົນຫນຶ່ງຍ່າງຜ່ານ
ມາ.

"ໂອຍ ພະເຈົ້າສິ່ງສາທຸມາແທ້ໆ!" ຊາວນາ
ຮ້ອງໃສ່ສາທຸ "ເອົາຜ້າຂໍ້ຂ້າເສືອໂຕນັ້ນໃຫ້ຂ້າ
ນ້ອຍແດ່ ຕອນທີ່ຂ້ານ້ອຍຍ້ງດຶງມັນໄວ້ຢູ່!"

ສາທຸຜູ້ຊົງສິນຫຼຽວເບ່ິງຊາວນາຢ່າງໃຈ
ເຢັນ ແລ້ວເວ້ົາຂ້ຶນວ່າ:

"ໂອ ອາຕະມາເຮັດບ່ໄດ້; ການຂ້າສິ່ງທ່ີມ
ຊີວິດເປັນການຜິດສິນ."

"ສາທຸເວ້ົາແນວນັ້ນໄດ້ແນວໃດ!" ຊາວນາ
ເວ້ົາ. " ບ່ຊ້ານ່ໍ່ໄວຂ້ານ້ອຍຕ້ອງເມ່ືອຍ ຖ້າຂ້າ
ນ້ອຍປ່ອຍຫາງນ້ີຕອນໃດ ເສືອໃຈຮ້າຍໂຕນ້ີ
ຊ່ໂງມາຄ່ບກ່ນຂ້ານ້ອຍທັນທ່ໂລດ!"

"ຂໍ່ໂທດ ພ່ໍ່ອອກເອ່ຍ," ສາທຸເວ້ົາ. "ແຕ່ສາ
ສະໜາຂອງອາຕະມາບ່ໍ່ອະນຸຍາດໃຫ້ຂ້າສ່ິງທ່ີ
ມ່ຊ່ວ່ດໃດໆ."

"ສາທຸຖຽງຂ້ານ້ອຍແນວນັ້ນໄດ້ແນວໃດ
ຮະ?" ຊາວນາຮ້ອງໃຫ້ຂ້ຶນ. "ຖ້າສາທຸບ່ໍ່ຊ່ວຍ
ແລ້ວຈະປ່ອຍໃຫ້ຂ້ານ້ອຍຕາຍຊ້ໍ່ນຫວ່າ, ຄັນ
ຊ້ໍ່ນສາທຸກ່ໍ່ແມ່ນຜູ້ທ່ີເຮັດໃຫ້ຂ້ານ້ອຍຕາຍ,
ເສືອມ່ີຄ່າກວ່າຄ່ນຊ້ໍ່ນບ?"

ສາທຸຟ້ງຢ່າງຕ້ັງໃຈ ແລ້ວກ່ໍ່ເວ້ົາອອກມາ
ຢ່າງມ່ສະຕ່ວ່າ:

"ຢູ່ຮອບຕ່ວເຮ່ົາ ສ້ບພະສ່ິງໃນປ່ໍ່າລ້ວນ



ແລ້ວແຕ່ຂ້າກິນກັນ ແລະສິ່ງເຫຼົ່ານັ້ນບໍ່ແມ່ນ ຄວາມຮັບຜິດຊອບຂອງອາຕະມາ, ອາຕະມາບໍ່ ສາມາດຂ້າຊີວິດໃດໆໄດ້ ມັນແມ່ນບັນຍັດທີ່ຜູ້ຖື ສິນຕ້ອງປະຕິບັດຢ່າງເຄັ່ງຄັດ."

ຊາວນາຮູ້ສຶກວ່າຕົນເອງໃກ້ຈະໝົດແຮງ. ຫາງເສືອກຳລັງຊິຫຼຸດອອກຈາກມືອັນອິດ ເມື່ອຍຂອງລາວ. ໃນທີ່ສຸດລາວກໍ່ເວົ້າຂຶ້ນວ່າ:

"ດູລາ ຜູ້ຊົ່ງສິນ ຜູ້ທີ່ມີຈິດໃຈປ່ຽນລົ້ນໄປ ດ້ວຍຄວາມເມດຕາ ຖ້າມັນຖືກບັນຍັດແນວ ນັ້ນ ມັນກໍ່ຄົງຕ້ອງເປັນແນວນັ້ນ!" ຜູ້ຂ້າຈະບໍ່ ຂ້ຶດຂີ້ນໃດໆ, ແຕ່ເຮັດອັນໃດອັນໜຶ່ງ ເພື່ອຊ່ວຍ ຂ້ານ້ອຍເອົາບຸນແດ່ທ້ອນ, ຊ່ວຍດຶງຫາງເສືອນີ້ ໄວ້ແທນ ແລ້ວຂ້ານ້ອຍຈະເປັນຄົນຂ້າມັນເອງ!"

ສາທຸແຫງນໜ້າຂຶ້ນຟ້າ ດ້ວຍຄວາມຄິດ.

"ເອີ, ຄັນຊັ້ນກໍ່ໄດ້. ອາຕະມາຈະບໍ່ບາບ ບໍ່ມີ ບັນຍັດຂຽນຫ້າມບໍ່ໃຫ້ອາຕະມາດຶງຫາງເສືອ."

ດັ່ງນັ້ນ ສາທຸຈຶ່ງຍ່າງມາດຶງຫາງເສືອໄວ້.

"ສາທຸດຶງໄວ້ແລ້ວບໍ?" ຊາວນາຖາມ.

"ອາຕະມາ ດຶງໄວ້ແລ້ວ," ສາທຸຕອບ.

"ສາທຸດຶງແໜ້ນແລ້ວບໍ?"

"ອາຕະມາດຶງແໜ້ນແລ້ວ."

ຊາວນາກໍ່ຄ່ອຍໆວາງມື. ລາວເຊັດເຫື່ອອອກ ຈາກໃບໜ້າດ້ວຍຜ້າພັນຫົວ. ລາວຈັບຜ້າຂໍ ຂອງລາວທີ່ລາວວາງໄວ້ຂຶ້ນມາຈາກໜ້າດິນ. ລາວແປງເຄື່ອງນຸ່ງໃຫ້ເປັນລະບຽບ ແລ້ວປັດ ຝຸ່ນອອກຈາກມື. ຈາກນັ້ນລາວກໍ່ເລີ່ມຍ່າງກັບ ໝູ່ບ້ານ.

ເສືອເລີ່ມດຶງແຮງອີກເທື່ອໃໝ່. ສາທຸດຶງ ຫາງເສືອໄວ້ຢ່າງເອົາເປັນເອົາຕາຍ. ພວກເຂົາ ດຶງກັນໄປ-ດຶງກັນມາ.

"ຂ້າມັນແມ້ ຂ້າມັນໄວໆ!" ສາທຸຮ້ອງຂຶ້ນຢ່າງ ແຮງ.

ຊາວນາຍັງສືບຕໍ່ຍ່າງເບັດໜ້າເມືອສູ່ໝູ່ ບ້ານ.



"ເຈົ້າຊິໄປໃສ? ຂ້ອຍດຶງຕ່ໄປບ່ໄຫວແລ້ວ!" ສາທຸຮ້ອງໄຫ້ໂວຍວາຍຂຶ້ນ. "ເອົາພ້າຂໍ່ຂ້ານັ້ນແມ!"

ຊາວນາຢ່າງກັບມາຢ່າງໜ້າຕາເສີຍ, ໃບໜ້າຂອງລາວບ່ມີຄວາມກ້າງວ້ນໃດໆເລີຍ.

"ໂອ ຜູ້ຊົ່ງສິນ ເຊິ່ງຜູ້ຂ້າເຄົ່າລົບສັກກາລະເປັນຢ່າງຍິ່ງ," ລາວເວ້ົາ. "ມັນດີຫຼາຍທີ່ໄດ້ສະດັບຮັບຟັງຄຳເວ້ົາ ແລະຄຳບັນຍັດທີ່ສັກສິດຂອງສາທຸ. ຂ້ານ້ອຍເປັນອິດສະລະໄດ້ຍ້ອນຄວາມຮູ້ສຶກເມດຕາຂອງສາທຸທີ່ມີຕ່ສັບພະສິ່ງທີ່ມີຊີວິດ. ສາທຸໄດ້ເຮັດໃຫ້ຈິດໃຈຂອງຂ້ານ້ອຍເປັນດັ່ງຈິດໃຈຂອງສາທຸໄດ້ຢ່າງບ່ລົບບູນ. ຕອນນີ້ ຜູ້ຂ້າເຫຼ້ືອມໃສສັດທາຕ່ສາສະໜາແບບສາທຸ, ດັ່ງທີ່ມີບັນຍັດ ຜູ້ຂ້າຈະບ່ຂ້າສິ່ງທີ່ມີຊີວິດໃດໆ, ຖ້າສາທຸດຶງຕ່ໄປດ້ວຍຄວາມອິດທິນ ຊາຍຄົນອື່ນໆຜູ້ທີ່ບ່ມີຄະຕິອັນສູງສົ່ງຄືພວກເຮົາ ຄົງຈະມາທາງນີ້ ແລ້ວຂ້າເສືອໃຫ້ສາທຸໃນບ່ຊ້າ."

ແລ້ວຊາວນາກ່ຍ່າງກ່ົງຕົວຢ່າງສ້ັງລວມຈິດກັບເມືອໝູ່ບ້ານ.




by chensiyuan CC-BY-SA 3.0



ສິງກະໂປ

ເຂົ້າຮ່ວມອາຊຽນ: 8 ສິງຫາ 1967
ນະຄອນຫຼວງ: ສິງກະໂປ
ປະຊາກອນ: 4.7 ລ້ານ ຄົນ
ເນື້ອທີ່: 697 ກມ^2
ຄວາມໜາແໜ້ນ: 6800 ຄົນ/ກມ^2
ອາຍຸປານກາງ: 40.1 ປີ
ສາສະໜາ: ສິງກະໂປ ມີສາສະໜາປະສົມຫຼາຍທີ່ສຸດ ຖ້າທຽບໃສ່ປະເທດອື່ນໆໃນກຸ່ມອາຊຽນ. ມີທັງສາສະໜາພຸດ, ມຸດສະລິມ, ຄິສຕຽນ ແລະ ຮິນດູ.
ພາສາ: ພາສາຈີນກາງ ແລະ ອັງກິດ (ເປັນທາງການ) ເຊັ່ນກັນກັບພາສາມະເລ ແລະ ພາສາຈີນອື່ນໆ.
ເສດຖະກິດ: ສິງກະໂປ ຖືກເອີ້ນກັນວ່າ ເປັນໜຶ່ງໃນ "ມັງກອນນ້ອຍສີ່ໂຕຂອງເອເຊຍ" ຍ້ອນຄວາມມັ່ງຄັ່ງເຂັ້ມແຂງທາງດ້ານເສດຖະກິດ. (ສ່ວນ "ມັງກອນນ້ອຍ" ໂຕອື່ນໆນັ້ນແມ່ນ ເກົາຫຼີໃຕ້, ຮົ່ງກົ່ງ ແລະ ໄຕ້ຫວັນ) ເຊິ່ງມັນເປັນປະເທດທີ່ທັນສະໄໝ ໄຮເທັກ ປາສະຈາກກະສິກຳ. ລາຍໄດ້ສ່ວນຫຼາຍມາຈາກການຜະລິດເຄື່ອງມືເອເລັກໂຕນິກ, ຢາ ແລະ ເຄື່ອງກິນຈັກທີ່ມີຄຸນນະພາບ.
ລາຍໄດ້ຕໍ່ຄົນ: $37,220 (US)
ລາຍໄດ້ປຽບທຽບຕໍ່ຄົນ: $57,200 (US)
ລະດັບລາຍໄດ້ປຽບທຽບ: 6
ສຳປະສິດຈີນີ: 47.8





ສິງກະໂປ

ພູມນິປະເທດ

ສິງກະໂປເປັນປະເທດທີ່ນອນບົນເກາະໜຶ່ງທີ່ໃຫຍ່ ເຊິ່ງເຊື່ອມຕໍ່ໄປຫາ ມາເລເຊຍໂດຍທາງຖະໜົນ ແລະມີອີກ 40 ເກາະເຊິ່ງເປັນເກາະນ້ອຍ.

ປະຫວັດສາດ

ເປັນເວລາຫຼາຍຮ້ອຍປີ ທີ່ສິງກະໂປເປັນເຮືອນຂອງຊາວປະມົງຈຳ ນວນໜຶ່ງ. ຊາວຄ້າຂາຍຈາກຈີນ ແລະ ຈາກເກາະຕອນອ້ອມຂ້າງ ມັກຈະ ຈອດພັກເຮືອຢູ່ທີ່ນັ້ນ. ຊື່ "ສິງກະໂປ" ມາຈາກຄຳວ່າ "ສິງ" ຄົນທີ່ມາແວະ ຢາມທຳອິດເຫັນເສືອ ແລະຄິດວ່າມັນແມ່ນສິງ. ໂຈນສະລັດກໍ່ອາໄສຢູ່ບົນ ເກາະຄືກັນ ຖ້າບໍ່ອອກໄປໂຈມຕີເຮືອກຳປັ່ນ.

ເກາະສ່ວນຫຼາຍເປັນປ່າ. ຕອນຄົນອັງກິດກຸ່ມທຳອິດມາຮອດປີ 1819. ຈາກນັ້ນບໍ່ດົນອັງກິດກໍ່ຕ້ອງການອຳນາດຄວບຄຸມອັນເຂັ້ມແຂງກ່ວາບົນ ທ່ານ ໂທມັດ ຣາໄຟ (Thomas Raffles) ແມ່ນແມ່ທັບຂອງອັງ ກິດ ເປັນຜູ້ປົກຄອງ ແລະ ເປັນ ນັກທຳມະຊາດວິທະຍາ.

ທ່ານ ຣາໄຟ ໄດ້ເຮັດວຽກໃຫ້ ກັບມະຫາອຳນາດຫົວເມືອງຂຶ້ນ ກໍ່ຈິງ ແຕ່ເພິ່ນກໍ່ໄດ້ຍົກລະດັບຊີ ວິດການເປັນຢູ່ຂອງຄົນທ້ອງຖິ່ນ ໃຫ້ດີຂຶ້ນນຳ. ເພິ່ນໄດ້ລົບລ້າງລະ ບົບຂ້າທາດໃນເກາະຊາວາ ແລະ ໄດ້ໃຫ້ສິດແກ່ຊາວໄຮ່ຊາວນາໃນ ການຄອບຄອງດິນດອນຕອນ ຫຍ້າຂອງພວກເຂົາ.

ນອກຈາກນັ້ນແລ້ວ ທ່ານ ຣາໄຟ ຍັງໄດ້ສ້າງຕັ້ງເມືອງສິງກະ ໂປຂຶ້ນມາ ເຊິ່ງປະຈຸບັນມີອາຍຸ ເກືອບ 200ປີ. ຮູບຂ້າງເທິງນີ້ຄື ປະເທດສິງກະໂປໃນປະຈຸບັນ.



ສິງກະໂປແມ່ນທ່າເຮືອທີ່ສຳຄັນ ແລະ ຍັງມີອຸດສາຫະກຳຕໍ່ເຮືອຢູ່ ທີ່ນັ້ນດ້ວຍ. ຮູບພາບນີ້ແມ່ນຖ່າຍ ປະມານປີ 1895.

ຊ່ອງແຄບມາລາກາ ບ່ອນທີ່ ເຮືອກຳປັ່ນເດີນທາງຜ່ານ ເມື່ອພວກເຂົາ ເດີນເຮືອລະຫວ່າງອິນເດຍ ແລະ ຈີນ.

ອັງກິດຍັງຄວບຄຸມມາເລເຊຍທີ່ຕິດກັບສິງກະໂປ. ມາເລເຊຍ ແລະ ສິງກະໂປເປັນເອກະລາດພ້ອມກັນ ໂດຍຖືກໂຮມເປັນປະເທດດຽວກັນໃນປີ 1963. ແຕ່ວ່າປະຊາຊົນສິງກະໂປ ແລະ ມາເລເຊຍມີວັດທະນະທຳ ແລະ ຊົນເຜົ່າບູຮານທີ່ແຕກຕ່າງກັນ, ພວກເຂົາຈຶ່ງຢູ່ຮ່ວມກັນບໍ່ໄດ້ດີປານໃດ. ສອງປີຕໍ່ມາ ທຸກຄົນເຫັນດີວ່າ ພວກເຂົາຄວນຈະເປັນຄົນລະປະເທດ. ຕັ້ງ ແຕ່ນັ້ນມາເສດຖະກິດຂອງສິງກະໂປກໍ່ເຕີບໂຕຢ່າງໄວວາ ແລະໄດ້ກາຍ ເປັນສູນກາງອັນໃຫຍ່ໂຕຂອງການຜະລິດ ແລະ ການຄ້າຂາຍຂອງໂລກ.



ທ່ານ ລີກວນຢິວ (Lee Kuan Yew) ໄດ້ເປັນນາຍົກລັດຖະມົນຕີ ຜູ້ທຳອິດຂອງ ສິງກະໂປໃນປີ 1959 ແລະ ໄດ້ຮັກສາຕຳແໜ່ງ ໄວ້ເຖິງ 31 ປີ. ເພິ່ນໄດ້ກຳຈັດລັດ ຖະບານທີ່ກິນສິນບົນສ່ວນຫຼາຍ ແລະ ປັບປຸງລະບົບການສຶກສາທີ່ ຍິ່ງໃຫຍ່ຂຶ້ນ. ພາຍໃຕ້ການນຳພາ ຂອງເພິ່ນ ປະເທດສິງກະໂປຈຶ່ງ ໄດ້ມີການປະຕິຮູບຈາກຫົວເມືອງ ຂຶ້ນນ້ອຍໆກ້າວໄປສູ່ການເປັນປະ ເທດໜຶ່ງທີ່ເຂັ້ມແຂງທີ່ສຸດໃນໂລກ ທາງດ້ານເສດຖະກິດ.



Sengkang, CC-BY-SA 3.0

ເປັນນະຄອນລັດ ແຫ່ງດຽວຂອງໂລກໃນເອເຊຍ

ນະຄອນລັດ (ປະເທດດຽວ ເມືອງດຽວ) ແມ່ນເມືອງທີ່ເປັນເອກະລາດ ຈາກປະເທດໃຫຍ່ແຫ່ງອື່ນ. ແຕ່ບູຮານມາ ນະຄອນລັດເປັນລະບົບປົກ ຄອງທີ່ກະຈາຍໄປທົ່ວໂລກ. ລັດຖະບານຮູບແບບໃໝ່ສ່ວນຫຼາຍລ້ວນແຕ່ ຜ່ານການເປັນນະຄອນລັດມາ. ລະບົບທີ່ອ່ອນແອໄດ້ສູນຫາຍໄປ. ລະບົບ ລັດຖະບານທີ່ໄດ້ເຍີ່ງໃຫ້ເຫັນຄວາມສຳເລັດໄດ້ແຜ່ຂະຫຍາຍຈົນເປັນປະ ເທດທີ່ກ້າວໜ້າກ່ວາ. ປະຈຸບັນນີ້ ມີພຽງນະຄອນລັດຈຳນວນໜ້ອຍດຽວທີ່ ຫຼົງເຫຼືອໃນໂລກ. ສິງກະໂປເປັນພຽງນະຄອນລັດແຫ່ງດຽວໃນກຸ່ມປະເທດ ອາຊຽນ.



by TteckK CC-BY-SA 3.0



Sengkang, CC-BY-SA 3.0

ສາສະໜາໃນປະເທດສິງກະໂປ

ໃນປະເທດສິງກະໂປແມ່ນປະກອບໄປດ້ວຍຜູ້ຄົນ ທີ່ມາຈາກວັດທະນະທຳຕ່າງໆ ແລະ ມີພິທີປະຕິບັດ ທາງສາສະໜາທີ່ຕ່າງກັນ. ປະຊາກອນສ່ວນໃຫຍ່ ແມ່ນເຊື່ອຖືສາສະໜາພຸດ ແຕ່ແມ່ນສາສະໜາພຸດທີ່ ຕ່າງກັບສາສະໜາພຸດຢູ່ໃນປະເທດລາວ. ສອງຮູບທີ່ ຢູ່ຂ້າງເທິງນັ້ນແມ່ນໄດ້ສະແດງໃຫ້ເຫັນວິຫານຂອງ ພຸດທະສາສະໜາ.

ຮູບດ້ານຂວາ ແມ່ນຮູບວິຫານຂອງສາສະໜາຮິນດູທີ່ເກົ່າແກ່ທີ່ສຸດໃນປະເທດສິງກະໂປ. ບັນດາຜູ້ທີ່ຍົກ ຍ້າຍມາຈາກອິນເດຍໄດ້ນຳເອົາສາສະໜາຮິນດູເຂົ້າ ມາໃນສິງກະໂປພ້ອມ. ປະຕູໂຂງອັນລະອຽດອ່ອນນີ້ ແມ່ນສ້າງໃນຮູບແບບຂອງອິນເດຍ ເຊິ່ງມີຫົກຊັ້ນອັນ ວິຈິດງາມຕາ. ແຕ່ລະຊັ້ນແມ່ນປະດັບໄປດ້ວຍຮູບປັ້ນ ນ້ອຍໆຂອງພະເຈົ້າຮິນດູທີ່ມີການລົງສີຢ່າງສົດໃສ.

ໃນປະເທດສິງກະໂປຍັງມີອີກຫຼາຍຄົນທີ່ເຊື່ອໃນ ສາສະໜາມຸດສະລິມກັບສາສະໜາຄິສຕຽນ ແລະ ຍັງມີຫຼາຍຄົນທີ່ບໍ່ໄດ້ເຊື່ອຖືສາສະໜາໃດເລີຍ. ເປັນ ປະເທດທີ່ມີຄວາມເຊື່ອຖືທາງສາສະໜາທີ່ຕ່າງກັນ ຫຼາຍກວ່າປະເທດໃດໆໃນອາຊຽນ.



ນິທານຂອງສິງກະໂປ

ເກາະສອງເອື້ອຍນ້ອງ



ຄັ້ງໜຶ່ງ ຍັງມີຍິງຊະລາອາໄສຢູ່ກັບລູກສາວສອງຄົນບົນເກາະແຫ່ງໜຶ່ງ ໃນ 54 ເກາະຂອງ ສິງກະໂປ. ຍິງຊະລາເປັນແມ່ໝ້າຍ ແລະຈຳຕ້ອງເຮັດວຽກໜັກ ເພື່ອລ້ຽງດູຄອບຄົວນ້ອຍ ຂອງນາງ.

ເມື່ອລູກສາວທັງສອງຂອງນາງໃຫຍ່ຂຶ້ນເຖິງໄວຊອນສາວ ພໍ່ສ້າງຄອບສ້າງຄົວ ຍິງຊະລາ ຈຶ່ງຕັດສິນໃຈວ່າ ມັນເຖິງເວລາແລ້ວທີ່ລູກສາວຈະເອົາຜົວອອກເຮືອນໄປໃຊ້ຊີວິດສຸກສົມກັບ ຊີວິດສົມລົດ. ແນວໃດກໍ່ຕາມ ສອງເອື້ອຍນ້ອງ ມີນາ ແລະ ລີນາ ກໍ່ຍັງຮູ້ສຶກອາໄລອາວອນເຊິ່ງ ກັນ ແລະ ກັນ ເພາະພວກນາງຮັກແພງກັນຫຼາຍ. ພວກນາງໂສກເສົ້າກັບການທີ່ຈະໄດ້ແຕ່ງ ງານອອກເຮືອນໄປໃຊ້ຊີວິດພໍ່ໃຜພໍ່ລາວ ພວກນາງຈຶ່ງເວົ້າກັບແມ່ວ່າ ພວກນາງຈະແຕ່ງງານ ກັບຄົນທີ່ເປັນສອງອ້າຍນ້ອງເທົ່ານັ້ນ.

ເວລາຜ່ານໄປ ອ້າຍບ່າວຫຼາຍຄົນຜ່ານມາ ແລະກໍ່ຜ່ານໄປ ແຕ່ບໍ່ມີໃຜສົນໃຈສອງເອື້ອຍ ນ້ອງນັ້ນເລີຍ. ຈາກນັ້ນ ບໍ່ດົນຜູ້ເປັນແມ່ກໍ່ລົ້ມຫາຍຕາຍຈາກ ແລະສອງເອື້ອຍນ້ອງຈຳຕ້ອງ ໄປອາໄສຢູ່ນຳລຸງ.

ມື້ໜຶ່ງ ວີນາ ອອກໄປຕັກນ້ຳຈາກນ້ຳສ້າງຂອງໝູ່ບ້ານ ແລະກໍ່ພໍດີມີເຮືອເດີນທະເລຜ່ານ ມາ. ເຮືອເດີນທະເລເຫຼົ່ານີ້ ແມ່ນເຮືອຂອງກອງປຸ້ນ ແລະ ໂຈນສະລັດ. ເມື່ອຜູ້ນຳຂອງພວກ ເຂົາ ທີ່ເປັນຊາຍບຶກບຶນເຫັນວີນາ ລາວກໍ່ເກີດຄວາມຮັກແບບໜ້າມືດຕາລາຍຂຶ້ນມາທັນ ທີ. ຄວາມງົດງາມຂອງນາງໄດ້ເຮັດໃຫ້ລາວເກີດຄວາມກະຫາຍຢາກ ແລະລາວກໍ່ຍິ້ມ ມຸ່ງໜ້າ ມາຫານາງ.

ເມື່ອ ວີນາ ເຫັນພວກຜູ້ຊາຍທີ່ເປັນຕາຢ້ານເຫຼົ່ານັ້ນເບັດໜ້າເຂົ້າມາໃສ່ ນາງກໍ່ຮີບແລ່ນ ກັບເມືອໝູ່ບ້ານໂດຍໄວ ແຕ່ຫົວໜ້າຝູງໂຈນໄດ້ສັ່ງໃຫ້ຄົນຂອງລາວຕິດຕາມນາງໄປ ເພື່ອ ຊອກບ່ອນນາງຢູ່ ແລະບໍ່ດົນລາວກໍ່ມາເຄາะປะຕູເຮືອນ. ລຸງຂອງນາງອອກໄປໄຂປะຕູ ລາວກໍ່



ຕົກໃຈ ທີ່ເຫັນຄົນເດີນທະເລ ຢືນຢູ່ຂັ້ນໄດຂອງລາວ.


"ພໍ່ເຖົ້າ, ຂ້ອຍມານີ້ ເພື່ອຂໍລູກສາວເຈົ້າໄປເປັນເມຍ. ໃນນາມຂອງຫົວໜ້າຄົນເດີນທະເລ ຂ້ອຍສາມາດເຮັດໃຫ້ນາງຮັ່ງມີດ້ວຍສົມບັດທັງຫຼາຍ, ຖ້າເຈົ້າຮັບຄຳສະເໜີຂອງຂ້ອຍຄົງຈະດີ ແລະ ບໍ່ເຄີຍມີຄົນໃດປະຕິເສດຂ້ອຍໄດ້ເລີຍ.


"ຂໍຄວາມກະລຸນາເທາະ, ຫົວໜ້າ. ພວກນາງບໍ່ແມ່ນລູກສາວຂອງຂ້ອຍ. ສະນັ້ນ ຂ້ອຍຈຶ່ງບໍ່ສາມາດຕັດສິນໃຈແທນພວກນາງ." ຊາຍຊະລາຂໍຮ້ອງ.

"ຂ້ອຍບໍ່ສົນ, ຂ້ອຍຈະມາຮັບເອົາພວກນາງມື້ອື່ນ." ແລ້ວຫົວໜ້າກຸ່ມກໍ່ຊວນຊາຍເຖົ້ານັ້ນ ໜີຈາກໄປ.

ຊາຍແກ່ບໍ່ອາດປົກປ້ອງລີນາ. ລາວບອກນາງວ່າບໍ່ມີທາງໃດຈະຫຼີກລ່ຽງໄດ້ ເຖິງພວກນາງຈະຂໍຮ້ອງດ້ວຍນ້ຳຕາກໍ່ຕາມ. ຄືນນັ້ນ ສອງເອື້ອຍນ້ອງນອນບໍ່ຫຼັບໝົດຄືນ ພວກນາງພາວະນາຂໍປະຕິຫານ ແຕ່ວ່າເມື່ອຕາເວັນຕອນເຊົ້າສ່ອງແສງ ກໍ່ບໍ່ມີຫຍັງເກີດຂຶ້ນ.

ຫົວໜ້າໂຈນ ແລະລູກນ້ອງມາຮອດໃນທັນທີທັນໃດ. ເຖິງແມ່ນວ່າສອງເອື້ອຍນ້ອງຈະດຶງກັນໄວ້ກໍ່ຕາມແຕ່ລູກນ້ອງຂອງໂຈນກໍ່ດຶງພວກນາງອອກຈາກກັນ ແລະດຶງເອົາລີນາໄປໃຫ້ຫົວໜ້າຂອງພວກເຂົາ ຈາກນັ້ນ ຫົວໜ້າໂຈນກໍ່ອູ້ມລີນາພາດໃສ່ບ່າ ແລະເລີ່ມຕົ້ນຍ່າງອອກໄປຫາເຮືອລຳນ້ອຍຂອງລາວ. ຄົນທັງໝູ່ບ້ານພາກັນອອກມາເບິ່ງ ແຕ່ບໍ່ມີຫຍັງຢຸດຢັ້ງສິ່ງທີ່ເກີດຂຶ້ນໄດ້.





ລົມເລີ່ມກໍ່ຕົວຂຶ້ນ. ມິນາເຈັບຍ້ອນພວກໂຈນພະຍາຍາມດຶງພວກນາງອອກຈາກກັນ ນາງແລ່ນຕາມຫຼັງພວກເຂົາໄປ ຮ້ອງຂໍໃຫ້ຫົວໜ້າໂຈນປ່ອຍຕົວນ້ອງສາວຂອງນາງ. ເຖິງແມ່ນວ່າເຮືອນ້ອຍໄດ້ລອຍລ່ອງອອກທະເລ ມິນາກໍ່ຍັງຄົງແລ່ນລຸຍນ້ຳທະເລ ຈົນມີຄື້ນທະເລໃຫຍ່ມາຊັດເອົານາງ.

ເມື່ອ ລົມນາເຫັນເອື້ອຍຫາຍໄປກັບນ້ຳ. ນາງຈຶ່ງດິ້ນຮົນເອົາຕົວລອດຈາກໂຈນ. ນາງໂດດລົງທະເລ ເພື່ອໄປຫາມິນາ.

ລົມກໍ່ຕົວກັນແຮງຂຶ້ນ ແລະໄຫບ້ານກໍ່ພາກັນແລ່ນກັບເມືອເຮືອນ ຍ້ອນຢ້ານສຽງແຕກຂອງຟ້າຮ້ອງ ແລະຟ້າແມບເຫຼື້ອມ. ລົມພາຍຸຍັງຄົງບໍ່ຢຸດພັດ ຈົນກວ່າມື້ຕໍ່ມາ. ເມື່ອທຸກຄົນກ້າວຂາອອກຈາກກະຕູບ ພວກເຂົາຕ້ອງຕົກໃຈ ເມື່ອຫຼຽວເຫັນເກາະສອງໜ່ວຍ ເກີດຂຶ້ນບ່ອນທີ່ສອງເອື້ອຍນ້ອງຈົມນ້ຳ.

ຕາມຕຳນານ ທຸກໆປີໃນມື້ທີ່ສອງເອື້ອຍນ້ອງເກີດເປັນເກາະຈະມີລົມພາຍຸແຮງເກີດຂຶ້ນ.

ບຣູໄນ



ຮູບເທິງ: ຄົນສ່ວນໃຫຍ່ໃນປະເທດບຣູໄນແມ່ນມຸດສະລິມ. ບາງຄົນກໍ່ເຊື່ອຖືສາສະໜາພຸດ ແຕ່ສາສະໜາມຸດສະລິມແມ່ນຖືວ່າເປັນສາສະໜາທາງການ ແລະ ກົດໝາຍແຫ່ງຊາດກໍ່ຖືກຮ່າງຂຶ້ນຕາມກົດຂອງຊາວມຸດສະລິມ. ເຊັ່ນ: ການຂາຍເຫຼົ້າໃນບຣູໄນແມ່ນຜິດກົດໝາຍ. ສະນັ້ນ ບຣູໄນຈຶ່ງເປັນປະເທດທີ່ບໍ່ມີຮ້ານຂາຍເຫຼົ້າ ຫຼື ໂຮງເຕັ້ນລຳເລີຍ.

ສຸເລ່ຳຫຼ້ານີ້ (ສຸເລ່ຳແມ່ນວິຫານຂອງມຸດສະລິມ) ຖືກສ້າງຂຶ້ນໃນປີ 1958 ເປັນສະຖານທີ່ທີ່ມີຊື່ສຽງອີກແຫ່ງໜຶ່ງ.

ປະຫວັດສາດ

ອານາຈັກບຣູໄນມີມາໄດ້ຢ່າງໜ້ອຍ 1500 ປີ ແລ້ວ. ໃນເວລານັ້ນ ບຣູໄນຄອບຄອງເກືອບທັ່ງໝົດຂອງແຫຼມບໍນີໂອ. ໃນທີ່ສຸດອານາຈັກນີ້ກໍ່ເສຍດິນແດນໃຫ້ມາເລເຊຍ. ທຸກມື້ນີ້ ບຣູໄນ ປະກອບດ້ວຍສອງພື້ນທີ່ແຄບໆ ທາງພາກເໜືອຂອງ ບໍນີໂອ ຖືກອ້ອມຮອບດ້ວຍມາເລເຊຍດ້ານໜຶ່ງ ແລະ ອີກດ້ານໜຶ່ງແມ່ນນ້ຳ.

ເປັນເວລາ ກ່ວາ 600 ປີ ທີ່ບຣູໄນຢູ່ພາຍໃຕ້ການປົກຄອງຂອງລາຊາຕະກຸນດຽວ ແຕ່ກໍ່ຍັງຖືກປົກຄອງໂດຍປະເທດອື່ນນຳອີກ. ປີ 1888 ຫາ 1984 ເຈົ້າປົກຄອງຂອງບຣູໄນໄດ້ເຮັດຂໍ້ຕົກລົງກັບອັງກິດ ໂດຍອັງກິດກັບຊາວບຣູໄນ ຕ້ອງຮ່ວມມືກັນໃນການຄວບຄຸມປະເທດ; ອັງກິດກໍ່ເຫັນດີທີ່ຈະປົກປ້ອງບຣູໄນຈາກສັດຕູ. ແນວໃດກໍ່ຕາມ ການປົກປ້ອງຂອງອັງກິດກໍ່ບໍ່ພຽງພໍໃນລະຫວ່າງສົງຄາມໂລກຄັ້ງທີ II ເຊິ່ງຄືກັນກັບປະເທດອື່ນໃນເອເຊຍຕາເວັນອອກສ່ຽງໃຕ້ ບຣູໄນ ໄດ້ຖືກຍີ່ປຸ່ນເຂົ້າຄອບຄອງ ແລະ ບຣູໄນ ເປັນເອກະລາດ ໃນປີ 1984.

ໝູ່ບ້ານນ້ຳ



Hajotthu CC-BY-SA 3.0

ເປັນເວລາຫຼາຍກວ່າ 13 ສະຕະວັດ ທີ່ປະຊາຊົນໃນບຣູໄນເຄີຍອາໄສຢູ່ໃນຊຸມຊົນກາງນ້ຳ. ໂດຍທີ່ຈິງແລ້ວແມ່ນມີຫ້ວງໝົດຫ້ກໝູ່ບ້ານ ແລະ ເຮືອນແຕ່ລະຫຼັງແມ່ນສ້າງຂຶ້ນດ້ວຍການໃຊ້ເສົາໄມ້ໃຫ້ຢູ່ສູງເໜືອລະດັບນ້ຳ. ມີປະມານ 40,000 ຄົນທີ່ອາໄສຢູ່ໃນທີ່ນີ້. ມັນແມ່ນໝູ່ບ້ານນ້ຳທີ່ໃຫຍ່ທີ່ສຸດໃນເອເຊຍ.

ຊຸມຊົນກາງນ້ຳແມ່ນຕັ້ງຢູ່ໃນອ່າວບຣູໄນ ເປັນບ່ອນທີ່ແມ່ນ້ຳບຣູໄນໄຫຼລົງສູ່ມະຫາສະໝຸດ. ມັນເປັນຄືກັບເມືອງນ້ອຍໆທີ່ມີທາງຍ່າງ 30,000 ແມັດ ເຊິ່ງມັນສ້າງຂຶ້ນດ້ວຍເສົາໄມ້ ທີ່ເຊື່ອມຕໍ່ໃສ່ກັບເຮືອນ, ຮ້ານອາຫານ, ໂຮງຮຽນ, ຮ້ານຄ້າ ແລະ ໂຮງໝໍ. ໝູ່ບ້ານນີ້ໄດ້ຮັບການພິຈາລະນາໃຫ້ເປັນມໍລະດົກຂອງປະເທດບຣູໄນ ແລະ ລັດຖະບານຍັງໄດ້ສະໜອງໃຫ້ບ້ານມີນ້ຳປະປາ, ໄຟຟ້າ, ຄູສອນ, ສຸກສາລາ ແລະ ສະຖານີຕຳຫຼວດ.



ອາຫານສໍາລັບຊາວທະເລ

ເກຕະພຸດ ແມ່ນອາຫານທີ່ນິຍົມກັນຫຼາຍເທິງເກາະບໍນີໂອ ບ່ອນທີ່ປະເທດບຣູໄນຕັ້ງຢູ່. ການເຮັດອາຫານນີ້ ເພິ່ນຈະຕົ້ມເຂົ້າທີ່ຫໍ່ດ້ວຍໃບປາມ. ເມື່ອເຂົ້າສຸກແລ້ວ ມັນຈະຂະຫຍາຍຕົວອອກ. ສະນັ້ນ ຈະເຫັນວ່າຫາງໃນຫໍ່ໃບປາມແມ່ນແໜ້ນຫຼາຍ. ດົນນານມາແລ້ວ ນັກເດີນເຮືອໄດ້ປະດິດຄິດວິທີນີ້ຂຶ້ນມາ ເພື່ອຊ່ວຍຮັກສາເຂົ້າສຸກຂອງເຂົາເຈົ້າຈາກການບູດເນົ່າໃນລະຫວ່າງການເດີນເຮືອອັນຍາວໄກ.



by Meutia Chaerani CC-BY-SA 3.0



ໃນອະດີດ ປະເທດບຣູໄນເຄີຍເປັນປະເທດທີ່ໃຫຍ່. ຄົນສ່ວນໃຫຍ່ທີ່ອາໄສຢູ່ໃນດິນແດນນີ້ແມ່ນຄົນດາຢັກ. ຮູບນັກຮົບຊາວດາຢັກຮູບນີ້ແມ່ນຖ່າຍໄດ້ປະມານ 100 ປີກ່ອນ.

ເສດຖະກິດ

ບຣູໄນມີບໍ່ນ້ຳມັນ ແລະ ການສໍາມະຊາດຢ່າງຫຼວງຫຼາຍ. ປະມານເຄິ່ງໜຶ່ງຂອງລາຍໄດ້ລວມຂອງຊາດມາຈາກແຫຼ່ງຊັບພະຍາກອນເຫຼົ່ານີ້. ລັດຖະບານຂາຍນ້ຳມັນ ແລະ ອາຍກາສ ໃຫ້ແກ່ບໍລິສັດຕ່າງຊາດ ຈາກນັ້ນ ກໍ່ໃຊ້ເງິນສ່ວນໜຶ່ງເຂົ້າໃນການສຶກສາ, ການເບິ່ງແຍງສຸຂະພາບ ແລະ ຊ່ວຍປະຊາຊົນຈ່າຍຄ່າເຄື່ອງເຮືອນ.

ເພາະນ້ຳມັນ ແລະ ອາຍກາສ ບຣູໄນ ຈຶ່ງເປັນໜຶ່ງໃນປະເທດທີ່ຮັ່ງມີທີ່ສຸດໃນ ເອເຊຍ. ປະຊາກອນໄດ້ຮັບການສຶກສາ ແລະ ການຮັກສາສຸຂະພາບແບບບໍ່ເສຍຄ່າ. ເຖິງຢ່າງໃດກໍ່ຕາມປະເທດບໍ່ໄດ້ພັດທະນາແຫຼ່ງລາຍຮັບອື່ນ. ບຣູໄນນໍາເຂົ້າອາຫານ ແລະ ຜະລິດຕະພັນໂຮງງານເກືອບທັງໝົດຈາກປະເທດອື່ນ. ບຣູໄນຈໍາຕ້ອງຊອກວິທີຫາລາຍຮັບອື່ນ ກ່ອນທີ່ນ້ຳມັນ ແລະ ອາຍກາສຈະໝົດ.





บรูไน

ເຂົ້າຮ່ວມອາຊຽນ: 8 ມັງກອນ 1984
ນະຄອນຫຼວງ: ບັນດາເຊຣິເບກາວັງ
ປະຊາກອນ: 4 ແສນຄົນ
ເນື້ອທີ່: 5,765 ກມ^2
ຄວາມໜາແໜ້ນ: 70 ຄົນ/ກມ^2
ອາຍຸປານກາງ: 28.4 ປີ
ສາສະໜາ: ເປັນຊາວມຸດສະລິມ (ເປັນທາງການ) ປະມານ 65%. ສາສະໜາພຸດ, ຜີ ແລະ ຄິສຕຽນ ກໍ່ມີບາງກຸ່ມຄົນເຊື່ອຖືຄືກັນ.
ພາສາ: ພາສາມະເລ (ເປັນທາງການ); ຫຼາຍຄົນກໍ່ເວົ້າພາສາອັງກິດ ແລະ ຈີນ.
ເສດຖະກິດ: ບຣູໄນ ມີພື້ນທີ່ນ້ຳມັນ ແລະ ກາສທຳມະຊາດ ກວ້າງຂວາງ ເຊິ່ງເປັນສິນຄ້າສົ່ງອອກສ່ວນໃຫຍ່ ແລະ ແຫ່ງລາຍໄດ້ຂອງປະເທດ. ອາຊີບເຄິ່ງໜຶ່ງຂອງປະເທດແມ່ນພະນັກງານລັດ ແລະ ການຜະລິດນ້ຳມັນ ເຊິ່ງເກືອບບໍ່ມີຊາວນາເລີຍ.
ລາຍໄດ້ຕໍ່ຄົນ: $12,200 (US)
ລາຍໄດ້ປຽບທຽບຕໍ່ຄົນ: $50,300 (US)
ລະດັບລາຍໄດ້ປຽບທຽບ: 9
ສຳປະສິດຈີນີ: ບໍ່ມີຂໍ້ມູນ

ห้ามจำหน่าย



ນິທານຂອງບຣູໄນ

ມັງກອນແຫ່ງພູເຂົາກີນາບາລຸ

ເລື່ອງນີ້ຖືກເລົ່າຢູ່ໃນປະເທດບຣູໄນ ແຕ່ມັນເວົ້າເຖິງບ່ອນໃນພູເຂົາກີນາບາລຸ ເຊິ່ງຢູ່ໃນມາເລເຊຍ ໃກ້ກັບບຣູໄນ.

ເວົ້າກັນວ່າ ມີມັງກອນໂຕໜຶ່ງອາໄສຢູ່ໃນພູເຂົາ ກີນາບາລຸ ໃນ ບໍນີໂອ. ເພິ່ນວ່າ ມັງກອນໂຕນີ້ເປັນຜູ້ປົກປ້ອງໄຂ່ມຸກຫ່ວຍໃຫຍ່ໆຫ່ວຍໜຶ່ງ. ຕ່ຳຈາກນັ້ນມາ ເມື່ອກະສັດຈີນອົງໜຶ່ງໄດ້ຍິນກ່ຽວກັບໄຂ່ມຸກຫ່ວຍນັ້ນ ພະອົງກໍ່ເລີຍຄິດຢາກໄດ້ ແລະຈາກນັ້ນ ພະອົງກໍ່ສົ່ງທະຫານໄປເອົາ. ບໍ່ທັນໄດ້ຫຍັງຊ້ຳທະຫານຂອງພະອົງກໍ່ຖືກຂ້າຕາຍກ່ອນ ເຫຼືອໄວ້ແຕ່ທະ



ຫານໜ້ອຍດຽວກັບເມືອຈີນ. ວ່າກັນຕໍ່ວ່າບໍ່ແລ້ວ ເທົ່ານັ້ນກະສັດຈີນຍັງບ່ຍອມ ພະອົງໄດ້ຕັດສິນໃຈໃຫ້ ອົງຊາຍຂອງຕົນຄື ວີປົງ ແລະວີຊານໄປເອົາໄຂ່ມຸກໃຫ້ ໄດ້.

ໄດ້ຮັບກະແສຮັບສັ່ງຈາກບິດາ ວີຊານ ຜູ້ເປັນນ້ອງ ຊາຍກໍ່ຄິດຫາແຜນໄປລັກເອົາໄຂ່ມຸກ. ຕາມແຜນ ເມື່ອມ້ງກອນອອກໄປຊອກຫາອາຫານ ວີຊານກໍ່ ຂຶ້ນວ່າວຍັກທັນທີ. ລາວລອຍຂຶ້ນກາງອາກາດແລ້ວ ທະຍານໄປເຖິງຮ້ງຂອງມ້ງກອນ. ສັບປ່ຽນໄຂ່ມຸກ ເອົາ ຂອງແທ້ອອກມາແລ້ວ ເອົາຂອງປອມໃສ່. ເມື່ອມ້ງ ກອນກັບມາ ມັນບໍ່ໄດ້ງົງເລີຍ ມັນຮູ້ວ່າໄຂ່ມຸກນັ້ນເປັນ ຂອງປອມ ແລະມັນກໍ່ເລີຍຮີບຟ້າວລອຍນ້ຳຕິດຕາມ ເຮືອຂອງອົງຊາຍຈີນມາບໍ່ຊ້າ. ຕອນນີ້ ມ້ງກອນ ໃກ້ຈະ ຕາມມາທັນເຮືອຂອງວີຊານແລ້ວ. ໂຊກດີທີ່ ວີຊານມີ ແຜນສອງຕໍ່ຈາກແຜນໜຶ່ງ ລາວສັ່ງໃຫ້ທະຫານຍິງ ປືນໃຫຍ່ທີ່ມີລູກປືນລຸກເປັນໄຟສີແດງກ້ອນມະຫຶມາ ມັນແດງຜ່ທີ່ຈະຕົ້ອະໃຫ້ມ້ງກອນເຊື່ອວ່າ ລູກປືນເປັນ ຂະໜົມອົມທີ່ເປັນຕາແຊບ ແລະແລ້ວ ມ້ງກອນກໍ່ບໍ່ ເຊື່ອວ່າມັນແມ່ນຂະໜົມອົມ ມັນເຊື່ອວ່າລູກປືນແມ່ນ ໄຂ່ມຸກຂອງມັນເອງ. ມັນກໍ່ເລີຍອົມ ແລ້ວກໍ່ຕາຍ.

ເມື່ອເຮືອຂອງອົງຊາຍທັ້ງສອງເດີນທາງມາຮອດ



ຈີນ ວີປີງ ກໍ່ຕິອະທຸກຄົນວ່າຕົນເອງເປັນຜູ້ເອົາໄຂ່ມຸກມາໄດ້ ແລະລາວກໍ່ຈະຢຶດເອົາໄຂ່ມຸກໄວ້ເປັນຂອງຕົນເອງ. ພະເອກກໍ່ຍັງເປັນພະເອກຄືເກົ່າ ວີຊານ ບໍ່ຢາກຜິດກັບອ້າຍ ສະນັ້ນ ລາວກໍ່ເລີຍຕັດສິນໃຈອອກຈາກຈີນ. ແຕ່ສຸດທ້າຍ ວີຊານ ກໍ່ກາຍມາເປັນພະຍາເຈົ້າເມືອງປົກຄອງ ບຮູໄນ ໃນບໍ່ນິໂອຢ່າງ ມີຄວາມສຸກທີ່ສຸດ ສ່ວນອ້າຍຊາຍວີປີງຜູ້ທີ່ເປັນຄົນຂີ້ຕິອະກໍ່ມີແຕ່ຄວາມໂສກເສົ້າ.



ຫວຽດນາມ

ເຂົ້າຮ່ວມອາຊຽນ: 28 ກໍລະກົດ 1995
ນະຄອນຫຼວງ: ຮ່າໂນຍ
ປະຊາກອນ: 89 ລ້ານ ຄົນ
ເນື້ອທີ່: 331,210 ກມ²
ຄວາມໜາແໜ້ນ: 270 ຄົນ/ກມ²
ອາຍຸປານກາງ: 27.8 ປີ
ສາສະໜາ: ປະຊາຊົນສ່ວນຫຼາຍເປັນຊາວພຸດ ແຕ່ມີພິທີກຳທາງສາສະໜາບໍ່ຄືຊາວພຸດອື່ນ. ປະມານ 7% ເປັນຄິສຕຽນ ແລະ 5% ເປັນສາສະໜາພື້ນເມືອງເຊັ່ນ "ກາວໄດ".
ພາສາ: ພາສາຫວຽດນາມ (ເປັນທາງການ). ບາງຄົນເວົ້າພາສາຊົນເຜົ່າ ແຕ່ມີຫຼາຍຄົນໃນຕົວເມືອງສາມາດເວົ້າພາສາອັງກິດ ແລະ ຝຣັ່ງໄດ້.
ເສດຖະກິດ: ຫຼັງຈາກສົງຄາມສິ້ນສຸດລົງໃນປີ 1975, ຫວຽດນາມຕ້ອງທົນທຸກຍາກເປັນເວລາ 15 ປີ. ແຕ່ປະຈຸບັນເສດຖະກິດກຳລັງຂະຫຍາຍຕົວຢ່າງໄວພະລັນ. ສິນຄ້າສົ່ງອອກສ່ວນໃຫຍ່ແມ່ນນ້ຳມັນ, ເຂົ້າ ແລະ ເຄື່ອງນຸ່ງຫົ່ມ. ປະມານເຄິ່ງໜຶ່ງຂອງປະຊາກອນເຮັດວຽກຢູ່ທົ່ງນາ.
ລາຍໄດ້ຕໍ່ຄົນ: $1,010 (US)
ລາຍໄດ້ປຽບທຽບຕໍ່ຄົນ: $3,100 (US)
ລະດັບລາຍໄດ້ປຽບທຽບ: 167
ສຳປະສິດຈີນີ: 37


ຫວຽດນາມ



ປະຫວັດສາດ

ຄົນອາໄສຢູ່ໃນຫວຽດນາມຫຼາຍກ່ວາ 4,000 ປີ. ຕຳນານບອກເລົ່າ ເຖິງກະສັດອົງທຳອິດຊື່ ແລັກ ລອງ ກວານ. ພໍ່ຂອງພະອົງສືບເຊື້ອສາຍ ມາຈາກພະເຈົ້າຂອງຜູເຂົາໃນປະເທດຈີນ ແລະ ແມ່ຂອງພະອົງແມ່ນລູກ ສາວພະຍານົ້ງກອນຈາກທະເລ. ແລັກ ລອງ ກວານ ໄດ້ແຕ່ງງານກັບເທບ ທິດາຈາກປະເທດຈີນ ແລະ ນາງໄດ້ອອກໄຂ່ໃຫ້ພະອົງຈຳນວນ 100 ໜ່ວຍ ຈາກນັ້ນ ລູກຊາຍ 100 ຄົນກໍ່ຖືກກຳເນີດຂຶ້ນ. ພະລາຊາປົກ ຄອງອານາເຂດທາງລຸ່ມພ້ອມລູກຊາຍທັງ 50 ຄົນ ແລະ ລາຊິນີ ປົກຄອງ ຜູເຂົາພ້ອມລູກຊາຍ ອີກ 50 ຄົນ. ພວກເຂົາເລີ່ມຕົ້ນສ້າງອານາຈັກ ຫວຽດນາມຂຶ້ນ.

ແຕ່ຫວຽດນາມບໍ່ສາມາດຄົງຢູ່ໄດ້ເຊິ່ງຄວາມເປັນເອກະລາດ. ຈີນຮຸກ ຮານຫວຽດນາມຢ່າງບໍ່ລົດລະ ແລະ 2,000 ປີຕໍ່ມາ ຫວຽດນາມກໍ່ມັກ ຈະຖືກປົກຄອງ ແລະ ໂຈມຕີ ໂດຍປະເທດອື່ນ ເຊັ່ນ ຈີນ, ຝຣັ່ງ, ຍີ່ປຸ່ນ ຫຼື ຮູບເທິງນີ້ ໄດ້ສະແດງໃຫ້ເຫັນ ຊາວນາປະມານປີ 1880. ໃນ ຄາວນັ້ນ ປະເທດຫວຽດນາມ ເປັນຫົວເມືອງຂຶ້ນຂອງຝຣັ່ງ. ຜູ ປົກຄອງຊາວຝຣັ່ງໄດ້ຄອບຄອງ ດິນຕອນທີ່ດີທີ່ສຸດ ແລະ ໄດ້ ມອບດິນດອນສ່ວນໃຫຍ່ໃຫ້ແກ່ ນັກທຸລະກິດຊາວຝຣັ່ງ, ບາງຄັ້ງ ອາດຫຼາຍເຖິງ 4,000 ເຮັກຕາ. ນອກຈາກນີ້ແລ້ວ ຝຣັ່ງຍັງໄດ້ ຮຽກຮ້ອງເອົາພາສີໃນອັດຕາທີ່ ສູງຈາກປະຊາຊົນຊາວຫວຽດ ນາມ.



ຫວຽດນາມຕົ້ນ ຮົບຍາວນານເພື່ອ ອິດສະລະພາບ

ການຕໍ່ສູ້ອັນຍາວນານຂອງຫວຽດນາມ ເພື່ອເອກະລາດ.



1. ຝຣັ່ງຕ້ອງການຫວຽດນາມມາເປັນ ເມືອງຂຶ້ນຂອງຕົນ. ໃນປີ 1859, ຝຣັ່ງໄດ້ ໃຊ້ເຮືອຮົບທີ່ຕິດປືນໃຫຍ່ເຂົ້າໂຈມຕີ ແລະ ຢຶດເອົາເມືອງໄຊ່ງອນທີ່ຢູ່ທາງພາກໃຕ້ຂອງ ຫວຽດນາມ.

2. ໃນປີ 1885 ຝຣັ່ງໄດ້ໂຈມຕີທາງພາກ ເໜືອຂອງຫວຽດນາມ. ເຊິ່ງໃນຄາວນັ້ນ ແມ່ນປະເທດຈີນທີ່ເປັນຜູ້ຄອບຄອງ ຫວຽດນາມເໜືອ, ອັນເຮັດໃຫ້ກອງທັບ ຂອງຝຣັ່ງກັບຈີນຕ້ອງຕໍ່ສູ້ກັນ. ຫຼັງຈາກສົງ ຄາມນອງເລືອດສິ້ນສຸດລົງ, ຝຣັ່ງກໍ່ເປັນ ຝ່າຍຊະນະ ແລະ ໄດ້ຄອບຄອງຫວຽດ ນາມທັງໝົດ.





3. ຫວຽດນາມຍັງເປັນຫົວເມືອງຂຶ້ນຂອງ ຝຣັ່ງຈົນຮອດສົງຄາມໂລກຄັ້ງທີ II. ຫຼັງ ຈາກສົງຄາມສິ້ນສຸດລົງ ຝຣັ່ງກໍ່ຖອນຕົວ ແລະ ປະເທດຖືກແບ່ງອອກເປັນສອງຕອນ ຄື ຫວຽດນາມເໜືອ ກັບ ຫວຽດນາມໃຕ້. ແຕ່ສະຫະລັດບໍ່ມັກລັດຖະບານຄອມມູ ນິດຂອງຫວຽດນາມເໜືອ ຈຶ່ງໄດ້ເຮັດການ ຮຸກຮານຂຶ້ນ. ໃນພາບນີ້ ທະຫານອາເມຣິ ກາ ໄດ້ຈັບຊາວບ້ານຫວຽດນາມຄົນໜຶ່ງ.



4 ແລະ **5.** ທ່ານ ໂຮຈິມິນໄດ້ນຳພາປະເທດ ຫວຽດນາມໄປສູ່ເອກະລາດໃນອີກຫຼາຍປີ ຕໍ່ມາຫຼັງຈາກທີ່ສົງຄາມໂລກຄັ້ງທີ II ໄດ້ສິ້ນ ສຸດລົງ. ປະຈຸບັນ ເພິ່ນໄດ້ຮັບກຽດຕິຍົດ ອັນສູງສົ່ງ ແລະ ຖືກຈາລຶກລົງໃນເງິນຕາ ຂອງຫວຽດນາມ.

ກອງທອງສຳລິດ

ມະນຸດຍຸກຕົ້ນໃນຫວຽດນາມໄດ້ຄົ້ນພົບບໍ່ທອງແດງ ແລະໄດ້ມີທັກສະໃນການໃຊ້ທັງທອງແດງ ແລະ ທອງສຳລິດ. ວັດທະນະທຳ ດອງ ຊອນ ເຂດພື້ນທີ່ລຸ່ມຂອງຫວຽດນາມເໜືອ ມີຊື່ສຽງໃນເລື່ອງກອງທອງສຳລິດທີ່ພວກເຂົາໄດ້ເຮັດຂຶ້ນ ຕັ້ງແຕ່ປະມານ 600 ປີ ກ່ອນ ຄ.ສ. ຈົນເຖິງ ຄ.ສ. 300.

ກອງເຫຼົ່ານີ້ຖືກຫຸ້ມດ້ວຍທອງສຳລິດ, ມັນສູງເຖິງ 1 ມ. ຊ່າງຂວັດເອ້ຍ້ອງພວກມັນດ້ວຍລວດລາຍຮູບສັດ, ເຮືອ ແລະ ພາບຊີວິດປະຈຳວັນ.



by PHGCOM CC-BY-SA 3.0

ສະຫະລັດອາເມຣິກາ.


ໃນຍຸກສະໄໝໃໝ່ ໂຮຈິມິນ ໄດ້ນຳພາການຕໍ່ສູ້ເພື່ອອິດສະລະພາບ. ໜ່ວຍເຄື່ອນໄຫວຂອງລາວຈຳຕ້ອງຕໍ່ສູ້ຕ້ານຝຣັ່ງ, ຈາກນັ້ນ ຕ້ານຍີ່ປຸ່ນ ແລະຕ້ານຝຣັ່ງອີກເທື່ອໜຶ່ງ ແລະ ສຸດທ້າຍກໍ່ຕ້ານສະຫະລັດອາເມຣິກາ. ຫວຽດນາມປະກາດເອກະລາດ ໃນປີ 1945 ເມື່ອສົງຄາມໂລກຄັ້ງທີ II ສິ້ນສຸດລົງ ແຕ່ການຕໍ່ສູ້ກັນຍັງຄົງດຳເນີນຢູ່. ເປັນເວລາ 20 ປີ ທີ່ຫວຽດນາມຖືກແບ່ງແຍກອອກເປັນຫວຽດນາມເໜືອ ແລະ ຫວຽດນາມໃຕ້. ທັງສອງປະເທດຖືກໂຮມເປັນອັນໜຶ່ງອັນດຽວໃນປີ 1975 ຫຼັງຈາກໄດ້ຜ່ານແພ້ກອງກຳລັງຂອງສະຫະລັດອາເມຣິກາ.

10 ປີ ຕໍ່ມາ ຫວຽດນາມໄດ້ປະເຊີນກັບເຄາະກຳຈາກການທຳລາຍຂອງລະເບີດທີ່ສະຫະລັດອາເມຣິກາໄດ້ຖິ້ມໃສ່. ໃນຂະນະດຽວກັນ ລັດຖະບານພະຍາຍາມຄວບຄຸມເສດຖະກິດ ແລະ ໂຮມອານານິຄົມເປັນຂອງຕົນ. ນະໂຍບາຍນີ້ເປັນໄປບໍ່ໄດ້. ມາໃນປີ 1985 ລັດຖະບານຍຸຍານຂໍ້ຈຳກັດເຫຼົ່ານີ້ ແລະ ໄດ້ອະນຸຍາດໃຫ້ເອກະຊົນເຂົ້າມາເປັນເຈົ້າຂອງທຸລະກິດ ຈາກນັ້ນ ເສດຖະກິດກໍ່ເລີ່ມເຕີບໂຕຢ່າງໄວ.



Chuoibk, CC-BY-SA 3.0

ຮູບນີ້ແມ່ນປະຕູທາງເຂົ້າໄປສູ່ວິຫານອັກສອນສາດໃນຮ່າໂນຍ. ມະຫາວິທະຍາໄລແຫ່ງທຳອິດຂອງຫວຽດນາມແມ່ນຖືກສ້າງຕັ້ງຂຶ້ນຢູ່ທີ່ນີ້ ໃນປີ 1076. ເປັນເວລາ 700 ປີແລ້ວ ທີ່ມະຫາວິທະຍາໄລແຫ່ງນີ້ໄດ້ສະໜອງການສຶກສາໃຫ້ແກ່ພວກຂຸນນາງຊັ້ນສູງ ແລະ ພວກຂ້າລາຊະການ.





ຮູບຊ້າຍມື: ສາສະໜາພຸດແມ່ນສາສະໜາອັນດັບ 1 ໃນປະເທດຫວຽດນາມ. ພະພຸດທະຮູບທີ່ເຫັນໃນພາບນີ້ ແມ່ນສາມາດພົບເຫັນໄດ້ທົ່ວໄປ ໃນປະເທດຫວຽດນາມ. ຄວາມເຊື່ອໃນພຸດທະສາສະໜາມັກຈະປະສົມກັນກັບ ລັດທິເຕົ່າກັບການຂາບໄຫວ້ບັນພະບຸລຸດ.

ຮູບຂວາມື: ປະເທດຫວຽດນາມຍັງເປັນບ້ານເກີດຂອງສາສະໜາໃໝ່, ແຕ່ນ້ອຍກວ່າຄື ສາສະໜາກາວໄດ. ສາສະໜານີ້ແມ່ນເກີດຈາກການປະສົມຄວາມເຊື່ອຖືຕ່າງໆໃສ່ກັນກັບສາສະໜາພຸດ, ແຕ່ວິຫານຂອງກາວໄດ, ດັ່ງທີ່ເຫັນໃນພາບນີ້ ແມ່ນແຕກຕ່າງຈາກວິຫານຂອງສາສະໜາພຸດ.

ຕຳນານ ເຈົ້າແຫ່ງມັງກອນ

ນິທານທີ່ພົ້ນເດັ່ນທີ່ສຸດຂອງຫວຽດນາມແມ່ນເລື່ອງ ແລັກ ລ໊ອງກວານ, ເຊິ່ງແປວ່າ "ເຈົ້າ ແຫ່ງມັງກອນ." ເພິ່ນໄດ້ເປັນກະ ສັດອົງທຳອິດຂອງຫວຽດນາມ ໃນປີ 2839 ກ່ອນ ຄສ. ໃນຄາວ ນັ້ນໄດ້ມີມັງກອນທະເລໃຫຍ່ທີ່ອາ ໄສຢູ່ໃນຖ້ຳແຫ່ງໜຶ່ງ ເຊິ່ງຢູ່ເບື້ອງ ລຸ່ມສຸດທະເລຕາເວັນອອກ. ມັງ ກອນໂຕນີ້ໃຫຍ່ຫຼາຍ ຈົນສາມາດ ກືນເຮືອປະມົງໄດ້ເປັນລຳ ແລະ ຫຼາຍເທື່ອທີ່ມັນເຮັດເຊັ່ນນັ້ນ. ແລັກລ໊ອງກວານ ຮູ້ວ່າຕົນຕ້ອງ



ໄດ້ຂ້າມັງກອນໂຕນີ້ ເພື່ອຊ່ວຍ ປະຊາຊົນຂອງຕົນ. ເພິ່ນໄດ້ເອົາ ໂລຫະທ່ອນໜຶ່ງມາ ແລ້ວເຮັດ ໃຫ້ເປັນຮູບຄ້ຽນ ແລ້ວເອົາໄປເຜົາ ໄຟຈົນເປັນສີແດງ. ເພິ່ນແລ່ນເຮືອ ອອກໄປຫາທະເລ ແລ້ວແຂວນ ຮູບໂລຫະນັ້ນໄວ້ເໜືອໜ້ານ້ຳ. ມັງກອນຄິດວ່າອັນນີ້ແມ່ນຊາວ ຫາປາ ຈຶ່ງເຂົ້າໂຈມຕີ. ແລັກລ໊ອງ ກວານ ກ່ຍັດຮູບໂລຫະນັ້ນລົງໃສ່ ຮູຄໍຂອງມັງກອນ. ມັງກອນໂຕ ນັ້ນກ່ສົ່ງສຽງອອກມາດ້ວຍ ຄວາມເຈັບປວດ. ຫຼັງຈາກນັ້ນ ແລັກລ໊ອງກວານ ກ່ໄດ້ໃຊ້ດາບ ຍາວຂອງຕົນຕັດມັງກອນເປັນ ສາມສ່ວນ. ແຕ່ລະສ່ວນໄດ້ຈົມ ລົງສູ່ພື້ນທະເລ ແລະ ບໍ່ປະກົດ ເຫັນມັງກອນໂຕນັ້ນອີກເລີຍ.



ຄົນຢູ່ສາຍພູອານາມ
ຫວຽດນາມ



ຄູບາກຳປູເຈຍ ພະນົມເປັນ






ສອງຄົນວາວພົ້ນເມືອງຢູ່ຮ່ອມພູເຊກາອ



ແມ່ຍິງຢູ່ເທິງພູເຂົາເຊໂດນ



ຄູບາຖ້ຳຄົນລາວຢູ່ຈຳປາສັກ



ຜູ້ຊາຍຄົນດຽວກັນຢູ່ຈຳປາສັກ, ຮູບດ້ານໜ້າ ແລະ ຂ້າງ





ແມ່ຍິງລາວຢູ່ຈຳປາສັກ



ຄົນຢູ່ແຄມປ້ອງຂວາ
ແມ່ນ້ຳຂອງ (ມ. ເຂັມມະຣັດ ໄທ)



ນັກປາດ ລາວ - ໄທ





ຊົນເຜົ່າກຶມໝຸ ຂອງຄົນຢູ່ ປາກແບ໋ງ.



ຄົນຊົນເຜົ່າລະເມດຢູ່ຊຽງຂອງ (ໄທ)




ຜູ້ຊາຍລາວພາກເໜືອ

ຮູບເທິງ: ນັກສຳຫຼວດຊາວເອີຣົບໄດ້ແຕ້ມຮູບນີ້ໄວ້ ເຊິ່ງເປັນຮູບຂອງຄົນຈາກຊົນເຜົ່າຕ່າງໆຕາມສາຍແມ່ນ້ຳຂອງ. ມີບາງຊື່ຍັງຄ້າຍຄືຊື່ທີ່ພວກເຮົາໃຊ້ກັນໃນປະຈຸບັນ ມີບາງຊື່ກໍ່ບໍ່ຄືແລ້ວ. ຊື່ຂ້າງເທິງນີ້ ໄດ້ຂຽນປະມານປີ 1869 ບາງທີສິ່ງທີ່ໄດ້ຂຽນໄວ້ນີ້ ອາດມີການປ່ຽນແປງ ຫຼື ແຕກຕ່າງຈາກປະຈຸບັນ.

ເຜົ່າພົ້ນເມືອງຂອງຫວຽດນາມ ແລະ ດິນແດນແຫ່ງແມ່ນ້ຳຂອງ



ຮູບຊ້າຍມື: ຊາວມົ້ງກຸ່ມໃຫຍ່ ແມ່ນໄດ້ຍົກຍ້າຍມາຈາກປະເທດ ຈີນເຂົ້າສູ່ພາກເໜືອຂອງຫວຽດ ນາມ ແລະ ລາວ. ໃນປະເທດ ລາວ ຊາວມົ້ງສ່ວນໃຫຍ່ແມ່ນໄດ້ ແບ່ງອອກເປັນກຸ່ມນ້ອຍດັ່ງນີ້: ມົ້ງຂາວ ແລະ ມົ້ງຂຽວ. ໃນປະ ເທດຫວຽດນາມແມ່ນມີມົ້ງດຳ ຫຼາຍ, ນອກຈາກນີ້ຍັງມີມົ້ງແດງ ແລະ ມົ້ງດອກໄມ້. ແມ່ຍິງທີ່ທ່ານ ເຫັນໃນພາບນີ້ແມ່ນມົ້ງດຳ.



ຕົ້ນໝາກເຟືອງຕ່ຳ

ພະພຸດທະເຈົ້າສອນໄວ້ວ່າ ຄວາມໂລບກໍ່ໃຫ້ເກີດຄວາມທຸກ. ໃນທ່ວໂລກ ຫຼາຍໆ ວັດທະນະທຳທີ່ແຕກຕ່າງກັນກໍ່ໄດ້ສອນບົດຮຽນ ດັ່ງກ່າວນີ້ໄວ້.

ດົນນານມາແລ້ວ ມີສອງຜົວເມຍເສດຖີ ອາໄສຢູ່ໃນໝູ່ບ້ານແຫ່ງໜຶ່ງ. ພວກເຂົາມີ ລູກຊາຍນຳກັນສອງຄົນ ລູກຊາຍກົກເປັນ ຄົນໂລບມາກໂລພາ ແຕ່ລູກຊາຍຫຼ້າພັດເປັນ ຄົນໂອບເອື້ອອາລີ.

ເມື່ອສອງຜົວເມຍຕາຍໄປແລ້ວ ພວກເຂົາ ກໍ່ໄດ້ປະມໍລະດົກທັງໝົດໄວ້ໃຫ້ລູກຊາຍທັງ ສອງ. ເພື່ອໃຫ້ພວກເຂົາແບ່ງປັນກັນ ແຕ່ ແທນທີ່ຈະເປັນເຊັ່ນນັ້ນ ຜູ້ເປັນອ້າຍພັດຫຸບ ເອົາທຸກຢ່າງໄວ້ພຽງຄົນດຽວ ແລະ ປະແຕ່ ຕົ້ນໝາກເຟືອງຕົ້ນດຽວໄວ້ໃຫ້ນ້ອງຊາຍ ເທົ່ານັ້ນ.

ຢູ່ມາໄລຍະໜຶ່ງ ຜູ້ເປັນນ້ອງຊາຍກໍ່ໄດ້ ແຕ່ງດອງກັບຍິງຄົນໜຶ່ງ ແລະ ພາກັນໄປອາ ໄສຢູ່ໃນຕູບໄມ້ໃຜ່ນ້ອຍໆ. ລາວ ແລະ ເມຍໄດ້ ບົວລະບັດຮັກສາຕົ້ນໝາກເຟືອງໄວ້ເປັນ ຢ່າງດີ, ພວກເຂົາຫວັງວ່າ ມັນຄົງຈະເປັນ ໝາກດົກໜາ. ຈາກນັ້ນ ພວກເຂົາຈະໄດ້ນຳ ເອົາໄປຂາຍ ເພື່ອລ້ຽງຊີບຕົນເອງ. ຕໍ່ມາຜູ້ ເປັນອ້າຍກໍ່ໄດ້ແຕ່ງງານຄືກັນ. ລາວ ແລະ ເມຍອາໄສຢູ່ເຮືອນຫຼັງໃຫຍ່ທີ່ພໍ່ແມ່ໄດ້ມອບ ໃຫ້. ພວກເຂົາມີຄົນຮັບໃຊ້ເປັນຈຳນວນ ຫຼວງຫຼາຍ. ໃນແຕ່ລະມື້ພວກເຂົາບໍ່ໄດ້ເຮັດ ວຽກການງານຫຍັງເລີຍ.

ມື້ໜຶ່ງ ມີນົກອິນຊີໂຕໜຶ່ງບິນມາກິນ ໝາກເຟືອງໃນຕົ້ນນັ້ນ ເມຍຂອງນ້ອງຊາຍ ເວີຍຈົ່ມວ່າ “ພວກເຮົາມີແຕ່ຕົ້ນໝາກ ເຟືອງຕົ້ນດຽວນີ້; ເບິ່ງດຸ ບັດນີ້ ນົກມາກິນ




ມັນຊິໝົດແລ້ວ ພວກເຮົາຈະອຶດຫິວບາດນີ້ແຫຼະ”

ເມື່ອນົກໄດ້ຍິນຄຳແນວນັ້ນ ມັນບິນລົງມາຈາກຕົ້ນໝາກເຝືອງ ແລະ ຕອບເປັນສຽງຄົນວ່າ “ຂ້ອຍກິນໝາກເຝືອງເຈົ້າ ແຕ່ຂ້ອຍຈະຕອບແທນເຈົ້າດ້ວຍຄຳ. ໃຫ້ເຈົ້າຫຍິບຖົງຍາວໃຫ້ໄດ້ປະມານສາມສອກ ແລ້ວຂ້ອຍຈະມາຫາເຈົ້າ.”

ຜູ້ເປັນເມຍຕື່ນຕົກໃຈຈຶ່ງຮີບແລ່ນກັບຄືນເມືອຕູບ ເພື່ອຊອກຫາຜົວຂອງຕົນ. ພວກເຂົາປຶກສາຫາລືກັນກ່ຽວກັບຄຳເວົ້າຂອງນົກໄດ້ບອກໄວ້ ແລະ ຕັດສິນໃຈຍິບຖົງໃຫ້ໄດ້ຂະໜາດສາມສອກພໍດີ. ສອງສາມມື້ຕໍ່ມາ ນົກອິນຊີກໍ່ບິນກັບມາກິນໝາກເຝືອງ

ອີກ. ສອງຜົວເມຍຈຶ່ງຊອມເບິ່ງນົກກິນໝາກເຝືອງຈົນໝົດ. ແລ້ວມັນກໍ່ບິນລົງຈາກຕົ້ນໝາກເຝືອງ ແລະ ບອກໃຫ້ຊາຍຜູ້ເປັນຜົວຂຶ້ນຂີ່ຫຼັງມັນ ຊາຍຄົນນັ້ນຈັບເອົາຖົງ ແລ້ວກໍ່ຂຶ້ນນັ່ງເທິງຫຼັງນົກອິນຊີ ຈາກນັ້ນ ນົກກໍ່ພາປີກອອກ ແລ້ວບິນຂຶ້ນສູ່ທ້ອງຟ້າ. ສ່ວນຜູ້ເປັນເມຍກໍ່ໄດ້ແຕ່ແນມຕາມຫຼັງຂອງພວກເຂົາ ຈົນລັບໄປຈາກສາຍຕາ.

ໃນຂະນະທີ່ ພວກເຂົາເດີນທາງໄປ ຊາຍຄົນນັ້ນກໍ່ຮູ້ສຶກຢ້ານ. ສ່ວນນົກອິນຊີກໍ່ພາຊາຍຄົນນັ້ນບິນຜ່ານພູຜາປ່າໄມ້ ແລະ ກໍ່ບິນຂ້າມທະເລທີ່ກວ້າງໃຫຍ່. ໃນທີ່ສຸດ ຊາຍຄົນນັ້ນຫຼຽວເຫັນເກາະນ້ອຍໆຢູ່ທາງລຸ່ມ ສະທ້ອນແສງຕ້ອງກັບດວງຕາເວັນເຫຼື້ອມລະຍິບລະຍັບ. ທັງສອງຈຶ່ງໄດ້ພາກັນບິນວົນວຽນຈອດທີ່ນັ້ນ ແລະ ຊາຍໜຸ່ມກໍ່ເຫັນວ່າ ເກາະດັ່ງກ່າວເຕັມໄປດ້ວຍເງິນ, ຄຳ ແລະ ວັດຖຸທີ່ມີຄ່າຕ່າງໆ. ນົກອິນຊີໃຫຍ່ຈຶ່ງບອກລາວວ່າ ເອົາໃສ່ຖົງໃຫ້ມັນເຕັມ. ລາວເອົາສິ່ງຂອງດັ່ງ



ກ່າວໃສ່ຖົງຈົນເຕັມ ແລ້ວກໍ່ກັບຂຶ້ນສູ່ຫຼັງ ນົກອິນຊີ ເພື່ອບິນກັບຄືນເມືອບ້ານ.

ນັບຕັ້ງແຕ່ມື້ນັ້ນເປັນຕົ້ນມາ ສອງຜົວເມຍກໍ່ກາຍເປັນຄົນຮັ່ງມີ ຍ້ອນຕົ້ນໝາກເຟືອງຕົ້ນດຽວ. ເຖິງແມ່ນວ່າ ລາວຈະຮັ່ງມີແລ້ວກໍ່ຕາມ ແຕ່ພວກເຂົາກໍ່ໃຊ້ຊັບສົມບັດຈຳນວນຫຼວງຫຼາຍນັ້ນດ້ວຍຄວາມປະຢັດ ແລະ ຍັງຊ່ວຍເຫຼືອຜູ້ທຸກຈົນນຳອີກ.

ໃນມື້ຄົບຮອບວັນສົ້ນລົມຫາຍໃຈຂອງພໍ່ແມ່ພວກເຂົາ ສອງຜົວເມຍໄດ້ເຊີນຜູ້ເປັນອ້າຍມາຢາມບ້ານ. ຜູ້ເປັນອ້າຍບໍ່ໄດ້ເວົ້ານຳນ້ອງຊາຍເປັນເວລາຫຼາຍປີແລ້ວ ແລະ ບໍ່ຮູ້ວ່າເກີດຫຍັງຂຶ້ນ, ຄວາມຈິງລາວບໍ່ຢາກພົບນ້ອງຊາຍຂອງຕົນເລີຍ ຍ້ອນລາວຮູ້ວ່າຕົນເອງເປັນຄົນໂລບມາກໂລພາ ແລະ ຮູ້ສຶກລະອາຍ. ດັ່ງນັ້ນ ຜູ້ເປັນອ້າຍຈຶ່ງຫາຂໍ້ອ້າງເພື່ອບ່າຍບ່ຽງຄຳເຊື້ອເຊີນ. ລາວໄດ້ເວົ້າວ່າ ລາວບໍ່ໄປຢາມ, ຖ້າຫາກນ້ອງຊາຍບໍ່ປູພື້ນຖະໜົນດ້ວຍຜ້າຝ້າມທີ່ຈົບງາມ ແລະປະດັບເອ້ປະຕູຮົ້ວດ້ວຍຄຳ.

ມາວັນໜຶ່ງ ລາວຂີ້ນການເຊື້ອເຊີນຂອງຜູ້ເປັນນ້ອງຊາຍບໍ່ໄດ້ ລາວຈຶ່ງຕັດສິນໃຈໄປເຮືອນຂອງນ້ອງຊາຍ. ຄູ່ຜົວເມຍຜູ້ເປັນອ້າຍແປກໃຈຫຼາຍ ທີ່ເຫັນນ້ອງຊາຍທຸກຈົນຂອງຕົນເອງ ລ່ຳລວຍເປັນເສດຖີ. ຍ້ອນຄວາມພາໂລຂອງອ້າຍ ລາວຈຶ່ງຂໍຖາມນ້ອງຊາຍວ່າ ເອົາເງິນຄຳມາແຕ່ໃສ. ຍ້ອນນ້ອງເປັນຄົນສັດຊື່ຈຶ່ງຍົນດີເລົ່າເລື່ອງທຸກຢ່າງສູ່ອ້າຍຟັງ.

ອ້າຍຜູ້ໂລບມາກໂລພາເຫັນໂອກາດທີ່ຈະຮັ່ງມີກວ່າເກົ່າ ລາວເລີຍສະເໜີແລກປ່ຽນຊັບສົມບັດຂອງຕົນກັບເຮືອນຕູບ ແລະ ຕົ້ນໝາກເຟືອງ, ຜູ້ເປັນນ້ອງຂັດໃຈອ້າຍບໍ່ໄດ້ຈຶ່ງຕອບຕົກລົງ.

ຕໍ່ມາກໍ່ຍັງເຫັນ ນົກອິນຊີ ທຽວມາກິນໝາກເຟືອງນັ້ນອີກ. ຜູ້ເປັນອ້າຍກໍ່ລົມນຳນົກໃຫຍ່ຕາມຄຳແນະນຳຂອງນ້ອງຊາຍ. ນົກກໍ່ໃຫ້ຄຳແນະນຳຄືດັ່ງກ່ອນໜ້ານີ້ວ່າ “ໃຫ້ຫຍິບຖົງ

ยาวปะมานสามสอกไว้ຖ้า ແล้วข้อยจะพา
เจ้าไปเอิาค่ำ เพื่อตอบแทนหมากเฝือๆ
หวานของเจ้าที่ข้อยได้กินนั้น." เมื่อได้
ยินแนวนั้น ลาวก่ำได้หยิบถิ่งใหย่สอง
หน่วย, แต่ละหน่วยยาวห้าสอก ຫຼังจาน
นั้น ก่ำข็นขี่ຫຼังนิกใหย่โตนั้นไป. พวกเขา
เดินทางในไลยะไก, ผ่านพูผา ແละ ป่าไม้,
ต่ามาก่ำบินข้ามทะเลอันกว้างใหย่ไพสาน.
ผู้เป็นอ้ายบ่รู้สึกย้านเวิย เพาะในใจของ
ลาวคิดหาแต่ ก้อนค่ำ. ทันใดนั้น ก่ำปะทิด
เห็นเกาะที่มีค่ำเต็มไปหมิด เຊิ่งสะท้อน
แสงจากดวงตาเอ้นเหื้อมยิบยับ อันเร้ด
ให้ห้วใจของลาว เต้นแรงข็น แรงข็น
เมื่อคิดเถิงความรั่งมีที่ตินจะได้ในไอๆนี้.



บ่ทันเท่าใดนาที พวกเขาก่ำบินเอื่น
อยมวิงจอดในเกาะดั่งก่าว ต่ามาลาวก่ำ
ได้เก็บเอิาเงิน, ค่ำ ແละ วัดถุที่มีค่า
ต่างๆใส่เต็มถิ่งห้างสองหน่วย, แต่ก่ำยัง
บ่พ่ ลาวยังเอิายัดใส่ถิ่งโส้ง ถิ่งเสื้อจิน
เต็ม, ແล้วก่ำปีนข็นหຼังนิกใหย่ เพื่อบิน
กับบ้าน.

นิกได้รับน้ำหนักหลาย แต่ก่ำยังบิน
ออกไป. ในขะนะที่กำลังบินข้ามทะเลอู่
นั้น จึ่งเร้ดให้ปีกนิกใหย่ง่ยง เจ็ดไป
มาในอากาด, ผู้เป็นอ้ายจึ่งตีกวิงกาง
ทะเลอันกว้างใหย่.

ย้อนความโลบมากโลพา ภาบสูน
หายของผู้เป็นอ้าย จึ่งบ่มีชาวบ้านคิน
ใดสินใจเวิย ซ้ำยังเว้าปะนามไปต่างๆ
นา. ส่วนคู่ผัวเมียผู้เป็นน้องก่ำสืบต่ปะ
ติบัดเร้ดแต่ความดี จึ่งเป็นที่รักหอม
ของชาวบ้านชาวเมืองๆ ແละ อู่อ่างมี
ความสุก.

ส.ป.ป.ลาว

เຂົ້າຮ່ວມອາຊຽນ: 23 ກໍລະກົດ 1997

ນະຄອນຫຼວງ: ວຽງຈັນ

ປະຊາກອນ: 6.4 ລ້ານ ຄົນ

ເນື້ອທີ່: 236,800 ກມ²

ຄວາມໜາແໜ້ນ: 27 ຄົນ/ກມ²

ອາຍຸປານກາງ: 21 ປີ

ສາສະໜາ: ຄົນສ່ວນຫຼາຍເປັນຊາວພຸດ ແຕ່ຍັງມີຫຼາຍຄົນເຊື່ອຖືສາສະໜາຜີ.

ພາສາ: ພາສາລາວ (ເປັນທາງການ). ຫຼາຍຊົນເຜົ່າເວົ້າພາສາມົ້ງ, ກຶມໝຸ ແລະ ພາສາຊົນເຜົ່າອື່ນໆ. ແຕ່ມີຫຼາຍຄົນໃນຕົວເມືອງໃຫຍ່ສາມາດເວົ້າພາສາອັງກິດ. ບາງຄົນສາມາດເວົ້າພາສາຝຣັ່ງ, ໄທ, ຈີນ.


ເສດຖະກິດ: ປະຊາຊົນສ່ວນຫຼາຍເປັນຊາວນາ. ໄມ້, ຄຳ, ທອງ, ກາເຟ ແລະ ໄຟຟ້າ ແມ່ນສິນຄ້າສົ່ງອອກສ່ວນໃຫຍ່ ແລະ ການທ່ອງທ່ຽວແມ່ນເປັນແຫຼ່ງລາຍໄດ້ທີ່ດີ.

ລາຍໄດ້ຕໍ່ຄົນ: $880 (US)

ລາຍໄດ້ປຽບທຽບຕໍ່ຄົນ: $2,400 (US)

ລະດັບລາຍໄດ້ປຽບທຽບ: 180

ສຳປະສິດຈີນີ: 34.6





ພາບນີ້ສະແດງໃຫ້ເຫັນເຮືອນຂອງຜູ້ຮັ່ງມີໃນປະເທດລາວປະມານປີ 1870 ຄືກ່ອນທີ່ປະເທດລາວຈະຕົກເປັນຫົວເມືອງຂຶ້ນຂອງຝຣັ່ງ. ທ່ານສັງເກດເຫັນອັນໃດທີ່ຄ້າຍຄືກັບເຮືອນຂອງຄົນລາວໃນຍຸກປະຈຸບັນນີ້ບໍ? ມີຫຍັງທີ່ແຕກຕ່າງກັນແດ່?


ປະຫວັດສາດ

ມະນຸດໄດ້ອາໄສຢູ່ເກືອບທົ່ວເອເຊຍຕາເວັນອອກສ່ຽງໃຕ້ ເຊິ່ງລວມມີທັງຄົນລາວ ເປັນເວລາຫຼາຍພັນປີມາແລ້ວ. ພວກເຮົາສາມາດຮຽນຮູ້ປະຫວັດສາດບູຮານຂອງບາງປະເທດ ເພາະປະຊາຊົນໄດ້ສ້າງຕັ້ງເຮືອນ, ວັດ ຫຼື ອະນຸສາວະລີ ຈາກຫີນ ເຊິ່ງຍັງຄົງມີໃຫ້ເຫັນຢູ່ເປັນບາງບ່ອນ, ຢູ່ໃນແຖບບ້ານເຮົາ ສິ່ງປຸກສ້າງເກືອບທັງໝົດຖືກສ້າງດ້ວຍວັດສະດຸທີ່ອ່ອນກວ່າ ເຊັ່ນ ໄມ້ໄຜ່ ດັ່ງນັ້ນ ພວກມັນຈຶ່ງຫາຍສາບສູນໄປດົນນານແລ້ວ.


ປະເທດລາວໃໝ່ ຖືກຕັ້ງຂຶ້ນໃນກາງສະຕະວັດທີ 14 ໂດຍ ເຈົ້າຟ້າງຸ່ມ. ອານາຈັກຂອງພະອົງຖືກເອີ້ນວ່າ ລ້ານຊ້າງ ແລະ ມັນກວມເອົາດິນແດນຂອງລາວທັງໝົດໃນປະຈຸບັນ ແລະ ຍັງກວມເອົາຫຼາຍສ່ວນຂອງພາກເໜືອ ແລະ ພາກຕາເວັນອອກຂອງໄທ. ໃນປີ 1373 ລູກຊາຍຂອງພະອົງ



ຮູບແຕ້ມນີ້ແມ່ນຮູບຂອງແມ່ຍິງລາວ 4 ຄົນ ໃນປະມານປີ 1890.







ປະຊາຊົນສ່ວນໃຫຍ່ເປັນຊາວນາ ແຕ່ເຂົາເຈົ້າສາມາດຫາເງິນໄດ້ດ້ວຍຫຼາຍວິທີ. ຮູບຊ້າຍມື: ການຮ່ອນຄຳ (ປັ່ນ ບ້າງ) ຢູ່ນ້ຳອູ. ຮູບກາງ: ການເຮັດໄຄແຜ່ນ, ອາຫານພິເສດຂອງຫວງພະບາງ ເຊິ່ງເຮັດຈາກໄຄ ໂຮຍໜ້າດ້ວຍ ເມັດໝາກງາກັບເຄື່ອຫອມ ແລ້ວນຳໄປຕາກແດດໃຫ້ແຫ້ງ. ຫຼັງຈາກນັ້ນກໍ່ນຳໄປຈີ່ນ ຫຼື ຂ້າງໄຟກ່ອນຈຶ່ງກິນ. ຮູບ ຂວາມື: ການເຮັດເຄື່ອງຫຼິ້ນສຳລັບເດັກນ້ອຍ. ເມື່ອທ່ານແກວ່ງໝາກບານທີ່ຫ້ອຍຢູ່ກ້ອງເຄື່ອງຫຼິ້ນນີ້ ໄກ່ສີ່ໂຕກໍ່ ຈະຍົກຫົວຂຶ້ນ-ລົງ, ເບິ່ງຄືກັບວ່າພວກມັນກຳລັງຕອດກິນເຂົ້າ.



ເຈົ້າອານຸວົງແມ່ນກະສັດທີ່ປົກຄອງປະເທດລາວ ເລີ່ມແຕ່ປີ 1805 ຮອດປີ 1828. ພະອົງໄດ້ຊົງນຳພາການຕໍ່ສູ້ຕ້ານສະຫຍາມ (ໄທ ໃນປະຈຸບັນ) ເພື່ອຍາດເອົາເອກະລາດກັບຄືນມາສູ່ປະເທດລາວ. ແຕ່ກອງທັບໄທໄດ້ມີໄຊເໜືອກວ່າຍ້ອນປັດໄຈຫຼາຍຢ່າງ ແລະ ພວກເຂົາໄດ້ທຳລາຍພື້ນທີ່ສ່ວນໃຫຍ່ຂອງວຽງຈັນ.

ຄື ເຈົ້າສາມແສນໄທໄດ້ຂຶ້ນເປັນກະສັດ. ເຈົ້າສາມແສນໄທນຳເອົາຄວາມສະຫງົບຮົ່ມເຢັນ ແລະຄວາມຮຸ່ງເຮືອງມາໃຫ້ອານາຈັກ. ເພີ່ນປັບປຸງລະບົບອຳນາດລາຊະການ ເພື່ອຈັດການອານາເຂດອັນກວ້າງໃຫຍ່ນີ້ ແລະ ປັບປຸງການປ້ອງກັນປະເທດໃຫ້ເຂັ້ມແຂງຂຶ້ນ.

ຄວາມຢູ່ເຢັນເປັນສຸກອັນມີມາແສນນານໄດ້ຖືກທຳລາຍລົງຈາກສົງຄາມອັນຕໍ່ເນື່ອງໂດຍສູ້ຍັນກັບປະເທດເພື່ອນບ້ານຄື: ມຽນມ້າ, ຫວຽດນາມ ແລະ ອານາຈັກອະຍຸທະຍາຂອງໄທ. ໃນປີ 1637 ເຈົ້າສຸລິຍະວົງສາໄດ້ຂຶ້ນສະເຫວີຍລາຊະການ ແລະ ໄດ້ນຳເອົາສັນຕິສຸກຄືນມາອີກ. ພະອົງໄດ້ເຈລະຈາກ່ຽວກັບເຂດແດນກັບ ຫວຽດນາມ ແລະ ໄທ ເພື່ອຢຸດຕິສົງຄາມ ກັບປະເທດເຫຼົ່ານັ້ນ. ພາຍໃຕ້ການນຳພານີ້, ສາສະໜາພຸດໄດ້ແຜ່ຂະຫຍາຍ, ວຽງຈັນກາຍເປັນເມືອງທີ່ໜ້າອັດສະຈັນ ແລະ ກາຍເປັນເມືອງທີ່ຮຸ່ງເຮືອງທາງດ້ານສິລະປະ ແລະ ວັນນະຄະດີ. ການປົກຄອງ




ຂອງເຈົ້າສຸລິຍະວົງສາ ມັກຈະຖືກຮູ້ຈັກວ່າເປັນຍຸກທອງຄຳຂອງວັດທະ ນະທຳລາວ.

ເຈົ້າສຸລິຍະວົງສາເປັນຜູ້ນຳທີ່ເຂັ້ມແຂງ ເຊິ່ງສາມາດໂຮມເອົາເຜົ່າ ຕ່າງໆເຂົ້າເປັນປະເທດ. ແຕ່ພາຍຫຼັງທີ່ພະອົງສິ້ນພະຊົນໃນປີ 1694 ອາ ນາຈັກລ້ານຊ້າງກໍ່ໄດ້ແຕກອອກເປັນ 3 ຝ່າຍ ຄື: ຫຼວງພະບາງໃນທາງ ພາກເໜືອ, ວຽງຈັນໃນພາກກາງ ແລະ ຈຳປາສັກທາງພາກໃຕ້. ພາຍໃຕ້ ການປົກຄອງຂອງກະສັດອົງດຽວ ທັງສາມອານາເຂດນີ້ສາມາດມີຄວາມ ເຂັ້ມແຂງພໍທີ່ຈະຮັກສາສັນຕິສຸກ ແລະ ເອກະລາດໄດ້. ແຕ່ຫຼັງຈາກ ທີ່ ແຕກແຍກກັນ ເຮັດໃຫ້ແຕ່ລະອານາຈັກອ່ອນແອເກີນໄປທີ່ຈະປົກປ້ອງຕົນ ເອງ. ໄທຄອບຄອງວຽງຈັນ ແລະ ຈຳປາສັກໃນປີ 1778. ຫຼວງພະບາງ ຖືກຢຶດທຳອິດ ໂດຍມຽນມ້າ ຈາກນັ້ນ ກໍ່ແມ່ນສະຫຍາມ. ສະຫຍາມປ່ອຍ ໃຫ້ແຕ່ລະອານາເຂດຮັກສາລາຊາຂອງຕົນເອງໄວ້, ແຕ່ບັງຄັບໃຫ້ເສຍພາ



ປີໃໝ່ລາວ ເປັນງານບຸນໃຫຍ່ທີ່ ສຸດຂອງຄົນລາວ ເຊິ່ງມີການສະ ເຫຼີມສະຫຼອງອັນຍິ່ງໃຫຍ່. ສາສະ ໜາພຸດແມ່ນສາສະໜາຫຼັກຂອງ ລາວ. ພະສົງເຫຼົ່ານີ້ກຳລັງເດີນຂະ ບວນແຫ່ວໍ່ ເປັນອີກກິດຈະກຳ ໜຶ່ງທີ່ເກີດຂຶ້ນໃນບຸນປີໃໝ່ລາວ.







ທົ່ງໄຫຫີນຢູ່ແຂວງຊຽງຂວາງ ແມ່ນເຕັມໄປດ້ວຍໄຫຫີນຫຼາຍພັນໜ່ວຍ, ຕາມຕຳນານເລົ່າລືກັນວ່າ ໄຫຫີນເຫຼົ່ານີ້ ສ້າງໃນສະໄໝ ຂຸນເຈືອງ ເພື່ອເຮັດເຫຼົ້າສະຫຼອງກິດຈະກຳໃດໜຶ່ງ ແຕ່ຍັງບໍ່ມີໃຜສາມາດໃຫ້ຂໍ້ມູນຢ່າງຈະແຈ້ງ ເທື່ອ. ແຂວງຊຽງຂວາງໄດ້ຖືກເຄື່ອງບິນຂອງອາເມຣິກາຖິ້ມລະເບີດໃສ່ຢ່າງໜັກໃນລະຫວ່າງປີ1964-1975. ປະ ຊາຊົນສ່ວນໃຫຍ່ໄດ້ພາກັນເຂົ້າໄປລີ້ຢູ່ໃນຖ້ຳ ແລະ ມີຫຼາຍຄົນຖືກຂ້າຕາຍ. ເຂົາເຈົ້າຖືກຈາລຶກໄວ້ດັ່ງຮູບປັ້ນຂ້າງ ເທິງນີ້.



ຊີວິດໃນຖ້ຳແມ່ນລຳບາກ ແລະ ອັນຕະລາຍຫຼາຍ ແຕ່ປະຊາຊົນກໍ່ໄດ້ຊ່ວຍເຫຼືອເຊິ່ງກັນ ແລະ ກັນ. ໃນຖ້ຳນີ້ມີທັງ ໂຮງຮຽນ ແລະ ໂຮງໝໍ. ພາບນີ້ແຕ້ມຂຶ້ນ ເພື່ອວາງສະແດງຢູ່ແຂວງຊຽງຂວາງ.





ຮູບຊ້າຍ: ພະທາດຫຼວງຈາກຮູບແຕ້ມປະມານປີ 1870. ຮູບຂວາ: ພະທາດຫຼວງໃນປະຈຸບັນ. ຕົວເມືອງວຽງຈັນ ໄດ້ມີການປ່ຽນແປງຫຼາຍໃນໄລຍະ 20 ປີ ທີ່ຜ່ານມາ. ແຕ່ພະທາດຫຼວງບໍ່ໄດ້ປ່ຽນແປງຫຼາຍ ຕະຫຼອດ 140 ປີ ທີ່ຜ່ານມາ ຖ້າສົມທຽບຮູບຊ້າຍ ແລະ ຮູບຂວາ.

ສີໃຫ້ບາງກອກ ແລະ ໃຫ້ປະຕິບັດຕາມຄຳສັ່ງຈາກບາງກອກ.

ຈາກນັ້ນ ຝຣັ່ງ ຕ້ອງການດິນແດນເພີ່ມໃນເອເຊຍຕາເວັນອອກສ່ຽງໃຕ້. ໃນປີ 1893 ເຮືອຮົບຂອງຝຣັ່ງໄດ້ມາຮອດທ່າເຮືອໃນບາງກອກ. ພວກເຂົາຄ້າງຢູ່ໃນທ່າເຮືອ ເພື່ອສະແດງຄວາມເຂັ້ມແຂງ ຈົນສະຫຍາມເຫັນດີມອບການຄວບຄຸມລາວໃຫ້ແກ່ຝຣັ່ງ.

ລະຫວ່າງສົງຄາມໂລກຄັ້ງທີ II ຍີ່ປຸ່ນຄວບຄຸມລາວ. ຍີ່ປຸ່ນພ່າຍແພ້ສົງຄາມໃນປີ 1945. ຫຼັງຈາກນັ້ນ ຝຣັ່ງກໍ່ພະຍາຍາມຈະຢຶດຄອງປະເທດລາວອີກ. ນັກຮົບແນວລາວອິດສະລະ ໂດຍການນຳພາຂອງ ທ່ານໄກສອນ ພົມວິຫານ ແລະ ເຈົ້າຊາຍສຸພານຸວົງ ໄດ້ຕໍ່ຕ້ານຝຣັ່ງ. ມັນເປັນການຕໍ່ສູ້ອັນທໍລະຫົດອິດທົນ ແລະ ຍາວນານ. ຝຣັ່ງອອກຈາກລາວໄປໃນປີ 1954 ແຕ່ປະເທດກໍ່ຍັງຖືກແບ່ງແຍກ ໂດຍກ້ອນກຳລັງທີ່ແຕກຕ່າງກັນ. ຈາກນັ້ນ ອາເມຣິກາກໍ່ໄດ້ຮຸກຮານຫວຽດນາມ, ໄດ້ຖິ້ມລະເບີດໃສ່ລາວ ແລະ ກຳປູເຈຍຢ່າງໜັກຄືກັນ. ໃນທີ່ສຸດ ພັກຄອມມູນິດກໍ່ໄດ້ຮັບໄຊຊະນະ ລາວກໍ່ໄດ້ປະກາດເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນປີ 1975. ຫຼັງຈາກ ສະຖາປະນາປະເທດເປັນເອກະລາດແລ້ວ ລັດຖະບານໄດ້ ປັບກົນລະຍຸດຫຼາຍດ້ານ ເພື່ອປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃຫ້ຈະເລີນກ້າວໜ້າດັ່ງທຸກວັນນີ້.



ນັບແຕ່ປີ 1975 ທີ່ປະເທດລາວໄດ້ຮັບເອກະລາດຄືນມາລະບົບການສຶກສາ ແລະ ສຸຂະພາບ ແມ່ນໄດ້ຮັບການຍົກລະດັບດີຂຶ້ນເລື້ອຍໆ. ອ້າຍໜູນ້ອຍກໍ່ໄດ້ຊ່ວຍໂດຍຈັດໃຫ້ມີງານແຈກປຶ້ມຕາມໂຮງຮຽນ ແລະ ບ້ານຕ່າງໆໃນຊົນນະບົດ ເພື່ອສົ່ງເສີມໃຫ້ເດັກນ້ອຍໄດ້ອ່ານປຶ້ມ. ມີເດັກນ້ອຍລາວຫຼາຍຄົນທີ່ໄດ້ຮັບປຶ້ມເຫຼັ້ມທຳອິດຂອງພວກເຂົາໃນງານແຈກປຶ້ມຂອງອ້າຍໜູນ້ອຍ.

ສາຫຸໃຫຍ່ຂີ້ໄກ່ໂປ່

ຕັ້ງແຕ່ບູຮານມາ ໃນປະເທດລາວ ພໍ່ແມ່ມັກຈະສົ່ງລູກຊາຍຂອງຕົນໄປອາໄສຢູ່ ນຳວັດ ເພື່ອຮ່ຳຮຽນຂຽນອ່ານ ຍ້ອນແນວນັ້ນລູກບ້ານຫຼານເມືອງບາງຄົນກໍ່ໄດ້ອຸ ປະສົມບົດ (ບວດ) ເປັນຈ້ອນ້ອຍ ເພື່ອເຮັດວຽກຮັບໃຊ້ເຈົ້າມ່ອມ ຫຼື ສາຫຸໃຫຍ່. ທຸກໆເຊົ້າພວກເຂົາຈະຍ່າງຕາມຫຼັງສາຫຸໃຫຍ່ ຫຼື ເຈົ້າມ່ອມອອກບິນທະບາດ (ຕັກ ບາດ) ຕາມໝູ່ບ້ານ. ຖ້າພວກເຂົາໄປບໍ່ໄດ້ພວກເຂົາຈະຕ້ອງໄດ້ອະນາໄມເດີ່ນວັດ ກວາດກຸຕິສາລາຂອງສາຫຸໃຫຍ່ ໃຫ້ກ້ຽງໃຫ້ງາມສະອາດສະອ້າງ.

ຕອນເຊົ້າມື້ໜຶ່ງສາຫຸໃຫຍ່ຈະໄປບິນທະບາດ ແຕ່ຈ້ອນ້ອຍພັດບໍ່ທັນ. ດັ່ງນັ້ນ ເພິ່ນຈຶ່ງເວົ້າກັບຈ້ອນ້ອຍວ່າ, "ເອີ, ຄັນເນນບໍ່ທັນໄປນຳສາຫຸ ເນນຕ້ອງປັດກວາດ ເດີ່ນວັດໃຫ້ສະອາດເດີ. ຢ່າໃຫ້ໄກ່ມາໃກ້ກຸຕິເດີ!"


"ໂດຍ, ຂ້ານ້ອຍຊິເບິ່ງດີໆ," ຈ້ອນ້ອຍຕອບ.

"ເອີ! ຮີບໄປຊອກຟອຍມາເວີ່ນກວາດສາ. ຈື່ໄວ້ເດີ ຄັນມີໄກ່ມາຂີ້ໃສ່ກຸຕິ ເນນ ຕ້ອງໄດ້ເລຍອອກໃຫ້ໝົດ," ສາຫຸໃຫຍ່ເວົ້າໜັກແໜ້ນຂຶ້ນ.

"ໂດຍ, ຂ້ານ້ອຍ!" ຈ້ອນ້ອຍຕອບແບບເບື່ອໆນຳຄຳສັ່ງສຸດທ້າຍຂອງສາຫຸໃຫຍ່.

ເມື່ອສາຫຸອອກໄປ ຈ້ອນ້ອຍກໍ່ເວີ່ນປັດກວາດເດີ່ນວັດ ເຊັດຖູກຸຕິ, ສາລາ ຈົນສະ ອາດສະອ້າງ. ຈາກນັ້ນ ຈ້ອນ້ອຍກໍ່ຄິດຫາແຜນຕົວະສາຫຸຂີ້ລ່ຳໄລ.

ຈ້ອນ້ອຍເວີ່ນຕົ້ນຕົ້ມນ້ຳອ້ອຍຈົນຂຸ້ນ ແລະ ລາວກໍ່ຢອດນ້ຳອ້ອຍຂຸ້ນໆເປັນຮູບ ນັ້ນຮູບນີ້ ຈົນທົ່ວພື້ນກຸຕິທີ່ສະອາດຂອງສາຫຸໃຫຍ່. ບໍ່ດົນນ້ຳອ້ອຍຂຸ້ນກໍ່ແຫ້ງ ແລ້ວຄ່ອຍກ້າມເປັນກອງຄ້າຍຄື ຂີ້ໄກ່ໂປ່. ຈາກນັ້ນ ລາວກໍ່ນັ່ງ ແລະ ລໍຖ້າສາຫຸ ໃຫຍ່ກັບມາ.



ດາວໜຶ່ງ ສາທຸໃຫຍ່ກໍ່ມາຮອດ. ເພິ່ນຫຼຽວເຫັນກຸຕິມີແຕ່ກອງອັນນັ້ນອັນນີ້ເຕັມໄປໝົດ ສາທຸໃຫຍ່ຈຶ່ງໃຈຮ້າຍຂຶ້ນ.

"ເນນ ມານີ້ດູ! ເປັນຫຍັງຄືມາມີຂີ້ໄກ່ຫຼາຍແທ້. ເນນບໍ່ຈື່ບໍ່ວ່າສາທຸບອກເນນວ່າແນວໃດ? ມາເລຍອອກໃຫ້ໝົດ," ສາທຸໃຫຍ່ສັ່ງຢ່າງຂຶງຂ້າງ.

ຈິວນ້ອຍແລ່ນມາຫາສາທຸໃຫຍ່ພ້ອມທັງທຳທ່າເສຍໃຈ. "ໂອຍ, ໄກ່ບັກໂອກລາຍຂີ້ອີກແລ້ວ. ຂ້ານ້ອຍຊິເລຍມັນອອກດຽວນີ້."

ຈິວນ້ອຍໝູບວີງ ແລ້ວເລີ່ມຕົ້ນເລຍກອງທຳອິດ. "ໂອ້, ຈັ່ງແມ່ນຫວານເດ!" ແລ້ວລາວກໍ່ສືບຕໍ່ເລຍກອງຕໍ່ໆໄປ ທັງເລຍທັງເວົ້າໄປນຳ. "ໂອ້, ຈັ່ງແມ່ນແຊບເດ! ຫວານເດ! ຫອມເດ!"

ສາທຸໃຫຍ່ຫຼຽວເບິ່ງຈິວນ້ອຍດ້ວຍຄວາມແປກໃຈ. ເມື່ອຈິວນ້ອຍຈະເລຍກອງສຸດທ້າຍ ເພິ່ນກໍ່ເວົ້າຂຶ້ນວ່າ, "ຢຸດກ່ອນ ເນນ. ມັນຫວານແທ້ບໍ ອັນນີ້?

"ໂດຍຂ້ານ້ອຍ. ມັນຫວານແທ້, ຫວານປານນ້ຳອ້ອຍນ້ຳຕານຜຸ້ນແຫຼະ." ຈິວນ້ອຍຕອບ.

ສາທຸໃຫຍ່ມັກສັນຂອງຫວານຫຼັງສັນຈ້ງຫັນ (ຄາບເຂົ້າເຊົ້າ). ມື້ນັ້ນ ບໍ່ມີຍາດໂຍມຕົນໃດຖວາຍຂອງຫວານໃສ່ບາດໃຫ້ເພິ່ນເລີຍ. ດັ່ງນັ້ນ ເພິ່ນຈຶ່ງເວົ້າວ່າ, "ເອີ ຄັນມັນຫວານແທ້ໃຫ້ ສາທຸລອງຊີມກອງສຸດທ້າຍນີ້ສາ!"

"ໄດ້ແທ້ແນ່ນອນ ຂ້ານ້ອຍ." ຈິວນ້ອຍຕອບ. ດັ່ງນັ້ນ ສາທຸໃຫຍ່ຈຶ່ງໝູບວີງເລຍກິນກອງນັ້ນຈົນໝົດ.

"ໂອ້, ຫວານຫອມແທ້! ເນນເອີຍ ແຕ່ມື້ອື່ນເປັນຕົ້ນໄປປ່ອຍໃຫ້ໄກ່ບັກໂອກລາຍຂີ້ໃສ່ພື້ນກຸຕິນີ້ຫຼາຍໆເດີ," ສາທຸໃຫຍ່ສັ່ງຈິວນ້ອຍ.


"ໂດຍຂ້ານ້ອຍ!" ຈິວນ້ອຍຕອບພ້ອມທັງຍົ້ມໃນໃຈ.

ຕອນເຊົ້າມື້ຕໍ່ມາ ສາທຸໃຫຍ່ກໍ່ອອກໄປບິນທະບາດໃນໝູ່ບ້ານຕາມເຄີຍ ແລະ ປ່ອຍໃຫ້ຈິວນ້ອຍຢູ່ວັດຄົນດຽວ. ຈິວນ້ອຍປະຕິບັດຕາມຄຳສັ່ງຂອງສາທຸດ້ວຍຄວາມດີອົກດີໃຈ.

ສາທຸໃຫຍ່ຝ່າວກັບມາວັດ ເພື່ອໃຫ້ທັນສັນຂີ້ໄກ່ເປັນຂອງຫວານຫຼັງສັນຈ້ງຫັນ.

ເມື່ອສາທຸໃຫຍ່ມາຮອດກຸຕິ ເພິ່ນກໍ່ເວົ້າຂຶງຂ້ງວ່າ, "ເນນ, ຫ້າມແຕະຕ້ອງຂີ້ໄກ່ພວກນັ້ນເດັດຂາດເດີ. ປະໃຫ້ສາທຸສັນຜູ້ດຽວຫຼັງຈາກສັນຈ້ງຫັນແລ້ວ!"

"ໂດຍຂ້ານ້ອຍ," ຈິວນ້ອຍຕອບພ້ອມທັງ




ອີມຍິ້ມຕອດຫົວນ້ອກໆ.

ຫຼັງຈາກສັນຈັງຫັນແລ້ວ ສາທຸໃຫຍ່ກໍ່ເລີ່ມຕົ້ນເວຍຂີ້ໄກ່ໂປ່ກອງທຳອິດ. "ແອ້ກ, ມັນຄືມາ ເໝັນຕາຍແທ້! ມັນຕ່າງອັນສັນມື້ວານນີ້ນ່າ ເນນ!"

"ເນນ, ມັນເປັນຍ້ອນຫຍັງນີ້?"

"ໂອ່, ຄືຊິເປັນຍ້ອນມັນບໍ່ແມ່ນຂີ້ບັກໂອກ ລາຍ. ຕ້ອງແມ່ນຂີ້ໄກ່ໂຕອື່ນທີ່ບໍ່ຮູ້ຫຍັງ ຕິ. ລອງຊີມກອງໃໝ່ເບິ່ງຂ້ານ້ອຍ," ຈິວ ນ້ອຍແນະນຳ.

ສາທຸໃຫຍ່ປະຕິບັດຕາມຈິວນ້ອຍແນະ ນຳ ເພິ່ນໄດ້ຊີມກອງຂີ້ໄກ່ໝົດທຸກກອງ ກວ່າສາທຸໃຫຍ່ຈະຮູ້ສຶກຕົວວ່າ ຕົນເອງ ຖືກຈິວນ້ອຍຕົວະ.



ມຽນມ້າ

ເຂົ້າຮ່ວມອາຊຽນ: 23 ກໍລະກົດ 1997
ນະຄອນຫຼວງ: ເນປິດາ
ປະຊາກອນ: 51 ລ້ານ ຄົນ
ເນື້ອທີ່: 676,500 ກມ^2
ຄວາມໜາແໜ້ນ: 75 ຄົນ/ກມ^2
ອາຍຸປານກາງ: 26.9 ປີ
ສາສະໜາ: ປະມານ 90% ເປັນຊາວພຸດ ແຕ່ຍັງມີຫຼາຍຄົນເຊື່ອຖືສາສະໜາຜີ. ມີຊາວຄິສຕຽນ ແລະ ມຸດສະລິມຈຳນວນໜ້ອຍໜຶ່ງ.
ພາສາ: ພາສາມຽນມ້າ (ເປັນທາງການ) ແຕ່ຍັງມີຫຼາຍຄົນເວົ້າພາສາຊົນເຜົ່າ.
ເສດຖະກິດ: ມຽນມ້າ ອຸດົມສົມບູນໄປດ້ວຍແຫ່ງທຳມະຊາດ ແຕ່ກໍ່ຍັງເປັນປະເທດທີ່ທຸກຍາກທີ່ສຸດໃນກຸ່ມອາຊຽນ. ຄົນສ່ວນຫຼາຍເປັນຊາວນາປູກເຂົ້າ ແຕ່ມີຄົນຈຳນວນໜ້ອຍໜຶ່ງເຮັດອຸດສາຫະກຳ. ສິນຄ້າສົ່ງອອກສ່ວນໃຫຍ່ແມ່ນນ້ຳມັນ, ກາສທຳມະຊາດ, ໄມ້, ປາ, ເພັດພອຍ ແລະ ການຊື້ຂາຍຢາຜິດກິດໝາຍເຊັ່ນ: ຝິ່ນ, ຢາບ້າ.
ລາຍໄດ້ຕໍ່ຄົນ: ບໍ່ມີຂໍ້ມູນ
ລາຍໄດ້ປຽບທຽບຕໍ່ຄົນ: $1,100 (US)
ລະດັບລາຍໄດ້ປຽບທຽບ: 209
ສຳປະສິດຈີນີ: ບໍ່ມີຂໍ້ມູນ



ມຽນມ້າ (ພະມ້າ)


ຮູບເທິງ: ໃນສະຕະວັດທີ 19 ນັກສຳຫຼວດ ແລະ ພໍ່ຄ້າຊາວເອີຣົບ ໄດ້ເດີນທາງໄປທົ່ວເອເຊຍຕາເວັນອອກສ່ຽງໃຕ້. ມີຜູ້ໜຶ່ງໄດ້ແຕ້ມຮູບປະຊາຊົນມຽນມ້າ ແລະ ຄົນທາງພາກເໜືອຂອງລາວ.

ປະຫວັດສາດ

ຄັ້ງໜຶ່ງມຽນມ້າເຄີຍເປັນປະເທດທີ່ສົ່ງເຂົ້າອອກລາຍໃຫຍ່ທີ່ສຸດໃນໂລກ. ແຕ່ປະຈຸບັນ ປະຊາຊົນສ່ວນຫຼາຍບໍ່ສາມາດປູກເຂົ້າໃຫ້ກຸ້ມກິນດ້ວຍຕົນເອງ ແລະ ຄອບຄົວ.


ແມ່ນ້ຳອີຣາວະດີ ໄຫຼຈາກທາງພາກເໜືອຂອງມຽນມ້າມາທາງໃຕ້ ເຮັດໃຫ້ເກີດທົ່ງພຽງອັນກວ້າງໃຫຍ່ຢູ່ຈຸດໃຈກາງ; ມີພູຢູ່ທາງຕາເວັນອອກ ແລະ ຕາເວັນຕົກ. ຫຼາຍກວ່າ 10,000 ປີ ມາແລ້ວ ທີ່ມະນຸດອາໄສຢູ່ທົ່ງພຽງແຫ່ງນີ້. ເຄື່ອງມືທຳມະດາທີ່ເຮັດດ້ວຍຫີນຂອງພວກເຂົາຈຳນວນໜຶ່ງໄດ້ຖືກຄົ້ນພົບ ແຕ່ພວກເຮົາບໍ່ຮູ້ຫຍັງຫຼາຍກ່ຽວກັບພວກເຂົາ.

ຈາກ ສະຕະວັດທີ 1 ຮອດ 9 ຊົນເຜົ່າໜຶ່ງ ຄື ເຜົ່າ ປະຍຸໄດ້ມາຕັ້ງຖິ່ນຖານໃນພາກເໜືອຂອງປະເທດມຽນມ້າ. ພວກເຂົາຄ້າຂາຍກັບຈີນ ແລະ




by exfordy CC-BY-2.0

ການຕຳຜ້າໄໝທີ່ມີສີສັນຕ່າງໆ ແມ່ນງານຫັດຖະກຳໜຶ່ງທີ່ມີຄວາມສຳຄັນໃນມຽນມ້າ ຄືກັນກັບປະເທດລາວ.



Ralf Andre Lettau, CC-BY-SA 3.0



Serinde, CC-BY-SA 2.5

ປະຊາຊົນສ່ວນໃຫຍ່ໃນມຽນມ້າເຊື່ອຖືໃນສາສະໜາພຸດ ແລະ ມີຄົນໜຸ່ມຫຼາຍຄົນໄດ້ບວດເຂົ້າເປັນພະສົງ. ດັ່ງທີ່ເຫັນໃນພາບນີ້ແມ່ນພະທາດສະເວດາກອນ ເຊິ່ງເປັນພະທາດທີ່ມີຊື່ສຽງທີ່ສຸດໃນປະເທດມຽນມ້າ. ຕາມຕຳນານພຸດທະສາສະໜາ ພະທາດນີ້ສ້າງຂຶ້ນໃນຊ່ວງທີ່ພະພຸດທະເຈົ້າຍັງຊົງພະຊົນຢູ່ ຕໍ່ມາກໍ່ໄດ້ມີການບູລະນະຄືນໃໝ່ອີກຫຼາຍເທື່ອ.



Wagaung, CC-BY-SA 2.0

ອາຫານປະຈຳຊາດຂອງມຽນມ້າ ແມ່ນແກງໝີ່ທີ່ເອີ້ນວ່າ ໂມຮິນກາ. ອາຫານນີ້ປະກອບມີເສັ້ນໝີ່, ປາດຸກ, ເຂົ້າບົດ, ຜັກທຽມ, ຫົວສີໃຄ, ປາແດກ ແລະ ຂີງ.

ອິນເດຍ. ປະຈຸບັນ ສິ່ງທີ່ພວກເຮົາຮູ້ກ່ຽວກັບ ເຜົ່າປະຍຸສ່ວນຫຼາຍມາຈາກບັນທຶກຂອງຈີນ. ເຜົ່າປະຍຸ ແທນທີ່ຈະສ້າງຕັ້ງອານາຈັກໃຫຍ່ອັນດຽວ, ພວກເຂົາພັດສ້າງນະຄອນນ້ອຍປະມານ 18 ແຫ່ງ ແຕ່ລະແຫ່ງຈະມີເຈົ້າປົກຄອງເອງ ແຕ່ມີການຕິດຕໍ່ພົວພັນກັນ.

ຊາວຈີນປະທັບໃຈຕໍ່ກັບສັງຄົມທີ່ອ່ອນນ້ອມຂອງປະຍຸ. ພວກເຂົາບໍ່ມີຄຸກ, ຜູ້ກໍ່ອາຊະຍາກຳຈະຖືກທຸບຕີ ແລ້ວກໍ່ປ່ອຍໄປ. ພວກເຂົາຫຼີກລ່ຽງສົງຄາມ. ຖ້າສອງເມືອງບໍ່ເຫັນດີນຳກັນ ພວກເຂົາຈະເຮັດການແຂ່ງຂັນກັນແທນທີ່ຈະເຮັດສົງຄາມ. ປະຊາຊົນມັກນຸ່ງເຄື່ອງທີ່ມີສີສັນຮຸ່ງແຈ້ງ ແລະ ປະດັບປະດາດ້ວຍເຜັດພອຍ. ຄົນປະຍຸເປັນຊາວພຸດ. ເດັກນ້ອຍ ທັ້ງຍິງ ແລະ ຊາຍ ຈະເຂົ້າບວດເປັນຈົວ ຫຼື ແມ່ຊີ ແລ້ວໄປເຂົ້າໂຮງຮຽນຢູ່ວັດ.

ມຽນມ້າທາງໃຕ້ຖືກຕັ້ງຖິ່ນຖານ ໂດຍເຜົ່າອິ້ນຄໍ ເຜົ່າມອນ. ທັງສອງຊົງເຂດໂຮມເຂົ້າກັນຄັ້ງທຳອິດໃນສະຕະວັດທີ 11. ເປັນເວລາ 8 ສະຕະ

ตะຫຼາດໃນມຽນມ້າສະໄໝກ່ອນ


ຮູບພາບນີ້ຖ່າຍໃນປີ 1921 ໂດຍນັກຂ່າວວາລະສານແຫ່ງໜຶ່ງໃນສະຫະລັດ. ມັນສະແດງໃຫ້ເຫັນຕະຫຼາດໃນປະເທດມຽນມ້າ. ມີແມ່ຍິງບາງຄົນມາຈາກເຜົ່າຊານ (Shan tribe). ພວກເຂົາຈະສວມໃສ່ປອກຄໍທີ່ເຮັດດ້ວຍທອງເຫຼືອງຕັ້ງແຕ່ຍັງນ້ອຍ. ນອກນັ້ນ ພວກເຂົາຍັງໃສ່ຕາມຂໍ້ມື ແລະ ຂໍ້ຕີນ. ນັກຂ່າວກ່າວວ່າ ເມື່ອສະເລ່ຍແລ້ວຍິງຄົນໜຶ່ງອາດຈະແບກນ້ຳໜັກຈາກເຄື່ອງປະດັບເຫຼົ່ານີ້ເຖິງ 20 ຫຼື 25 ກິໂລ ແລະ ພວກນາງຕ້ອງສວມໃສ່ເຄື່ອງປະດັບນີ້ຕະຫຼອດ: ທັງໃນຂະນະທີ່ກຳລັງເຮັດວຽກຢູ່ໃນທົ່ງນາ, ໄປຕັກນ້ຳ ຫຼື ຂາຍເຄື່ອງຢູ່ຕະຫຼາດ.



ວັດທີ່ອານາຈັກນີ້ຢູ່ພາຍໃຕ້ການຄວບຄຸມຂອງເຈົ້າປົກຄອງສືບເນື່ອງກັນມາຕາມລຳດັບ.

ມຽນມ້າ ມີຊັບພະຍາກອນທຳມະຊາດຈຳນວນຫຼວງຫຼາຍ ໃນນັ້ນ ລວມເຖິງປ່າໄມ້ສັກ ແລະ ຫີນອັນຍະມະນີ. ເມື່ອປະເທດທີ່ມີອຳນາດເອີຣົບຍາດແຍ່ງກັນເອົາເມືອງຂຶ້ນໃນເອເຊຍ ອັງກິດກໍ່ມີຄວາມຕ້ອງການມຽນມ້າ. ພວກເຂົາຕໍ່ສູ້ໃນສົງຄາມ 3 ຄັ້ງ ເພື່ອຢຶດເອົາມຽນມ້າ. ໃນທີ່ສຸດ ພວກເຂົາກໍ່ເຮັດສຳເລັດ ໃນປີ 1886. ອິນເດຍໄດ້ເປັນຫົວເມືອງຂຶ້ນຂອງອັງກິດ. ດັ່ງນັ້ນ ອັງກິດຈຶ່ງໃຫ້ມຽນມ້າເປັນແຂວງໜຶ່ງຂອງອິນເດຍ. ຄົນຮັກຊາດໃນມຽນມ້າຕໍ່ຕ້ານຄົນ ແຕ່ອັງກິດມີອາວຸດທີ່ເຂັ້ມແຂງກວ່າ ແລະ ສາມາດເຮັດໃຫ້ການຕໍ່ຕ້ານຢຸດຕິລົງ.

ຍີ່ປຸ່ນຢຶດຄອງມຽນມ້າເປັນເວລາຫຼາຍປີ ລະຫວ່າງສົງຄາມໂລກຄັ້ງທີ II. ໃນປີ 1948 ຫຼັງຈາກສົງຄາມສິ້ນສຸດລົງ ມຽນມ້າກໍ່ເປັນອິດສະລະ. ໃນປີ 1990 ຜູ້ນຳທາງທະຫານ ປະຕິເສດຜົນຂອງການເລືອກຕັ້ງທີ່ຝ່າຍຄ້ານເປັນຜູ້ຊະນະ. ພວກເຂົາຈັບ ອອງຊານຊູຈີ ຜູ້ນຳຂອງຝ່າຍຄ້ານ. ຕັ້ງແຕ່ນັ້ນມາເສດຖະກິດຂອງມຽນມ້າກໍ່ອ່ອນແອລົງ.



ປະເທດອັງກິດເຂົ້າໂຈມຕີປະເທດມຽນມ້າຄັ້ງທຳອິດໃນປີ 1824. ພາບສົງຄາມຂ້າງເທິງໄດ້ສະແດງໃຫ້ເຫັນວ່າ ອັງກິດເປັນຝ່າຍຊະນະ. ອັງກິດໄດ້ປົກຄອງບາງສ່ວນຂອງມຽນມ້າ. ຫຼັງຈາກນັ້ນ ກໍ່ເຮັດໃຫ້ປະເທດມຽນມ້າອ່ອນແອລົງ ດ້ວຍການເກັບຄ່າພາສີທີ່ສູງ. ອັງກິດໄດ້ເຮັດການໂຈມຕີອີກຕື່ມສອງຄັ້ງ, ໃນປີ 1884, ປະເທດມຽນມ້າທັງໝົດກໍ່ຕົກເປັນຫົວເມືອງຂຶ້ນຂອງອັງກິດ.

ດົງທີ່ສະຫງາດຂອງງະຕ່າຍ

ໃນປ່າແຫ່ງໜຶ່ງມີພະຍາສິງທີ່ຊ່າງຈັດການຕົນໜຶ່ງອາໄສຢູ່. ພະຍາສິງໄດ້ແຕ່ງຕັ້ງ ໝີ, ວີງ ແລະ ກະຕ່າຍເປັນຂຸນນາງໃຫຍ່ໃຫ້ແກ່ຕົນ ເພື່ອຊ່ວຍກັນປົກຄອງອານາຈັກ ແລະ ພວກເຂົາກໍ່ຮ່ວມກັນປົກຄອງອານາຈັກແຫ່ງຜືນປ່າເປັນຢ່າງດີ. ຢູ່ມາວັນໜຶ່ງສິງເກີດຄວາມເບື່ອໜ່າຍຕໍ່ພວກຂຸນນາງຂອງຕົນເອງຢ່າງບໍ່ມີເຫດຜົນ. ມັນຕ້ອງການຂ້າກິນພວກເຂົາ. ແນວໃດກໍ່ຕາມໃນຖານະທີ່ພວກເຂົາເປັນຂຸນນາງຂອງລາວ ລາວຈຶ່ງຈຳຕ້ອງຄິດຂໍ້ກ່າວຫາອັນໃດອັນໜຶ່ງ ເພື່ອເປັນຂໍ້ອ້າງໃນການກຳຈັດສັດເຫຼົ່ານັ້ນ ແລະເພື່ອໃຫ້ທຸກຢ່າງເບິ່ງຄືວ່າຖືກວ່າຄວນ.


ດັ່ງນັ້ນ ລາຊາສິງຈຶ່ງເອີ້ນຂຸນນາງຂອງລາວມາ ແລ້ວເວົ້າກັບພວກເຂົາ, "ຂຸນນາງຂອງຂ້ອຍເອີຍ ດຽວນີ້ ພວກເຈົ້າກໍ່ໄດ້ປະກອບສ່ວນໃນການປົກຄອງອານາຈັກຜືນປ່າແຫ່ງນີ້ມາດົນພໍສົມຄວນແລ້ວ ແລະຕອນນີ້ ມັນເປັນຄວາມຈຳເປັນຂອງຂ້ອຍທີ່ຈະຕ້ອງກວດສອບເບິ່ງວ່າຕຳແໜ່ງໃຫຍ່ໄດ້ເຮັດໃຫ້ພວກເຈົ້າເສຍຜູ້ເສຍຄົນໄປແລ້ວບໍ."

ຈາກນັ້ນ ສິງກໍ່ອ້າປາກກວ້າງ ແລ້ວບອກໃຫ້ໝີຕອບຕົນເອງວ່າ ກິ່ນທີ່ອອກມາຈາກປາກຂອງຕົນນັ້ນແມ່ນກິ່ນຫຍັງ. ຍ້ອນສິງເປັນສັດກິນເນື້ອທີ່ຮ້າຍກາດ ໂດຍທຳມະຊາດແລ້ວກິ່ນເໝັນຈະອອກມາຈາກປາກຂອງມັນ.

ໝີຕອບໄປຕາມຄວາມຈິງ, "ຮຽນທ່ານ ມະຫາຣາຊາ ມັນແມ່ນກິ່ນເໝັນ."

"ເຈົ້າກະບີດ," ສິງຮ້ອງຄຳລາມຂຶ້ນດ້ວຍຄວາມໃຈຮ້າຍ. "ເຈົ້າກ້າດ່າກະສັດຂອງເຈົ້າຕໍ່ໜ້າຕໍ່ຕາຜຸ້ນຫວ່າ. ໂທດສຳລັບກະບີດມີແຕ່ຕາຍລູກດຽວ." ເວົ້າດັ່ງນັ້ນ ລາວກໍ່ໂດດຂຶ້ນຄຸບໝີ ແລ້ວຂ້າໝີທັນທີ.

ບັດນີ້ກໍ່ເປັນຝຽນຂອງວີງ. ສິງບອກໃຫ້ວີງຕອບຕົນວ່າ ກິ່ນຈາກປາກຂອງຕົນແມ່ນ





ກິ່ນຫຍັງ. ອ້າຍວິງເມື່ອໄດ້ເຫັນຊະຕາກຳຂອງໝີ ຈຶ່ງຄິດວ່າ ມີທາງດຽວທີ່ຈະ
ລອດຊີວິດໄດ້ກໍ່ຄື ມີແຕ່ຍອມຮັບວ່າ ອັນໃດກໍ່ດີໝົດ ແລ້ວມັນຈຶ່ງເວົ້າ, "ຮຽນ
ທ່ານ ມະຫາຣາຊາ ມັນແມ່ນກິ່ນທີ່ຫອມຫວນ ດັ່ງກິ່ນນ້ຳຫອມຊັ້ນເລີດ."

"ຂີ້ຕົວະ ແລະ ປະຈົບປະແຈງທີ່ສຸດ," ສິງຮ້ອງຄຳລາມຂຶ້ນດ້ວຍຄວາມໃຈຮ້າຍ. "ໃຜໆກໍ່ຮູ້ວ່າ ມີແຕ່ກິ່ນເໝັນເທົ່ານັ້ນແຫຼະທີ່ອອກມາຈາກປາກຂອງເຮົາ ເພາະ
ເຮົາເປັນສັດກິນເນື້ອ. ການໃຫ້ຄຳເຫັນທີ່ຂີ້ຕົວະ ແລະ ປະຈົບປະແຈງຕໍ່ກະສັດ
ເປັນອັນຕະລາຍຕໍ່ບ້ານເມືອງ." ເວົ້າແນວນັ້ນ ລາວກໍ່ໂດດຄຸບວິງ ແລະ ຂ້າວິງ
ເສຍ.

ໃນທີ່ສຸດ ກໍ່ຍັງເຫຼືອພຽງແຕ່ກະຕ່າຍທີ່ເຝົ້າເບິ່ງເຫດການຢູ່. ບັດນີ້ ສິງກໍ່
ຫຼຽວມາເວົ້າກັບກະຕ່າຍ "ກະຕ່າຍຜູ້ກ້າວ້າງຂວ້າງ! ກິ່ນຫຍັງທີ່ອອກມາຈາກ
ປາກຂອງເຮົາ?"

"ຜູ້ຂ້າຂໍປະທານອະໄພ ຂ້າແດ່ມະຫາລາຊາ," ກະຕ່າຍຕອບ, "ຂ້ານ້ອຍເປັນ
ຫວັດ ແລະດັງກໍ່ຕັນ. ໃຫ້ຂ້ານ້ອຍຂໍກັບເມືອເຮືອນ ເພື່ອພັກຜ່ອນ ຈົນກວ່າໄຂ້
ຫວັດຫາຍດີກ່ອນຈະໄດ້ບໍ? ເມື່ອຫາຍດີແລ້ວ ຂ້ານ້ອຍຈຶ່ງຈະສາມາດໃຊ້ດັງຂອງ
ຂ້ານ້ອຍບອກໄດ້ວ່າ ແມ່ນກິ່ນຫຍັງແທ້ທີ່ອອກມາຈາກປາກຂອງພະອົງ."

ເມື່ອຍິນແນວນັ້ນ ສິງກໍ່ບໍ່ມີທາງເລືອກ ຈຶ່ງປ່ອຍໃຫ້ກະຕ່າຍກັບບ້ານໄປ.
ສ່ວນກະຕ່າຍກໍ່ກັບບ້ານໄປ ແລະບໍ່ຫວນຄືນມາຢູ່ໃກ້ກັບສິງອີກເລີຍ.

ທຸກມື້ນີ້ ໃນປະເທດມຽນມ້າ ຖ້າຄົນໃດຄົນໜຶ່ງລະວັງ ຫຼື ບໍ່ກ້າ ໃນການອອກ
ຄວາມຄິດເຫັນ, ພວກເຂົາຈະເວົ້າວ່າ ລາວເປັນຫວັດ.



ກຳປູເຈຍ

ເຂົ້າຮ່ວມອາຊຽນ: 30 ເມສາ 1999
ນະຄອນຫຼວງ: ພະນົມເປັ້ນ
ປະຊາກອນ: 15 ລ້ານ ຄົນ
ເນື້ອທີ່: 181,035 ກມ^2
ຄວາມໜາແໜ້ນ: 83 ຄົນ/ກມ^2
ອາຍຸປານກາງ: 22.9 ປີ
ສາສະໜາ: ສາສະໜາພຸດ
ພາສາ: ຂະເໝນ
ເສດຖະກິດ: ຄົນສ່ວນຫຼາຍເປັນຊາວນາ ແຕ່ຍັງມີຫຼາຍຄົນເຮັດວຽກຢູ່ໃນບໍລິສັດຕັດຫຍິບ ເຊິ່ງເປັນສິນຄ້າສົ່ງອອກສ່ວນໃຫຍ່. ສ່ວນການທ່ອງທ່ຽວແມ່ນກຳລັງສຳຄັນຂຶ້ນ.
ລາຍໄດ້ຕໍ່ຄົນ: $650 (US)
ລາຍໄດ້ປຽບທຽບຕໍ່ຄົນ: $2,000 (US)
ລະດັບລາຍໄດ້ປຽບທຽບ: 188
ສຳປະສິດຈີນີ: 43



ຮູບນີ້ແຕ້ມປະມານປີ 1865, ໄດ້ສະແດງໃຫ້ເຫັນໝູ່ບ້ານໜຶ່ງໃນຂົງເຂດປະເທດກຳປູເຈຍ, ລາວ ແລະ ຫວຽດ ນາມມາຍັນຈົບກັນ. ຄູ່ຜົວເມຍທີ່ຢູ່ເບື້ອງຂວາມືອາດຈະແມ່ນຄົນກຳປູເຈຍ. ສ່ວນຜູ້ຊາຍທີ່ຢູ່ທາງກາງ ແລະ ມີ ໜວດສີຂາວແມ່ນຫົວໜ້າໝູ່ບ້ານ. ໃນແມ່ນ້ຳເມື່ອກ່ອນມີປາໃຫຍ່ຫຼາຍກວ່າປະຈຸບັນ.

ປະຫວັດສາດ

ປະຈຸບັນ ປະເທດລາວ, ກຳປູເຈຍ ແລະ ໄທ ມີດິນແດນເປັນຂອງໃຜ ລາວ. ແຕ່ເປັນເວລາ 5 ສະຕະວັດ ທີ່ດິນແດນເຫຼົ່ານີ້ເຄີຍເປັນສ່ວນໜຶ່ງ ຂອງອານາຈັກໃຫຍ່ທີ່ຊົງອຳນາດ ນັ້ນຄື ອານາຈັກຂະເໝນ. ອານາຈັກນີ້ ເລີ່ມຕົ້ນຂຶ້ນ ປະມານ ປີ ຄ.ສ. 790 ໂດຍກະສັດໜຸ່ມຊື່ ຈາຍາວາມານ ທີ ll ຜູ້ເຊິ່ງພັກດັນໃຫ້ບັນດາປະເທດນ້ອຍໃຫ້ຮວມຕົວກັນ. ຊ່ວງນັ້ນເອງ ທີ່ ຊາວຂະເໝນສ້າງອົງກໍວັດ ເຊິ່ງຍັງຄົງເປັນສິ່ງປຸກສ້າງທາງສາສະໜາ ອັນຍິ່ງໃຫຍ່ທີ່ສຸດຂອງໂລກໃນປະຈຸບັນ ແລະ ອົງກໍວັດຍັງເປັນແຫ່ງທ່ອງ ທ່ຽວທີ່ມີຊື່ສຽງນຳອີກ. ຕອນອົງກໍວັດສ້າງຂຶ້ນນັ້ນ ມັນເປັນວັດຂອງສາ ສະໜາຮິນດູ. ແຕ່ສາສະໜາພຸດຄ່ອຍໆເຂົ້າມາເປັນສາສະໜາຫຼັກຂອງ ຂົງເຂດນີ້ ໃນທີ່ສຸດ ວັດແຫ່ງນີ້ກໍ່ຖືກນຳໃຊ້ໂດຍຊາວພຸດ.



ງານບຸນຕາມແມ່ຂອງກໍ່ເກີດຂຶ້ນ ປະມານປີ 1865 ຄືກັນ.



Richard Wan, CC-BY-SA 2.0

ຕ໋ງເລສາບ ຢູ່ໃນປະເທດກຳປູ
ເຈຍ. ມັນແມ່ນທະເລສາບທີ່ໃຫຍ່
ທີ່ສຸດໃນເອເຊຍຕາເວັນອອກ
ສ່ຽງໃຕ້. ໃນລະດູແລ້ງ ລະດັບນ້ຳ
ໃນທະເລສາບແມ່ນເລິກພຽງແຕ່
ໜຶ່ງແມັດ; ແຕ່ໃນລະດູຝົນ, ນ້ຳ
ຂອງຈະໄຫຼເຂົ້າຖ້ວມຕ໋ງເລສາບ.
ຕ໋ງເລສາບ ຈະໃຫຍ່ກວ່າເກົ່າເຖິງ
ຫ້າເທົ່າ ແລະ ເລິກເຖິງ10 ແມັດ.
ມີໝູ່ບ້ານນ້ຳຫຼາຍແຫ່ງຖືກສ້າງ
ຂຶ້ນຕາມຝັ່ງແມ່ນ້ຳ. ຊາຍຜູ້ນີ້ກຳ
ລັງພາຍເຮືອເມືອເຮືອນຂອງລາວ
ໃນໝູ່ບ້ານນ້ຳແຫ່ງໜຶ່ງ.

ຕ່ໍມາອຳນາດຂະເໝນກໍ່ລຸດນ້ອຍຖອຍລົງ. ອານາຈັກຂະເໝນຖືກໂຈມ
ຕີໂດຍກອງທັບໃນແຕ່ລະດ້ານ ຈົ່ງເຮັດໃຫ້ຂະເໝນນ້ອຍລົງ ແລະ ອັງກໍ
ວັດກໍ່ຖືກປະເປັນຮ້າງ.


ເປັນເວລາຫຼາຍຮ້ອຍປີ ທີ່ກຳປູເຈຍປະເຊີນກັບຄວາມທຸກຍ້ອນຢູ່ໃນອ້ຽ
ມືຂອງຕ່າງຊາດ ແລະ ຜູ້ປົກຄອງ. ຝຣັ່ງຍຶດກຳປູເຈຍເປັນໜຶ່ງໃນຫົວ
ເມືອງຂຶ້ນ. ຍີ່ປຸ່ນເຂົ້າຍຶດອີກໃນລະຫວ່າງສົງຄາມໂລກຄັ້ງທີ II ຈາກນັ້ນ
ຝຣັ່ງກໍ່ເຂົ້າມາຍຶດອີກເທື່ອໜຶ່ງ. ໃນປີ 1954 ກຳປູເຈຍເປັນອິດສະລະ ແຕ່
ສະຫະລັດອາເມຣິກາກໍ່ໄດ້ຖິ້ມລະເບີດຢ່າງໜັກ ແລະ ໄດ້ຮຸກຮານປະເທດ
ນີ້. ແຕ່ປີ 1969 ເຖິງ 1973 ອາເມຣິກາໄດ້ຖິ້ມລະເບີດຂ້າຊາວເມືອງ
100,000 ຫາ 500,000ຄົນ.

ລັດຖະບານໃໝ່ຂອງກຳປູເຈຍຂຶ້ນມາມີອຳນາດໃນປີ 1976 ພາຍໃຕ້
ການນຳຂອງພະເດັດການ ໂປນປົດ. ພວກເຂົາຕ້ອງການນຳພາປະເທດ
ຊາດກ້າວໜ້າ ແຕ່ພັດບໍ່ຮູ້ວ່າຈະເຮັດແນວໃດ. ນະໂຍບາຍໂຮມນິຄົມຂອງ
ລັດຖະບານໃຊ້ການບໍ່ໄດ້, ໄພອຶດຢາກ ແລະ ພະຍາດແຜ່ລາມໄປທົ່ວໝູ່
ບ້ານຕ່າງໆ. ໂປນປົດ ຢ້ານທຸກຄົນບໍ່ເຫັນດີນຳລາວ. ແມ່ນແຕ່ ທ່ານ ໝໍ,
ຄູອາຈານ ແລະຜູ້ໃດກໍ່ຕາມທີ່ມີການສຶກສາດີ ຈະຖືກເບິ່ງເປັນໄພຄຸກຄາມ
ແລະ ຫຼາຍຄົນໃນຈຳນວນເຫຼົ່ານັ້ນຖືກປະຫານຊີວິດ. ລາວຂ້າແມ່ນກະທັ້ງ
ຄົນທີ່ຊ່ວຍລາວ ເພາະລາວຕ້ອງການຖິ້ມໂທດໃຫ້ຜູ້ໃດຜູ້ໜຶ່ງຕໍ່ກັບນະໂຍ
ບາຍທີ່ຜິດພາດຂອງລາວ. ໃນໄລຍະ 4 ປີ ມີຄົນຢ່າງໜ້ອຍ 2 ລ້ານຄົນ

ອ້ຽກໍວັດ ແມ່ນແຫ່ງທ່ອງທ່ຽວທີ່
ສຳຄັນທີ່ສຸດໃນປະເທດກຳປູ
ເຈຍ. ປະເທດກຳປູເຈຍກຳລັງພັດ
ທະນາສະຖານທີ່ທ່ອງທ່ຽວອື່ນໆ
ໄປເທື່ອລະໜ້ອຍ. ຫາດຊາຍນີ້
ແມ່ນຢູ່ເທິງເກາະກະຕ່າຍ, ໃນ
ອ່າວໄທ ເຊິ່ງໃກ້ກັບທາງໃຕ້ສຸດ
ຂອງກຳປູເຈຍ.



ສັງຫານໝູ່ເລືອດ



Michael Darter, CC-BY-SA 2.5



ຕັ້ງແຕ່ປີ 1975 ຫາ 1979 ປະເທດກຳປູເຈຍແມ່ນຢູ່ພາຍໃຕ້ລະບອບການປົກຄອງທີ່ໂຫດຮ້າຍທາຍ ເຊິ່ງເອີ້ນກັນວ່າ ຂະເໝນແດງ. ພວກເຂົາໄດ້ສັ່ງຫານຄົນຫຼາຍແສນຄົນ. ສ່ວນຄົນອື່ນອີກແມ່ນຕາຍຍ້ອນໄພອຶດຫິວ ເພາະບໍ່ມີອາຫານພໍສຳລັບພວກເຂົາ ຫຼື ຕາຍຍ້ອນພະຍາດ ເພາະຂະເໝນແດງບໍ່ຍອມຮັບການຊ່ວຍເຫຼືອທາງການແພດຈາກທາງນອກ.

ປະມານ 1/5 ຂອງປະຊາກອນທັງໝົດໄດ້ຕາຍພາຍໃຕ້ການປົກຄອງຂອງຂະເໝນແດງ. ຕໍ່ມາ ປະເທດຫວຽດນາມໄດ້ໂຈມຕີກຸ່ມຂະເໝນແດງ ແລະ ໄດ້ຊ່ວຍປະຊາຊົນກຳປູເຈຍຈັດຕັ້ງລັດຖະບານໃໝ່ຂຶ້ນ. ຫໍຫຼັງນີ້ສ້າງຂຶ້ນ ເພື່ອວາງສະແດງຫົວກະໂຫຼກຂອງຜູ້ທີ່ຖືກເຄາະຮ້າຍທັງຫຼາຍ, ທັງເປັນສິ່ງທີ່ເຕືອນເຖິງຄວາມໂຫດຮ້າຍໃນສະໄໝນັ້ນ.

ຕາຍຍ້ອນຖືກປະຫານ, ໄພອຶດຫິວ, ໂລກພະຍາດ ແລະ ເຮັດວຽກໜັກເກີນໄປ. ບໍ່ມີໃຜຮູ້ຈຳນວນຕົວຈິງ.

ໃນປີ 1978 ຫວຽດນາມສົ່ງກອງທັບໄປຢຸດລັດຖະບານອາຊາຍາກອມຂອງໂປນປົດ. ມັນກິນເວລາເຖິງ 15 ປີ ໃນການປັບປ່ຽນໃຫ້ມີລັດຖະບານອັນສະຫງົບສຸກ. ປະຈຸບັນ ກຳປູເຈຍມີຄວາມໝັ້ນຄົງເປັນເວລາຫຼາຍກວ່າ 1 ທົດສະວັດແລ້ວ, ແຕ່ກຳປູເຈຍກໍ່ຍັງກຳລັງດີ້ນຮົນເພື່ອປິ່ນປົວບາດແຜສົງຄາມທີ່ໄດ້ອຸບັດຂຶ້ນເປັນເວລາຫຼາຍສະຕະວັດ.



Mat Connolley, C-BY-SA 2.0

ໝີກາລ່ອາໂມກ ແມ່ນອາຫານທີ່ນິຍົມກິນຂອງກຳປູເຈຍ. ອາຫານນີ້ເຮັດຈາກປາດຸກ ເຊິ່ງໜຶ່ງໃສ່ກະທິໝາກພ້າວ.

ເສດຖະກິດ

ຄົນສ່ວນຫຼາຍໃນກຳປູເຈຍແມ່ນຊາວນາ. ມີຫຼາຍຄົນປະກອບອາຊີບລ້ຽງປາ ຫຼື ຈັບປາໃນແມ່ນ້ຳ ເພື່ອສະໜອງທາດໂປຣຕີນແກ່ການໂພຊະນາການ. ການທ່ອງທ່ຽວກຳລັງເຕີບໃຫຍ່. ຢາງ ແລະ ແຜ່ນແຜ່ເປັນແຫຼ່ງຫາລາຍຮັບທີ່ສຳຄັນອັນໜຶ່ງຈາກຕ່າງປະເທດ.



ອ່ານ ອ່ານ ອ່ານ



ວັດໃຫຍ່ທີ່ສຸດໃນໂລກ

ໃນແມ່ນສຳຄັນກ່ວາເງິນຄຳ. ອ້ງກໍວັດ ຈຶ່ງກາຍມາເປັນວິຫານຂອງສາສະໜາພຸດ.

ອ້ງກໍວັດ ເປັນສິ່ງປຸກສ້າງທາງສາສະໜາທີ່ກ້ວາງໃຫຍ່ທີ່ສຸດໃນໂລກ. ກຳແພງດ້ານນອກມີຄວາມຍາວເຖິງ 3.6 ກິໂລແມັດ.

ຫຼາຍສະຕະວັດຕໍ່ມາ ຫຼັງຈາກອ້ງກໍວັດສ້າງສຳເລັດ, ຂະເໝນກໍ່ສູນເສຍອຳນາດຂອງຕົນ ແລະ ອ້ງກໍວັດ ກໍ່ຖືກລືມໄປ. ອ້ງກໍວັດ ກັບຄືນມາມີຊື່ສຽງຄືນໃໝ່ຫຼັງຈາກທີ່ ເຮັນຣີ ມູຮ໊ອດ (Henri Mouhot), ນັກຜຶກສາສາດ ແລະ ນັກສຳຫຼວດຊາວຝຣັ່ງໄດ້ຂຽນກ່ຽວກັບອ້ງກໍວັດໃນປີ 1863. ທ່ານ ມູຮ໊ອດ ຍັງໄດ້ເດີນທາງເຂົ້າມາລາວ ແລະ ຂຽນໜັງສືກ່ຽວກັບປະເທດລາວອີກດ້ວຍ. ເພິ່ນເສຍຊີວິດດ້ວຍໄຂ້ປ່າ (ໄຂ້ມາລາເຣຍ) ໃນຂະນະທີ່ພັກຢູ່ປະເທດລາວ. ບ່ອນຝັງສົບເພິ່ນແມ່ນຢູ່ແຄມນ້ຳຄານ ແຂວງຫຼວງພະບາງ.



by Markalexander100 CC-BY-SA 3.0

ຮູບຄວັດອີກອັນໜຶ່ງແມ່ນໄດ້ສະແດງໃຫ້ເຫັນວິນຍານຜູ້ພິທັກຮັກສາສີ່ອ້ຽ.

ນິທານກຳປູເຈຍ

ສະດີຂ່ແຕ່ງສາວ



ດົນນານມາແລ້ວ ໃນອານາຈັກກຳປູເຈຍມີຊາຍຄົນໜຶ່ງຕົກໃນຂຸມຮັກກັບຍິງຄົນໜຶ່ງ ດັ່ງນັ້ນ ຊາຍຄົນນັ້ນ ກໍ່ເລີຍເດີນທາງໄປຂໍອະນຸຍາດພໍ່ແມ່ຂອງນາງ ເພື່ອຈະໄດ້ແຕ່ງງານຢູ່ກິນນຳຄົນທີ່ລາວຮັກຊື່ວຟ້າດົນສະຫງ່າຍ.

"ຖ້າຢາກໄດ້ລູກສາວຂອງພວກຂ້ອຍແທ້ ເຈົ້າຕ້ອງໄດ້ຜ່ານການທົດສອບຄວາມອົດທົນກ່ອນ." ພໍ່ແມ່ຂອງຝ່າຍຍິງເວົ້າ. "ເຈົ້າຕ້ອງຖືກມັດແຂນແລ້ວແຊ່ນ້ຳພຽງຄໍ່ສາມມື້ສາມຄືນ. ເຖິງຈະຫນາວແນວໃດເຈົ້າກໍ່ບໍ່ຕ້ອງໄປຝົ່ງໄຟທາງໃດເດັດຂາດ. ຖ້າເຈົ້າຜ່ານການທົດສອບກຳລັງໃຈນີ້ໄດ້ ເຈົ້າມາຈູງແຂນລູກສາວຂອງພວກເຮົາເຂົ້າປະຕູວິວາໄດ້ເລີຍ." ພໍ່ແມ່ຝ່າຍຍິງວ່າແນວນັ້ນແລ້ວ ຊາຍຫນຸ່ມກໍ່ຮັບປາກຮັບຄຳ ສະນັ້ນ ລາວຈຶ່ງຖືກມັດແລ້ວເອົາໄປແຊ່ນ້ຳ.

ຫຼັງຈາກຢືນແຊ່ນ້ຳໃນຫນອງເປັນເວລາສອງມື້ສອງຄືນ ບ້ຽງເອີນຊາຍຫນຸ່ມໄດ້ຫຼຽວເຫັນໄຟໄໝ້ຢູ່ເທິງຍອດພູໄກອອກໄປ. ລາວເມື່ອຍ ແລະ ຫນາວຫຼາຍ ລາວຈຶ່ງຍ່ໍ່ມືຂຶ້ນໄປທາງແປວໄຟທີ່ກຳລັງລຸກໄໝ້. ຂະນະນັ້ນ ພໍ່ແມ່ຂອງຝ່າຍຍິງກໍ່ບ້ຽງເອີນລົງມາຫນອງນ້ຳ

ປານຜີຊຸກມາ ແລະ ທ້າວສອງກໍ່ໄດ້ເຫັນສິ່ງທີ່ຊາຍໜຸ່ມກຳລັງເຮັດຢູ່. ພວກເຂົາຕັດສິນວ່າຊາຍໜຸ່ມກຳລັງພະຍາຍາມຝຶງໄຟຈາກຍອດພູໄກໆ. ຊາຍໜຸ່ມໄດ້ລະເມີດການຕົກລົງ ແລະ ພວກເຂົາກໍ່ປະຕິເສດທີ່ຈະໃຫ້ລູກສາວຕົນແຕ່ງງານນຳ.

ຊາຍໜຸ່ມໃຈຮ້າຍຫຼາຍ ສະນັ້ນ ລາວຈຶ່ງໄປຝ້ອງຜູ້ພິພາກສາ. ຈ່າສານໄດ້ຮຽກຕົວພໍ່ແມ່ຂອງນາງສາວໄປຮັບຟັງ ແລະ ຮັບຄຳຕັດສິນ. ພໍ່ແມ່ຂອງຝ່າຍຍິງຍອມຮັບຈະໄປແຕ່ຍ້ອນເພິ່ນມີເງິນຫຼາຍ ເພິ່ນຈຶ່ງເອົາຂອງຂວັນຫຼາຍອັນຫຼາຍແໜວໄປຕ້ອນຜູ້ພິພາກສາ. ຍ້ອນຊາຍໜຸ່ມເປັນຄົນທຸກບໍ່ມີຫຍັງໃຫ້ ຜູ້ພິພາກສາກໍ່ເວີຍຕັດສິນແບບບໍ່ຍຸດຕິທຳວ່າ: "ທ້າວໜຸ່ມ ເຈົ້າເຮັດຜິດຕໍ່ເງື່ອນໄຂ ຍ້ອນໄດ້ລັກຝຶງໄຟ ສະນັ້ນ ເຈົ້າຈຶ່ງເສຍຄະດີ. ເຈົ້າບໍ່ສາມາດແຕ່ງງານກັບລູກສາວເພິ່ນ ແລ້ວເຈົ້າຍັງຈະຕ້ອງໄດ້ຊົດໃຊ້ຄ່າປັບໃໝ ໂດຍການຈັດງານລ້ຽງໃຫ້ພວກເຮົາທັງໝົດ." ເມື່ອຊາຍໜຸ່ມໄດ້ຍິນຄຳຕັດສິນ ລາວໃຈຮ້າຍ ແລະ ເສຍໃຈຫຼາຍ. ລາວຈຶ່ມວ່າອອກໄປຢ່າງຄຽດຂຶ້ນ. ລະຫວ່າງທາງກັບບ້ານ ລາວແວະໄປຫາຜູ້ພິພາກສາກະຕ່າຍ. "ເປັນຫຍັງເຈົ້າຈຶ່ງໂສກເສົ້າແທ້ນ້ອງຊາຍ?" ຜູ້ພິພາກສາກະຕ່າຍຖາມ. ຊາຍໜຸ່ມເລົ່າເຫດການທັງໝົດໃຫ້ຜູ້ພິພາກສາກະຕ່າຍຟັງ. "ເຈົ້າຈະໄປໃສນ້ອງຊາຍ?" ຜູ້ພິພາກສາກະຕ່າຍຖາມ. "ນ້ອງຈຳຕ້ອງໄປຈັດກຽມງານລ້ຽງ." ຊາຍໜຸ່ມຕອບ. "ໂອ!" ຜູ້ພິພາກສາກະຕ່າຍເວົ້າຂຶ້ນ. "ໄປກຽມງານລ້ຽງເທາະ ແລ້ວກັບມາຮັບເອົາອ້າຍໄປກິນນຳແດ່. ອ້າຍຈະເຮັດໃຫ້ນ້ອງຊະນະຄະດີຖ້ານ້ອງເຮັດຕາມອ້າຍບອກ. ເຮັດແໜວນີ້ເດີນ້ອງ! ບໍ່ຕ້ອງເອົາເກືອໃສ່ແຕ່ງ, ໃຫ້ເອົາເກືອໄວ້ໃນຖ້ວຍຕ່າງຫາກ."



ຊາຍໜຸ່ມດີໃຈຫຼາຍເມື່ອຮູ້ວ່າຜູ້ພິພາກສາກະຕ່າຍຈະຊ່ວຍ. ລາວອອກໄປກຽມງານລ້ຽງແລ້ວກໍ່ເອົາເກືອໃສ່ໃນຖ້ວຍຕ່າງຫາກຕາມທີ່ຜູ້ພິ

ພາກສາກະຕ່າຍບອກ. ຈາກນັ້ນ ລາວກໍ່ມາ ພາຜູ້ພິພາກສາກະຕ່າຍໄປນຳ ເພື່ອເອົາອາ ຫານໄປໃຫ້ຜູ້ພິພາກສາ ແລະພໍ່ແມ່ຂອງຜູ້ ສາວ. ຜູ້ພິພາກສາເຫັນຜູ້ພິພາກສາກະຕ່າຍ ເວີຍຖາມຂຶ້ນວ່າ: "ອ້າຍກະຕ່າຍເອີຍ, ເຫດ ໃດອ້າຍຈຶ່ງມາທີ່ນີ້?" "ອ້າຍມານີ້ ເພື່ອຊ່ວຍ ນ້ອງຊາຍໄຕ່ສວນຄະດີ." ຜູ້ພິພາກສາກະ ຕ່າຍເວົ້າ. "ໂອ," ຜູ້ພິພາກສາເວົ້າ, "ຄັນຊັ້ນ ເປັນຫຍັງບໍ່ມາກິນເຂົ້າກິນນ້ຳນຳກັນ ກ່ອນ?"

ເມື່ອງານວ້ຽງເລີ່ມຕົ້ນຂຶ້ນ ຜູ້ພິພາກສາ ເປັນຜູ້ທຳອິດທີ່ເລີ່ມຕົ້ນກິນອາຫານ. ລາວ ຊົດນ້ຳແກ່ງຈົນເຕັມຄຳ ແລ້ວເວົ້າອອກ ມາວ່າ. "ເປັນຫຍັງແກ່ງຈຶ່ງຈາງແທ້? ຜູ້ພິ ພາກສາກະຕ່າຍຝ້າວຕອບວ່າ; "ໄຟໃຫ້ນ້ຳ ໃກ້ຍັງເຮັດໃຫ້ທ້າວໜຸ່ມອຸ່ນໄດ້ ເກືອທີ່ເອົາ ໄວ້ບ່ອນອື່ນຈະບໍ່ເຮັດໃຫ້ແກ່ງມີລົດຊາດໄດ້ ແນວໃດ?" ຜູ້ພິພາກສາໜ້າແດງ ແລະ ປາກບໍ່ອອກ. ຄະດີໄດ້ຖືກພິກປີ້ນ ເປັນອັນວ່າ ຊາຍໜຸ່ມເວີຍຖືກປະກາດໃຫ້ເປັນຜູ້ຊະນະ ຄະດີ ແລະ ໄດ້ແຕ່ງງານກັບລູກສາວຂອງ ສອງຜົວເມຍສົມໃຈນະບັດນັ້ນ.

ກຸ່ມປະເທດ ອາຊຽນ

ຂຽນ: ລຸງຊາຊ່າ, ແຕ້ມ: ເຊັ່ງໄຊ ກູ່ຊົ່ງ ແລະ ກົ່ງຊົ່ວ ເຊັ່ງລີ, ແປ: ໄຜ່ຫວານ, ໂຮຊັນນາ ບໍລິການແປພາສາ.
ກວດແກ້: ບັນນາທິການ ອ້າຍໜູນ້ອຍ, ຈັດພິມໂດຍ: ສຳນັກພິມ ອ້າຍຫນູນ້ອຍ, ຫຼວງພະບາງ.
ທະບຽນອະນຸຍາດ: ລທບ 370/ພຈ08112011. ພິມຄັ້ງທີ1
ພິມທີ່ ໂຮງພິມ ສີສະຫວາດ, ວຽງຈັນ, 2011. ຂະໜາດ 19×26ຊມ, ຈຳນວນ 6000 ຫົວ

ສະຫງວນລິຂະສິດປົດຂຽນ © 2012 ລຸງຊາຊ່າ, ສະຫງວນລິຂະສິດຮູບແຕ້ມ © 2012 ອ້າຍໜູນ້ອຍ

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ
1. ອາຊຽນ. 2. ເອເຊຍຕາເວັນອອກສ່ຽງໃຕ້. I. ເຊັ່ງໄຊ ກູ່ຊົ່ງ [ແລະຄົນອື່ນໆ, ຜູ້ແຕ້ມ. II. ຊື່ເລື່ອງ
959--dc21
ISBN 978-9932-03-020-0

ບາງຮູບພາບໃນປຶ້ມຫົວນີ້ ໄດ້ມາຈາກ www.wikipedia.com. ບາງຮູບເຂົ້າເຈົ້າບໍ່ຖືລິຂະສິດ ບາງຮູບກໍ່ອະນຸຍາດໃຫ້ໃຊ້ຕາມລະ ບຽບຂອງອົງການ Creative Commons. ລາຍລະອຽດທ່ານສາມາດເຂົ້າຊົມ http://creativecommons.org/licenses/bysa/3.0/ (ຫຼື 2.5 ຫຼື 2.0, ຫຼື ຕາມທີ່ໄດ້ຂຽນໄວ້ແຕ່ລະຮູບ). ພວກເຮົາຂໍຂອບໃຈນຳບັນດານັກຖ່າຍຮູບທັງຫຼາຍ ທີ່ເຮັດວຽກ ຢ່າງໜັກ ເພື່ອໃຫ້ຜູ້ຄົນໄດ້ນຳໃຊ້ຢ່າງກວ້າງຂວາງ. ໜ້າປົກ: ຄວາຍ: PaulRudd CC-BY-SA 3.0; ນົກຟ້ອນ: Frank Wouters, CC-BY-SA 2.0; ປະຕູໄຊ: Slug78 CC-BY-SA 2.0; ສຸເລ່ົາ: Azreey CC-BY-SA 3.0

The Countries of ASEAN, with non-fiction text and story selection by Sasha Alyson, Story illustrations by Sengsay Khousong and Kongsoua Sengli. Published by Big Brother Mouse, Luang Prabang, Lao PDR.

ເອກະສານອ້າງອີງ, Major sources: The New York Times and International Herald Tribune, many editions; United Nations Development Program (website); Jacaranda Primary Atlas; Wikipedia; Philips's Junior School Atlas; Krakatoa: The Day the World Exploded, by Simon Winchester; The Story of Religion, by Betsy and Guilio Maestro; A Pictorial Journey on the Old Mekong, White Lotus Press; Encyclopedia Britannica; The World Almanac. Michael Linden provided valuable help with story research. Thank you!



ອິທິຮຽນໃຫ້ໄດ້ຫຼາຍຈາກປຶ້ມຫໍ່ອນີ້!

ຫຼັງຈາກທ່ານໄດ້ອ່ານປຶ້ມຫໍ່ອນີ້ ທ່ານຈະໄດ້ຮຽນຫຼາຍຂຶ້ນ ຖ້າທ່ານຫາກຄິດກ່ຽວກັບມັນ. ທ່ານໄດ້ຮຽນຫຍັງແດ່? ເຫຼົ່ານີ້ແມ່ນຄຳຖາມທີ່ຈະຊ່ວຍ:


★ ປະເທດໃດມີຄົນຫຼາຍທີ່ສຸດ? ປະເທດໃດມີຄົນໜ້ອຍທີ່ສຸດ? ທ່ານສາມາດຊອກຂໍ້ມູນໄດ້ຢ່າງ ງ່າຍດາຍ ເພາະມັນມີຢູ່ໃນຫ້ອງສະຖິຕິຂອງແຕ່ລະປະເທດ.




Christophe Meneboeuf CC-BY-SA 3.0

★ ປະເທດໃດແດ່ມີຄ່າສະເລ່ຍອາຍຸຄົນສູງທີ່ສຸດ? ປະເທດໃດແດ່ມີຄ່າສະເລ່ຍອາຍຸຄົນຕ່ຳທີ່ສຸດ? ທ່ານສາມາດຄິດເຖິງປັດໄຈໃດແດ່ທີ່ຈະເປັນຜົນຕໍ່ກັບຄ່າສະເລ່ຍອາຍຸຄົນຂອງປະເທດ?

★ ປະເທດໃດແດ່ມີສາສະໜາດຽວ? ປະເທດໃດແດ່ມີຫຼາຍສາສະໜາ? ທ່ານຄິດວ່າເປັນຫຍັງພວກເຂົາຈຶ່ງບໍ່ມີສາສະໜາດຽວ?



★ ສຳປະສິດຈີນີ ແມ່ນສະຖິຕິທີ່ສຳຄັນ ແຕ່ມັນເຂົ້າໃຈຍາກກວ່າສະຖິຕິພົນລະເມືອງ ຫຼື ຂະໜາດ. ຕົວເລກຈີນີຊ່ວຍວັດແທກເສັ້ນລະຫວ່າງຄົນຮັ່ງທີ່ສຸດ ແລະ ຄົນທຸກທີ່ສຸດໃນປະເທດ. ຖ້າຕົວເລກຈີນີຕ່ຳແມ່ນດີ ເພາະມັນໝາຍຄວາມວ່າຄົນມີຄວາມສະເໝີພາບກັນຫຼາຍ. ແຕ່ຖ້າຕົວເລກຈີນີສູງ ມັນໝາຍຄວາມວ່າ ຄົນຮັ່ງມີ ມີໜ້ອຍ ແລະ ຄົນຮັ່ງເທົ່ານັ້ນທີ່ມີຄວາມມັ່ງຄັ່ງສົມບູນ. ທ່ານສາມາດອ່ານເພີ່ມເຕີມກ່ຽວກັບເລື່ອງນີ້ຢູ່ໜ້າທີ 2. ປະເທດໃດມີຕົວເລກຈີນີຕ່ຳທີ່ສຸດ?



★ ຊອກເບິ່ງຮູບພາບອາຫານຈາກບາງປະເທດ. ອາຫານໃດແດ່ດີທີ່ສຸດສຳລັບທ່ານ? ທ່ານສາມາດຄິວມັນຢູ່ເຮືອນຂອງທ່ານໄດ້ບໍ?

★ ບາງປະເທດໃນກຸ່ມອາຊຽນແມ່ນຮັ່ງມີ, ບາງປະເທດທຸກຍາກ ແລະ ບາງປະເທດແມ່ນທຳມະດາ. ມັນແມ່ນປັດໄຈໃດທີ່ເຮັດໃຫ້ມີຄວາມແຕກຕ່າງກັນ ລະຫວ່າງປະເທດທີ່ຮັ່ງມີ ແລະ ບໍ່ຮັ່ງມີ?


★ ເລື່ອງໃດເປັນເລື່ອງທີ່ທ່ານມັກໃນປຶ້ມຫໍ່ອນີ້? ເປັນຫຍັງທ່ານຈຶ່ງມັກມັນ?

★ ມີເລື່ອງໃດທີ່ທ່ານບໍ່ມັກ? ທ່ານສາມາດປ່ຽນໃຫ້ມັນມ່ວນຂຶ້ນໄດ້ບໍ?

★ ປະເທດໃດໃນກຸ່ມອາຊຽນທີ່ບໍ່ເຄີຍໄດ້ຕົກເປັນຫົວເມືອງຂຶ້ນຂອງຕ່າງປະເທດ? ປະເທດໃດໃນກຸ່ມອາຊຽນທີ່ມີຜົນກະທົບຫຼາຍໃນປະຈຸບັນ ໂດຍວັດທະນະທຳຂອງຕ່າງປະເທດທີ່ເຄີຍປົກຄອງພວກເຂົາ?



★ ປະເທດໃດທີ່ທ່ານຢາກໄປທ່ອງທ່ຽວຫຼາຍທີ່ສຸດ? ເປັນຫຍັງ? ທ່ານຈະໄປໃສກ່ອນ ຖ້າທ່ານຫາກໄປທ່ອງທ່ຽວປະເທດນັ້ນ?



★ ສົມມຸດວ່າທ່ານອາໄສຢູ່ໃນຕົວເມືອງໃຫຍ່ ແລະ ມີຕຶກສູງ ຄືຢູ່ໃນເມືອງມະນີລາ (ໜ້າ 15) ຫຼື ສິງກະໂປ (ໜ້າ 46-47). ສິ່ງໃດອາດເຮັດໃຫ້ດີກວ່າ ແລະ ງ່າຍກວ່າ? ສິ່ງໃດອາດມີຄວາມຫຍຸ້ງຍາກ ຫຼື ບໍ່ດີພໍ?

★ ຂຽນ 5 ຢ່າງທີ່ໜ້າສົນໃຈກ່ຽວກັບສິ່ງທີ່ທ່ານໄດ້ຮຽນມາ ເພື່ອບອກຕໍ່ໃຫ້ຄົນອື່ນຮູ້ນຳ.







ກຸ່ມປະເທດອາຊຽນ

ທ່ານຮູ້ບໍ...

ເຄີ່ງສະຕະວັດຜ່ານມາ ສິງກະໂປ ເປັນປະເທດທີ່ທຸກຍາກ. ແຕ່ປະຈຸບັນ ມັນກາຍເປັນປະເທດໜຶ່ງ ທີ່ຮັ່ງມີທີ່ສຸດຂອງໂລກ.

ມີ 3 ປະເທດຮ່ວມຢູ່ເກາະບໍນີໂອ. ໃນອະດີດ ຄົນພື້ນເມືອງໃນເກາະນີ້ໄດ້ສະສົມຫົວສັດຕູຂອງພວກເຂົາ.

ໃນປະເທດບຮູໄນ ຕົວເມືອງນ້ອຍແມ່ນສ້າງຂຶ້ນເທິງໜ້ານ້ຳ ເຊິ່ງແຕ່ລະຕຶກແມ່ນງອຍຢູ່ເທິງເສົາ.

ຟີລິບປິນ ມີຜູ້ນຳ 2 ທ່ານທີ່ຕໍ່ສູ້ ເພື່ອຄວາມເປັນເອກະລາດຂອງປະເທດ ເຊິ່ງແຕ່ລະທ່ານປະກາດເອກະລາດຫ່າງກັນເຖິງ 375 ປີ.

ດອກໄມ້ໃຫຍ່ທີ່ສຸດຂອງໂລກໄດ້ເກີດຂຶ້ນຢູ່ໃນເອເຊຍຕາເວັນອອກສ່ຽງໃຕ້.

ພູເຂົາໄຟລະເບີດຢູ່ອິນໂດເນເຊຍໃນປີ 1883, ຄົນຢູ່ຫ່າງໄກອອກໄປ 3,500 ກມ ໃນ ອິດສະຕຣາລີ ສາມາດໄດ້ຍິນສຽງໄດ້.

ມາຮຽນຮູ້ກ່ຽວກັບເພື່ອນບ້ານ ແລະ ໝູ່ເພື່ອນໃນອາຊຽນກັນເທາະ!








ອ້າຍໜູນ້ອຍ ຈັດພິມປຶ້ມ ແລະ ແຈກຍາຍປຶ້ມອ່ານສູ່ໝູ່ບ້ານຕ່າງໆ ບ່ອນທີ່ບໍ່ເຄີຍມີປຶ້ມອ່ານມາກ່ອນ. ທ່ານສາມາດຊອກຫາມາອ່ານໄດ້.

Big Brother Mouse gets books into Lao villages that never had books before. You can help! Our website tells more.

www.BigBrotherMouse.com



ອ້າຍໜູນ້ອຍ 45.000 **0183 ISBN 978-9932-03-020-0**